| ເພັງ | ໜ້າ |
|---|---|


ກ

ກັບມາຮັກກັນໃໝ່ເຖີດທີ່ຮັກ 221
ກູຫຼາບປາກຊັນ 35
ກູຫຼາບນາຊາຍທອງ 62
ກູຫຼາບແທນກາຍ 146
ແກ້ວໃຈ 83
ກ້ຽວສາວງື່ມ 154

ຂ

ຂ້າຜິດເຣື່ອງໃດ 179
ຂາດນາງ 68
ຂໍຄືນຄຳສັນຍາ 22
ຂໍເຊັດນ້ຳຕານ້ອງ 112
ຂໍພຽງຮ່າງຝັນ 78
ແຂ້ນ້ອຍ 173

ຄ

ຄະນຶງຮັກ 19
ຄະຕິຕ່າງກັນ 113
ຄິດເຖິງ 127
ຄິດເຖິງທີ່ຮັກ 106
ຄຶດຮອດວຽງຈັນ 160
ຄຶດເຖິງທ່າເດື່ອ 121
ຄຶດຮອດຄວາມຮັກ 203
ຄືນນັ້ນ 116
ຄົງເຊໂດນທີ່ຮັກ 219
ຄົນທີ່ເຂົາຄອຍ 109
ແຄ້ນ 101
ແຄມຝັ່ງເຊວັນ 67

| ເພັງ | ໜ້າ |
|---|---|


**ງ**

ງານເພາະເງິນ 28

**ຈ**

ຈາກພູງກາຍ 135
ຈາກພູງດວງໃຈ 141
ຈາກນ້ອງປີໃໝ່ 105
ຈາກອຽງຈັນ 139

**ສ**

ສວັນສລາຍ 41
ສລັກຈິດ 82
ສັນຍາໄດ້ບໍ່ ? 110
ສາວງາມສວັນ 90
ສາວອຸເທນ 192
ສາວສີຊຽງໃໝ່ 159
ສາບຮັກຊາຍ 94
ສາມໝື່ນເມືອງເຟືອງ 191
໓໐ປີແຫ່ງຄວາມຫຼັງ 39
ສີທັນດອນ 51
ສີ້ນສຸຣິຍາ 40
ສີ້ນສຸດກັນທີ 163
ສື່ຮັກຈາກສາຍຕາ 61
ສຸກສັນວັນເກີດ 27
ສຸກສັນວັນປີໃໝ່ 205
ສຸດທີ່ຮັກ 106
ສຸດທີ່ຮັກ 114
ສຸດທີ່ຮັກ 168
ສຸດໄຝ່ຄວ້າ 132
ສອງຝັ່ງຂອງ 99
ສອງຝັ່ງນ້ຳຄານ 119

| ເພັງ | ໜ້າ |
|---|---|
| ແສບຊວງ | 65 |
| ແສງເດືອນເຕືອນໃຫ້ເສົ້າ | 164 |
| ເສັຽງດາຍຮັກ | 208 |
| ເສັຽງແຮງຮັກ | 24 |
| ສຽງຄອນຈາກຊາຍຈີນ | 59 |
| ສຽງສັ່ງຄືນຊໍ້າ | 74 |
| ສິນຣິດສິນຮັກ | 77 |
| **ຊ** | |
| ຊາຕາອາພັບ | 132 |
| ຊາຍໃຈຊື່ | 76 |
| ຊາຍເມືອງສວັນ | 102 |
| ເຊໂປນລຳລຶກ | 126 |
| ເຊື່ອອ້າຍດີກວ່າ | 25 |
| **ຍ** | |
| ຍັງຕາມມາ | 170 |
| ຍັງຮັກນ້ອງຢູ່ | 223 |
| ຍາມຮັກຍາມຮ້າງ | 79 |
| ຍິ້ມ | 193 |
| ຍອດນາຣີແຫ່ງສີເມືອງ | 198 |
| ຍອດຮັກແກ່ນໃຈ | 103 |
| **ດ** | |
| ດັ່ງນົກນ້ອຍ | 183 |
| ດົນໆເຫັນກັນ | 45 |
| ດ້ອຍສັກຮັກສິ້ນ | 89 |
| **ຕ** | |
| ຕີບ່ອນໃດ ? | 206 |
| ຕ້ອງການແຟນ | 181 |
| **ຖ** | |
| ຖ້າມີທີ່ຮັກ | 37 |

| ເພັງ | ໜ້າ |
|---|---|

## ທ


ທັມມະຊາດພູເຂົາຄວາຍ 201
ທີ່ສອນດອກໄມ້ 93
ທີ່ຮັກຈົ່ງລືມກັນ 97


## ນ


ນາງ 165
ນ້ອງຂໍຫຼີກທາງ 161
ນ້ອງຄືທຸກສິ່ງ 140
ນ້ອຍໃຈ 50
ນຶ່ງອ້າຍຊາຍດຽວ 13
ນຶ່ງໃນຫົວໃຈ 151
ນຶ່ງໃນອານາ 169
ນ້ຳໃຈລາວ 220
ນ້ຳຕົກເຊລະບຳ 30
ນ້ຳຕົກຄອນພີ່ຜີ 174
ນ້ຳລົ້ນຝັ່ງ 120
ໜ້າໜາວສາວຈົ່ມ 48
ໜານຊີວິດ 152
ໜາວ 138
ໜາວ 180


## ບ


ບ້ານນາຜາສຸກ 144
ບຸ່ງພ້າວສາວງາມ 202
ບໍ່ເຄີຍ 70
ບໍ່ຮັກຢ່ານາ 55
ບໍ່ເຄີຍຮັກໃຜເທົ່ານາງ 187
ບໍ່ເຊື່ອອີກແລ້ວ 197
ບໍ່ລືມວຽງຈັນ 47
ບອກຮັກຈັກຄຳ 88

| ເພັງ | ໜ້າ |
|---|---|


| | |
|---|---|
| ບົດເພັງຊີວິດ | 33 |
| **ປ** | |
| ປະທີບແຫ່ງທັມ | 14 |
| ປາແດກກິ້ນໄທ | 64 |
| ປຣານີຂ້າດ້ອຍ | 179 |
| ປີໃໝ່ແລ້ວ | 118 |
| ໄປຄ້າຍນາ | 215 |
| ໄປໃສນາ ? | 214 |
| ໄປເຖີດນ້ອງຈະຄອຍ | 91 |
| ເປັນມິດກັນດີກວ່າ | 129 |
| **ຜ** | |
| ຜູ້ຊາຍແສນລອງ | 200 |
| ຜິດຫວັງ | 44 |
| **ຝ** | |
| ຝາກເພັງແທນໃຈ | 133 |
| ໄຝ່ຮັກ | 95 |
| **ພ** | |
| ພາບນ້ອຍແທນນາງ | 87 |
| ພາບຮັກໃນດວງຕາ | 36 |
| ເພາະຄວາມຈົນ | 81 |
| ເພລາຣາຕຣີ | 43 |
| ແພພົບ | 56 |
| ເພື່ອກັນລືມ | 124 |
| ເພື່ອນ້ອງເມື່ອຊ້ຳ | 80 |
| ພຽງນ້ອງຈາກ | 117 |
| ເພັດໃນຕົມ | 29 |
| ພອນອວຍ | 26 |
| ພວງມະລັຍນ້ຳໃຈ | 194 |

| ເພັງ | ໜ້າ |
|---|---|
| **ຟ** | |
| ຟ້າລືມດິນ | 32 |
| ຟ້າຫຼືຈະກັ້ນ | 16 |
| ຟ້າເທົ່ານັ້ນ | 190 |
| **ມ** | |
| ມາຊູ ໂປເຕໂຕ | 71 |
| ມາເຖີດເພື່ອນ | 130 |
| ມີຟ້າເທົ່ານັ້ນ | 190 |
| ມີແຟນຫຼືບໍ່ ? | 196 |
| ມົນຮັກສາວລ່ອງແຈ້ງ | 210 |
| ແມ່ຮ້າງລຳພັນ | 125 |
| ແມງຜູ່ | 175 |
| ເມື່ອສິ້ນຄວັນທານອກ | 122 |
| ເມືອງຊຳລຳລຶກ | 131 |
| ເໝືອນຄົນມີກັນ | 213 |
| ເໝືອນຄົນໄຮ້ຄ່າ | 185 |
| **ຢ** | |
| ຢ່າກຽດກັນ | 58 |
| ຢ່າກອນ | 20 |
| ຢ່າບັງຄັບໃຈ | 52 |
| ຢ່າຫວງຢ່າຫ່ວງ | 85 |
| ຢ່າຫ້າມໃຈ | 98 |
| ຢ່ານ້ອຍໃຈ | 104 |
| ຢ່າເຊື່ອຜູ້ຊາຍ | 142 |
| ຢ່າຂ້າຫົວໃຈ | 184 |
| ຢ່າອອດ | 188 |
| ຢາກລອງຮັກ | 216 |
| ຢາກຝາກຄວາມຮັກ | 69 |
| ຢາກຝາກຮັກ | 136 |

| ເພັງ | ໜ້າ |
|---|---|
| ຢາກບອກຮັກ | 137 |
| ຢາກພົບຄັ້ງສຸດທ້າຍ | 156 |
| ຢາກໃຫ້ໂລກນີ້ | 128 |
| ຢາກຮັກສາວເມືອງຫຼວງ | 199 |
| ຢາດນ້ຳຝົນຢືດນ້ຳຕາ | 189 |
| ຢາດນ້ຳທານຮັກ | 18 |
| ຢູ່ໄປເຮັດຫຼັງ ? | 96 |
| ຢອກບໍ່ໄດ້ເບາະ ? | 21 |
| **ຣ** | |
| ຣາຕຣີພາຝັນ | 166 |
| ຣາຕຣີໄຮ້ຈັນ | 15 |
| **ລ** | |
| ລາທີ | 42 |
| ລຳອິງກັນກ່ອນ | 204 |
| ລືມກັນເຖີດ | 108 |
| ລືມນ້ອງບໍ່ໄດ້ | 75 |
| ລົມໜາວສາວຈີນ | 100 |
| ລືມເສັ່ງເຖີດ | 53 |
| ລືມເສັ່ງເຖີດ | 149 |
| ຫຼົງຮັກເມັ່ງເຂົາ | 73 |
| **ວ** | |
| ວິມານວຽງທອງ | 147 |
| ວິມານສລາຍ | 176 |
| ວິວານ້ຳຕາ | 177 |
| ວິເສດປານໃດ | 76 |
| ວຽງຈັນເມືອງງາມ | 17 |
| ວຽງໃນຝັນ | 145 |
| ວອນຢ່າຊ້ຳ | 207 |

| ເພັງ | ໜ້າ |
|---|---|

ຫ

ຫາກນ້ອງມີໃໝ່ 11
ຫາກອ້າຍມີໃໝ່ 12
ຫາກແຫ່ງນັ້ນມີຈອນໃຈ 186
ຫາດຊາຍແດນງາມ 60
ຫາດຊາຍສວັນ 178
ຫ່າງຮັກ 54
ຫີນເທີບແດນງາມ 148
ເຫັນໃຈສາວແມ່ຮ້າງ 222
ເຫັນພຸ່ງສາຍຄາ 218
ຫົວໃຈຕາຍດ້ານ 182
ຫົວໃຈຊີຂາດ 66
ຫອມເຖິງຖິ່ນ 195
ຫົວໃຈໄຮ້ຄ່າ 84
ຫວງເພາະຮັກ 57

ອ

ອະດີດຮັກ 49
ອາລັຍຮັກ 143
ອາທິດອັສດົງ 150
ອ້າຍມາທີຫຼັງ 153
ອ້າຍຍັງເຝົ້າຄອຍ 157
ອ້າຍຍັງເປັນໂສດ 134
ອ້າຍຍັງຮັກນາງ 38
ອ້າຍຍອມຫຼີກທາງ 209
ອ້າຍອາດມາຊ້າໄປ 211
ອີກພຽງຄັ້ງດຽວ 34
ອີກນາທີດຽວ 63
ເອົາຜູ້ຊາຍຖິ້ມລົງນ້ຳຂອງ 92
ໂອ່ງໂຕ່ງ 31

| ເພັງ | ໜ້າ |
|---|---|

## ຣ


| | |
|---|---|
| ຮັກ | 167 |
| ຮັກບໍ່ລືມ | 86 |
| ຮັກນຶ່ງໃຈດຽວ | 162 |
| ຮັກນ້ອງຄົນດຽວ | 107 |
| ຮັກແອບ | 217 |
| ຮັກເຮັດຫຼັງ ? | 111 |
| ຮັກຄົນສຸດທ້າຍ | 123 |
| ຮັກຄົນທີ່ເທົ່າໃດ | 158 |
| ຮັກສລາຍ | 171 |
| ຮັກເຈົ້າດອກຈຶ່ງປອກເຈົ້າຫຼິ້ນ | 172 |
| ຮັກແທ້ຢູ່ໃສ | 46 |
| ເຮືອຮັກທ່າຫົວໃຈ | 115 |
| ຮ້ອນໃນ | 72 |

# ຫາກນ້ອງມີໃໝ່

ຫາກນ້ອງມີ ໃໝ່ແລ້ວ
ຢ່າຫາແນວ ມາຍຸ້ງ
ເອົາຄວາມຮັກກັບໄປ ຢ່າອຸ້ມອາຍໝາຍມຸ້ງ
ຄືນທີ່ອກຸງ ຈະມິນຫາ

ຫາກນ້ອງມີ ໃໝ່ຊ້ອນ
ຢ່າພ້ຳອອນ ດີກວ່າ
ຢ່າມາລໍ້ຕໍ່ເຕີມ ຢ່າແກ້ງເສີມຂາຍໜ້າ
ຢ່າວຽນມາ ຂວາງຂັດໃຈ

ໜີໄປໃຫ້ພົ້ນ ໃຫ້ພົ້ນສາຍຕາ
ຮີບໄປຫາ ຄົນຮັກໃໝ່
ຊາຍດຽວບໍ່ພໍ ຫາອີກເສື້ອຍໄປ
ກວ່າຊີບຈະອາຍ ຄົງໄດ້ເປັນພັນ

ຫາກນ້ອງເອົາ ອີກຄົນ
ປະນຶ່ງຄົນ ເສັ່ງນັ້ນ
ລືມຄວາມຮັກໜ້າຊັ່ງ ລືມຄວາມຫຼັງໄວ້ນັ້ນ
ແຍກທາງກັນ ເສັ່ງເຖິດເອີຍ.

# ຫາກອ້າຍມີໃໝ່

ຫາກອ້າຍມີ ໃໝ່ແລ້ວ
ຢ່າຫາແນວ ມາຍຸ້ງ
ເອົາຄວາມຮັກກັບໄປ ຢ່າອຸ້ມອາຍໝາຍມຸ້ງ
ຄືນທື່ອກຸງ ຈະມີນຫາ

ຫາກອ້າຍມີ ໃໝ່ຊ້ອນ
ຢ່າພ້ຳອອນ ດີກວ່າ
ຢ່າມາລໍ້ຕໍ່ເຕີມ ຢ່າແກ້ງເສີມຂາຍໜ້າ
ຢ່າວຽນມາ ຂວາງຂັດໃຈ

ໜີໄປໃຫ້ພົ້ນ ໃຫ້ພົ້ນສາຍຕາ
ຮີບໄປຫາ ຄົນຮັກໃໝ່
ຍິງດຽວບໍ່ພໍ ຫາອີກເສື້ອຍໄປ
ກວ່າຊີບຈະອາຍ ຄົງໄດ້ເປັນພັນ

ຫາກອ້າຍເອົາ ອີກຄົນ
ປະນຶ່ງຄົນ ເສັ່ງນັ້ນ
ລືມຄວາມຮັກໜ້າຊັ້ງ ລືມຄວາມຫຼັງໄວ້ນັ້ນ
ແຍກທາງກັນ ເສັ່ງເກີດເອີຍ.

# ໗
# ນ້ອງອ້າຍຊາຍດຽວ

ຊາຍອື່ນໝື່ນແສນ ມາຈາກເມືອງແຖນ
ເມືອງແມນ ແດນສວັນ
ບໍ່ເຄີຍ ບໍ່ເຄີຍຈະຄິດຜູກພັນ
ບໍ່ຢາກໄດ້ເປັນມິ່ງຂວັນ ກ່ອນຂວັນແມ່ນຍາມນິທາ

ຊາຍນຶ່ງເທົ່ານີ້ ເປັນຍອດຊາຕຣີ
ເປັນທີ່ ປາຖນາ
ບໍ່ລືມ ບໍ່ລືມພໍສ້ຽວເວລາ
ຢາກຢູ່ເປັນຄູ່ສະເນຫາ ໄກຕາຄິງໝອງຣີດີ

ດາວເດືອນເກື່ອນຟ້າ ແຜ່ນພະສຸທາ
ເງິນທອງ ເຂົ້າຂອງມາກມີ
ບໍ່ໄດ້ກະຕຸກ ຕູ້ມເຕືອນລືມອ້າຍຈັກດີ້
ຍິ່ງຮັກຍິ່ງຫວງເຕັມທີ່ ຢາກໃຫ້ມາຣີມີນ້ອງຄົນດຽວ

ຊາຍນຶ່ງເທົ່ານັ້ນ ທີ່ນ້ອງໄຝ່ຝັນ
ຄືນວັນ ຜູ້ດຽວ
ຫຼັບຕາ ມືນຕາຢາກເຫັນຊາຍດຽວ
ບໍ່ຢາກໃຫ້ໃຜມາຫຼຽວ ກິນກຽວກ້ຽວກຽວອ້າຍເລີຍ.

# ປະທີບແຫ່ງທົ່ມ

ອະຣຸໂນທັຍ ຟ້າສີທອງ ສ່ອງພະສຸທາ
ໝາຍສັນຍາຣັກ ປະຈັກແຈ້ງແສງສຸຣິຍາ
ແອ້ວລະຄັງ ຫອນລະລ່ອງທົ່ວທ້ອງຟ້າ
ເປັນສັນຍາໃຫ້ເຮົາຮູ້ແຈ້ງ ວ່າແສງແຫ່ງບຸນ

ພຸທສາ ຊະນິກະຊົນ ທົ່ວຈັນບຸຣີ
ຈິດຜ່ອງສີ ຕັ້ງໃຈໃສ່ບາດດ້ວຍໃຈເກື້ອກຸນ
ສ້າງແຕ່ບຸນ ສິນກິນທານແກ່ສັງຄະເຈົ້າ
ເປັນຮີດຄອງປະເພນີເຮົາ ຕັ້ງແຕ່ເດີມມາ

ພໍ ເຖິງເດືອນຫົກແລ້ວ
ປະຊາເມືອງແກ້ວ ຈູດທູບທຽນບູຊາ
ບຸນ ວິສາຄະບູຊາ
ຮີດຄອງນິຍາ ຈິດເລື່ອງລາຈິງເຫຼືອ

ສິ້ນອະສົນ ພັນສາສູນ ປະວໍຣະນາ
ວ່າປະເພນີ ທັມນຽມລາວນີ້ ມີບຸນຊ່ວງເຮືອ
ເລີ້ມຈະໜາວ ລາວເຮົາຕ້ອງສລອງບໍ່ເບື່ອ
ຄອຍເຊື້ອຈຸນບຸນທາດຫຼວງເດັ່ນເປັນນິ່ງເມືອງລາວເອີຍ

# ຣາຕຣີໄຮ້ຈັນ

ຣາຕຣີໄຮ້ ຈັນກະຈ່າງ
ດາວເລືອນລາງ ຈາກເມືອງຟ້າ
ລົມເຢັນໆ ພັດຜ່ານມາ
ປ່ງອອຸຣາ ໜາວຈົນສັ່ນສາຍ

ຄົນເຄີຍຊິດ ເຄີຍຄຽງຂ້າງ
ມາເລືອນລາງ ຫ່າງໄປໃສ ?
ດວງໃຈຄອນ ແສນປອດໃຈ
ຢູ່ແຫ່ງໃດ ເຈົ້າຈຶ່ງບໍ່ມາ ?

ຄອຍໆໆ ຕັ້ງຕາຄອຍ
ໃຈລອຍໆ ຫຼົງຄອຍອ່າ
ດວງໃຈເຮົາ ຄົງມາຫາ
ອະນິຈາ ບໍ່ເຫັນແມ່ນເງົາ

ຄອຍໆອ້າຍ ຊາຍເມີນໜ້າ
ໃຈເວ່ອາ ຈິດງຽບເຫງົາ
ຣາຕຣີແຮມ ໄຮ້ໝູ່ດາວ
ປ່ງບອົກເຮົາ ໄຮ້ຄົນແອບອີງ.

# ຟ້າຫຼືຈະກັ້ນ

ຄວາມຮັກກຳເນີດ ເກີດມາຈາກໃສ ?
ມີໃຜຕອບຄຳນີ້ໄດ້ ? ເປັນດ້ວຍເຫດໃດຄວາມຮັກນີ້ໜາ
ເກີດຈາກຫົວໃຈ ຫຼືຈະເປັນໄປດ້ວຍສາຍຕາ ?
ຫຼາຍຄົນກ່າວຂານກັນວ່າ ຄວາມຮັກມີຄ່າກວ່າສິ່ງໃດ

ຄວາມຮັກເລີ້ມກໍ່ ຕໍ່ເປັນບັນຫາ
ພູຜາກີດກັນຂວາງໜ້າ ຜືນພະສຸທາ ຫຼືຈະກັ້ນໄຫວ
ກ່ອນຈະຮັກກັນ ເຂົາຜູກພັນກັນວິທີໃດ ?
ເຖິງມີຄວາມຮັກກັນໄດ້ ເພາະວ່າຫົວໃຈເຂົາມີເໝືອນກັນ

ເຖິງໃຫ້ແຜ່ນຟ້າ ມາປິດບັງຂວາງກັ້ນ
ໃຫ້ໂລກນີ້ສິ້ນແສງຈັນ ແຕ່ຫ້າມຮັກກັນນັ້ນຍາກສຸດແສນ
ແມ່ນຫາກຫ່າງກັນ ຢູ່ໄກແສນໄກໄປຄົນລະແດນ
ຄວາມຮັກຕິດຝັງໃຈແໜ້ນ ຍິ່ງກວ່າກຳແພງແຜ່ນເຫຼັກໄຫຼ

ຄວາມຮັກມີຄ່າ ຢ່າງມະຫາສານ
ຖືກໃຜໃຈຕ້ອງໄຫວຫວັ່ນ ໃຜຈະກີດກັນກາງກັ້ນບໍ່ໄຫວ
ຖືກຝາກຮັກລົງ ໃຜກໍຄົງຈະຮູ້ເຖິງໃຈ
ເຫຼືອແຮງຕັດຮັກອອກໄດ້ ເພາະວ່າຫົວໃຈຝັນໄຝ່ທຸກວັນ.

# ວຽງຈັນເມືອງງາມ

ຮຸ່ງແຈ້ງຕາວັນ ລອຍເດັ່ນແສນງາມ ສຸດຕາ
ສ່ອງແດນເມືອງຟ້າ ວິມານວຽງຈັນ
ຫຼົງສີສຸກແສງ ຂອງແສງຕາວັນ
ງາມດັ່ງສວັນ ສ້າງໄວ້ໃຫ້ຝັນເມື່ອຊົມ

ເຕືອນອີກເຕືອນໃຈ ເມື່ອໄດ້ພົບພຽງ ເທື່ອດຽວ
ສຸດລ້າຟ້າຂຽວ ງາມແສນນິຍົມ
ນົກນ້ອຍຄອຍຄົ້ນ ແລ້ວບິນຕາມລົມ
ເປັນຄູ່ສູ່ສົມ ໄດ້ເຫັນຊື່ນຊົມວຽງຈັນ

ເມື່ອໄດ້ ມາເຫັນ
ເປັນບຸນ ສ້າງໄວ້
ໄດ້ເຫັນເຕັມຕາ ຂໍຝາກກາຍຝາກໃຈ
ຝາກຂວັນອຸຣາ ຈົນກວ່າຊີວາສູນໄປ

ໄດ້ຢູ່ວຽງຈັນ ເປັນສຸກທຸກວັນ ແລະຄືນ
ສຸດຈະສົດຊື່ນ ຣະຣື່ນທົ່ວໃຈ
ເຖິງແມ່ນຈາກແລ້ວ ຂໍຈຳຈາກໄປ
ຂໍຝາກໃຈໄວ້ ບໍ່ຫຼົງລືມໄລວຽງຈັນ.

# ປາດນ້ຳທານຮັກ

ປາດນ້ຳທານຮັກ ໃຫ້ອ້າຍສິນຫວັງ
ຕັດໃຈຫຼີກທາງ ໃຫ້ອ້າຍເປັນສຸກ
ນ້ອງຍອມຊອກຊ້ຳ ຍອມຣະກັມທົນທຸກ
ພຽງອ້າຍເປັນສຸກ ນ້ອງກໍຊື່ນໃຈ

ປາດນ້ຳທານຮັກ ຫັກໃຈອຳລາ
ໂຊກດີເຖີດໜາ ຂວັນຕາຂວັນໃຈ
ສິ້ນກັນເທົ່ານີ້ ຢ່າໄດ້ມີເຍື່ອໃຍ
ຈະຊ້ຳພຽງໃດ ນ້ອງກໍຈະທົນ

ຈົ່ງລືມເຖີດອ້າຍ ຢ່າອາລັຍ
ຫ່ວງໃຍ ຣຶທັຍຈະໝົ່ນ
ເພາະຟ້າລິຂິດ ຊີວິດບັນດົນ
ໃຫ້ເຮົາສອງຄົນ ຈຳຕ້ອງຫ່າງໄກ

ປາດນ້ຳທານຮັກ ດ້ອຍໃຈຍັງຄິດ
ນາດແມ່ນຊີວິດ ນ້ອງຈະສາບານ
ຫາກຊາດໜ້າມີ ຢ່າໄດ້ມີພັຍພານ
ວອນຟ້າສວັນ ນັ້ນຈົ່ງເມດຕາ.

# ຄະນຶງຮັກ

ປານນີ້ ອ້າຍຢູ່ຫົນໃດ ?
ຢູ່ໃສ ກັບໃຜຫນໍນີ້ ?
ສຸກສັນ ຫຼືເສົ້າໂສກີ ?
ອ້າຍນອນຝັນດີ ຫຼືຢ່າງໃດ ?

ຄືນນີ້ ຣິດີແສນເສົ້າ
ຂາດເຈົ້າ ມາເລົ້າໂລມໃຈ
ນັ່ງຄິດ ຄະນຶງນິອາຍ
ແມ່ນຮັກມະລາຍ ຄົງຕາຍແນ່

ອະນິຈາ ຜອາຂຶ້ນມາໄດ້
ລະເມີເພີ້ໄປ ດວງໃຈຄອຍໃຫ້ດຽວແດ
ຮັກຈິງຫຼືບໍ່ ຫຼົງເຝົ້າລໍບໍ່ເຫັນມາແລ
ຮັກລວງຫຼືວ່າແນ່ແທ້ ປ່ຽນແປຫຼືຍັງພັກດີ

ຄືນນີ້ ແສງຈັນໃສສ່ອງ
ແຕ່ນ້ອງ ໝົ່ນໝອງເຕັມທີ່
ຍອດຮັກ ຍອດຂວັນຊີວີ
ຫວນຄືນມາທີ ທີ່ຮັກເອີຍ.

# ຢ່າກອນ

ຢ່າກອນ ໃຈນະ
ຢ່າຫາ ວ່າຍິງໃຈອ່ອນ
ຜູ້ຍິງ ເຂົາງານເຂົາງອນ
ເພື່ອໃຫ້ຊາຍງອນ ນາງໍ້ນາງໍ້

ຢ່າຫວັງ ລອຍນະ
ເບິ່ງໜ້າ ບໍ່ຄືໜ້າພໍ່
ຜູ້ຊາຍ ບໍ່ມີເນື້ອງພໍ
ມາຫຼອກນາລໍ້ ບໍ່ພໍຈັກທີ

ລະວັງ ຈະຖືກຂອງແຂງ
ຢ່າລອນຫາແລ່ງ ເອົ້າກັນດີໆ
ມາຈັບມື ຖືແຂນແບບນີ້
ຜິດປະເພນີ ອັບປີສີກະບານ

ຢ່າກອນ ໃຈນະ
ຖ້າຮັກ ໃຫ້ຂໍແຕ່ງງານ
ຢ່າທຳ ສິ່ງອະນາຈານ
ໜ້າອາຍຊາວບ້ານ ຈະກ່າວຂວັນນິນທາ.

# ປອກບໍ່ໄດ້ເບາະ ?

ຢ່າເອີ້      ແຮງຫຼາຍ
ແມ່ນໃຜ      ວ່າໃຈເຈົ້າອ່ອນ ?
ເຈົ້າງານ      ແລ້ວຍັງທຳງອນ
ຂ້ອຍເມື່ອຍມາວອນ      ນາງັ້ແທ້ໆ

ຢ່າຄຸຍ      ຫຼາຍນະ
ເບິ່ງໜ້າ      ບໍ່ຄືໜ້າແມ່
ຂື້ນສູງ      ຮ້ອງປານສູງແກ
ໄວຍຄ່ອຍໆແດ່      ເຈົ້າແມ່ຄົນງາມ

ຍ້ອນຮັກ      ຍ້ອນປາຖນາ
ບໍ່ແມ່ນຕັ້ງໜ້າ      ຫາລອຍລອນລານ
ພຽງຈັບມື      ຖືແຂນຊຸ້ກຖານ
ຫາວ່າອ້າຍທຳ      ອັບປີສີກະບານ

ປອກກໍ      ບໍ່ໄດ້ເບາະ
ໜ້າງໍ      ເຂົ້າແລ້ວແຈ່ມຈັນ
ຮັກດອກ      ຈຶ່ງປອກຈອນຂວັນ
ເອົານີ້ແຫວນໝັ້ນ      ມາດີກັນເຖີດເອີຍ.

# ຂໍຄືນຄຳສັນຍາ

ເຂົາເຄີຍສັນຍາ ຮັກໝັ້ນຮືທັຍ ໄອ້ກ່ອນ
ຈະຮັກແນ່ນອນ ບໍ່ປ່ຽນແປຜັນ
ຫຼົງຜິດຄິດຝັນ ວ່າເປັນຈິງ
ທີ່ແທ້ກໍຍິງຂໍພຽງໝັ້ນ ຫຼອກໃຫ້ເຮົາຝັນ ຕາຍໃຈ

ແທ້ຈິງເຂົານີ ຮັກທີ່ໝາຍປອງ ໄອ້ກ່ອນ
ນາຮູ້ກໍຕອນ ທີ່ມັນແສນສວາຍ
ເຂົາຢິບຢື່ນຮັກ ທີ່ຈອນປອນ
ຮັກແທ້ເຂົາທອນໃຫ້ຄົນໃໝ່ ທຸ່ມຄວາມເຈັບໄອ້ເສົ້າໃຈໂສກສັນ

ເມື່ອນາພົບ ປະສົບແກ້ວຕາ
ອ້າຍຂໍຄືນຄຳທີ່ວ່າ ຮັກສຸດຊື່ອຟ້ານີຮັນ
ນອບຄຳໄອ້ໃຫ້ ຂໍຈາກໄປຈົນຊື່ອຊີວັນ
ແນ່ນເກີດຊາດໃດຢ່າຜ່ານ ພົບນີງຄານທີ່ມີສອງໃຈ

ສົງສານຕົວເອງ ທີ່ຖືກນັກເລງ ຮັກຫຼອກ
ອົກຊ້ຳຈິດຊອກ ເກືອບຊີບສລາຍ
ບົດຮຽນບົດຮັກ ປະຈັກນາ
ສູງເໜືອຮາຄາທີ່ຄອນໄດ້ ຈະຈົດຈຳໄອ້ຈົນໃຈສິ້ນເອີຍ.

# ເຫຼືອພຽງພາບ

| | |
|---|---|
| ເຫຼືອພຽງແຕ່ພາບ | ໄວ້ໃຫ້ |
| ສ່ວນດວງໃຈ | ນ້ອງຖອນຄືນເສັຽແລ້ວ |
| ສິ້ນຄວາມຮັກ | ຊ້ຳໜັກອຸຣາຮ້ອນແຜ່ວ |
| ຮັກບໍ່ເຄີຍແນ່ແນ່ວ | ເມື່ອຮັກແລ້ວ ກໍສູນໄປ |

| | |
|---|---|
| ເຫຼືອຮອຍສລັກ | ໄວ້ວ່າ |
| ຊົ່ວດິນຟ້າ | ຮັກນີ້ບໍ່ເຊືອນຄາຍ |
| ແຕ່ຕົວນ້ອງ | ນັ້ນຈາກໄປໄກແສນໄກ |
| ຮັກອ້າຍຕ້ອງສລາຍ | ໂຖໃຈນ້ອງ ບໍ່ເມດຕາ |

| | |
|---|---|
| ພາບແຜ່ນນີ້ | ອ້າຍຈະເກັບໄວ້ |
| ເພື່ອເຕືອນຫົວໃຈ | ວ່າຍິງນີ້ໄດ້ລວງຂ້າ |
| ຈະຈຳຈົນຕາຍ | ຫົວໃຈຍິງຫຼາຍມາຍາ |
| ຫຼອກຂ້າຊ້ຳແທບເປັນບ້າ | ບໍ່ເວທນາເຫັນໃຈ |

| | |
|---|---|
| ຫຼຽວມອງເຫັນພາບ | ນ້ອງຍິ້ມ |
| ດັ່ງຈະເຍີ້ຍ | ອ້າຍນີ້ໃຫ້ອັບອາຍ |
| ບຸນຂ້ານ້ອຍ | ນ້ອງຈຶ່ງປ່ອຍຮັກໜີໄກ |
| ຊ້ຳໃນອົກບໍ່ຫາຍ | ແມ່ນຕາຍອ້າຍຄົງບໍ່ລືມ. |

# ເສັ້ຽງແຮງຮັກ

ເສັ້ຽງແຮງເຝົ້າຮັກ    ນາງສຸດຫົວໃຈ
ເສັ້ຽງແຮງຝັນໄຝ່    ເສັ້ຽງແຮງໝາຍປາຖນາ
ບໍ່ເຄີຍຄິດເລີຍ    ຈະຊໍ້າອຸຣາ
ແຕ່ແລ້ວອະນິຈາ    ຕ້ອງກັບມາເສົ້າໃຈ

ຮູ້ພຽງວ່ານ້ອງ    ນາງຈະວິວາ
ເໝືອນດັ່ງຟ້າຜ່າ    ນໍ້າຕາໄຫຼຕົກຊອງໃນ
ຄິດເຖິງຄັ້ງເຮົາ    ເຄີຍຮັກຮ່ວມໃຈ
ສຸກລົ້ນໃນຣິທັຍ    ເຫດໃດຈຶ່ງປ່ຽນອື່ນ

ຜູ້ໃຫຍ່    ຊ່າງໂຫດຮ້າຍແທ້ໜໍ
ຕັດຄວາມຮັກສອງເຮົາລົງຄໍ    ໃຈນໍໃຈຂອງຄົນ
ສຸດທີ່ຮັກ    ເຈົ້າກໍຄົງ ໝອງໝົ່ນ
ຄົງຄິດກັງວົນ    ຫຼືນາງເປັນສຸກໃຈ

ເຫັນພຽງບັດນ້ອງ    ເຊີນສູ່ວິວາ
ອ້າຍຍັງກົ້ມໜ້າ    ດ້ານມາເພື່ອຮ່ວມອວຍໄຊ
ສຸກສັນຮ່ວມກັນ    ເຖີດໜາດວງໃຈ
ຂ້ານີ້ຂໍໄກ    ປວດໃຈກໍຈຳທົນ.

# ເຊື້ອອ້າຍດີກວ່າ

ເຖິງໃຜຈະປອງ | ຮັກນ້ອງພຽງໃດ
ຄົງນ້ອຍກວ່າໃຈ | ອ້າຍຮັກນ້ອງຢູ່
ຈົ່ງຢ່າໃຈເບົາ | ເຂົາຫຼອກຍອດຊູ້
ຈົ່ງໄຕ່ຕອງດູ | ຄິດດູໃຫ້ດີເຖີດໜາ

ມີໃຜເຂົາປອງ | ຮັກນ້ອງກວ່າອ້າຍ
ຮ້ອຍຮັກພັນຊາຍ | ອ້າຍຮັກນ້ອງກວ່າ
ນ້ອງຕ່ຳພຽງດິນ | ຫຼືຢູ່ພຽງຟ້າ
ອ້າຍປາຖນາ | ສັນຍາຮັກບໍ່ຈືດຈາງ

ເຖິງຈະມີ | ຮ້ອຍພັນອຸປສັກ
ອ້າຍຂໍສມັກ | ແມ້ນແຕ່ເອົາຊີວາວາງ
ເພື່ອຄົນຮັກ | ຈະຂໍຕາມໃຈທຸກຢ່າງ
ເທບແຫ່ງຄວາມຫວັງ | ຂໍພະລັງຊ່ວຍດົນທົວໃຈ

ເງິນຄຳໝື່ນແສນ | ແມ່ນມີຣາຄາ
ທົ່ວທັ້ງໂລກາ | ທຽບຮັກບໍ່ໄດ້
ລົ້ນດິນຖ້ວນຟ້າ | ຮັກນາງຖ້ວນໃຈ
ເຊື່ອເຖີດດວງໃຈ | ອ້າຍຂໍຮັກພຽງແຕ່ນາງ.

# ພອນວິວາ

ຂໍຍົກສິບນິ້ວ ກາບໄຫ້ເທວາ
ໂປຣດຈົ່ງໄດ້ມາ ອ່ວຍພອນມົງຄົນ
ສິ່ງຄວາມສຸກຂີ ນັ່ງມີເລີດລົ້ນ
ສິ່ງບຸນກຸສົນ ແກ່ຄູ່ວິວາ

ຂໍໃຫ້ບ່າວສາວ ສິດຊື່ນດວງໃຈ
ຫ່າງຈາກໄພຍພັຍ ເຈັບໄຂ້ນາໆ
ພ້ອນເປັນເນັ້ງດຽວ ຜົວດຽວຊົ່ວຟ້າ
ຮັກກັນຈົນກວ່າ ແຜ່ນດິນສລາຍ

ຫາກປາຖນາ ຈົ່ງໄດ້ທຸກສິ່ງ
ພ້ອມທັງບຸດຍິງ ບຸດຊາຍ
ລາບຍົດຊື່ສຽງ ກ້ອງດັງ
ຈົ່ງມີພະລັງທັງໃຈກາຍ ສ້າງໃຫ້ຊີວິດກ້າວໜ້າ

ຂໍໃຫ້ບ່າວສາວ ຢູ່ຄູ່ຄຽງກັນ
ຕລອດເຖິງອັນ ແກ່ເຖົ້າຊະຣາ
ຜິດໃຈພຽງນ້ອຍ ອະພັຍເຖີດໜາ
ເຖິງຕາຍກໍຢ່າ ປ່ຽນໃຈຈາກກັນ.

# ສຸກສັນວັນເກີດ

ທ່ານເກີດວັນນີ້ ຂໍຈົ່ງມີ ຣາສີໃສສ່ອງ
ຢ່າໝົ່ນໝອງ ໃຫ້ຄອງສຸກ ຕລອດຊີວີ
ອັນໂຣຄາ ໄພຍພັຍ ຢ່າໄດ້ມີ
ຈົ່ງສຸກຂີ ສຸກຂີ ສົມປາຖນາ

ນະໂມນຶກ ສິ່ງໃດ ໃນໂລກນີ້
ຈົ່ງໄດ້ມີ ສົມພອນ ທີ່ອອນໄອ້
ກຽດຕິຍົດ ຊື່ສຽງ ກ້ອງໂລກາ
ເຮືອງອຳນາດ ວາສນາ ໄຫຼມາກອງ

ທ່ານເກີດວັນນີ້ ເປັນວັນດີ ອະນຸຕະໂຊກ
ຢ່າມີທຸກ ແລະມີໂສກ ເສົ້າໝົ່ນໝອງ
ອັນເງິນຄຳ ມາກມາຍ ຫຼາຍກ່າຍກອງ
ຢ່າມີນານ ໄດ່ຕ້ອງ ຕະລອດການ.

# ງານເພາະເງິນ

ຄວາມງາມຂອງນ້ອງ ມີຄ່າພຽງເງິນ ແທ້ຫຼື
ອ້າຍຄົນໃຈຊື່ ຍຶດຖືຮັກຈິງຈາກໃຈ
ເພາະມອບຮັກຈິງ ໃຫ້ໄວ້
ແທ້ຈິງສີ່ຫ້ອງຫົວໃຈ ນ້ອງແບ່ງໃຫ້ຊາຍຫຼາຍຄົນ

ຄວາມງາມຂອງນ້ອງ ມີໄວ້ພຽງລວງ ຫຼອກຫຼອນ
ອ້າຍຄົນໃຈອ່ອນ ຕ້ອງນອນສະອື້ນຝືນທົນ
ແສນເສົ້າຫົວໃຈ ຖ້ວມລົ້ນ
ນ້ອງນາງຫຼົງເຊື່ອຄວາມຄົນ ອ້າຍຈົນນ້ອງຈຶ່ງປ່ຽນໃຈ

ຍາມໃດ ຄວາມງາມນ້ອງສູນໄຮ້ຄ່າ
ສິ້ນຄົນເຂົາປາຖນາ ຈຶ່ງຫວນຄືນມາຂໍ້ໃໝ່
ອ້ອນກອດແຂນເຂົາ ທີ່ເຈົ້າເຄີຍພັກອາສັຍ
ຫຼົງເດີນທາງຜິດພາດໄປ ອ້າຍຍອມອະພັຍໃຫ້ນ້ອງ

ມີຄົນເຂົາຊ້ຳ ຫຽາມຢຽບປະນາມ ເຢີ້ຍຫຽັນ
ອ້າຍບໍ່ຄິດຫວັ່ນ ແຕ່ຝັນຮັກຈິງໝັ້ນຄົງ
ຂໍມອບຫົວໃຈ ໃຫ້ນ້ອງ
ສາບຮັກຄຽງຄູ່ເຮົາສອງ ໄດ້ຄອງຮັກເປັນສຸກເອີຍ.

# ເພັດໃນຕົມ

ນາງເຄີຍຜ່ານຊາຍ　　ມາແລ້ວມາກມາຍຫຼາຍໜ້າ
ຈົນຖືກຂນານນາມວ່າ　　ຍອດຍິງແມ່ນັກຣາຕຣີ
ສັງຄົມກີດກັນ　　ແບ່ງຊັ້ນຄົນລະນາຣີ
ນີຣອຍດ່າງພ້ອຍຣາຄີ　　ນາງເປັນສະຕຣີສິ້ນຄົນບູຊາ

ຕົວນາງຈະຊານ　　ແຕ່ໃຈນາງງາມເຫຼືອລົ້ນ
ງາມກວ່າຜູ້ຍິງໝື່ນຄົນ　　ທີ່ຂ້າເຄີຍພົບຜ່ານມາ
ໃຜຈະປະມານ　　ຢຽດຫຍາມກໍຕາມເຖີດໜາ
ນາງເປັນເພັດທີ່ສູງລ້ຳຄ່າ　　ທີ່ຝັງກາຍາຢູ່ໃນເຮືອນຕົມ

ຫົວໃຈ　　ອ້າຍນີ້ຫວ່າງທັງສີ່ຫ້ອງ
ຈະມອບໃຫ້ນ້ອງ　　ໄດ້ຄອງຮັກອັນສຸກສົມ
ນີອັງນ້ຳໃຈ　　ໃຫ້ລ້າງກິ່ນສາບຄາວຕົມ
ນີ້ອອນແຂນໄອ້ແທນຜ້າຫົ່ມ　　ເມື່ອສາຍລົມພັດພືອເຮືອນກາຍ

ນາງເຄີຍຜ່ານຊາຍ　　ມາແລ້ວມາກມາຍກໍຊ່າງ
ກໍຈະຂໍຮັກແຕ່ນາງ　　ຝາກຝັງຊີວິດຈົນຕາຍ
ເຣື່ອງຫຼັງຜ່ານມາ　　ລົບລ້າງມັນເສັຽໃຫ້ຫາຍ
ນາເປັນເພັດຄົນດຽວຂອງອ້າຍມາຮັກກັນໄປຊົ່ວນິຣັນດອນ.

# ນ້ຳຕົກເຊລະບຳ

ແສນສຸກໃຈເຫຼືອຂົ່ນ ຊື່ນຊົມ ເມື່ອຍາມໄດ້ມາ
ເຫັນນ້ຳໂຕນຕົກຜາ ຫຼັ່ງລົງງາມຕາ ຊັກພາໃຫ້ຝັນ
ສາຍລົມໂຊຍແຜ່ອພືອ ນ້ຳໂຕນແຕກປືອ ຄ້າຍຄອັນ
ໂອ່ ເຊລະບຳ ງາມດັ່ງສອັນ ເສກສັນໄອ້ໃຫ້

ເຫັນໜຸ່ມສາອລ່ອງລອຍ ຜ່ອງງອຍ ສີລາຍືນຍິ້ມ
ນອນນົກກໍເຈີດບິນ ເສາະແສ່ອຫາກິນ ທ່ານກາງນ້ຳໄຫຼ
ສຽງນ້ຳໂຕນຕົກຜາ ຄ້າຍສຽງສົ່ງລາ ຮ້າງໄກ
ປຽບຊີອິດຄົນ ພົ້ນຜ່ານເລີຍໄປ ຫາໃດແນ່ນອນ

ແຄມຝັ່ງເຊນັ້ນມີ ພຶກສາຂະຈີ ເດັ່ງຣະດາດ
ງາມບຸຜາຊາດ ສິ່ງກິ່ນຫອມ ເຜີ້ງຕອມເກສອນ
ເງົາໄມ້ແຜ່ຄຸມບັງ ເຢືອກເຢັນທົ່ອຝັ່ງ ໜ້າເອນຫຼັງນອນ
ສຸດອອນຊອນ ປາບ້ອນກິນເຫຼືອ ເມື່ອນອງເພີນໃຈ

ແມ່ນຈາກເຊນີ້ໄປ ຈະໄກ ແສນໄກກໍຕາມ
ໃຈຂ້າຍັງຈົດຈຳ ພາບເຊລະບຳ ຝັງຈິດບໍ່ຫາຍ
ທັນນະຊາດດູດດຶງ ຮຶທັຍຄະນຶງ ເລື້ອຍໄປ
ຫາກຊີອິດຍັງ ຫອັງອ່າຄົງໄດ້ ຫອນໄປທ່ຽອຊົມ.

# ໂອ່ງໂຕ່ງ

| | |
|---|---|
| ໂອ່ງໂຕ່ງ | ແຫ້ນໍ ນ້ອງສາວ |
| ຜິວຂາວ | ເໝືອນດັ້ງຍອງຝ້າຍ |
| ເບິ່ງດົນໆ | ແລ້ວຍິ່ງງາມຫຼາຍ |
| ຍ່າງຍ້າຍ | ປານຫົງເດີນດິນ |
| | |
| ໂອ່ງໂຕ່ງ | ແຫ້ໜໍ ແກ້ມນ້ອງ |
| ຢາກຈອງ | ໄອ້ດົນຊິນກິນ |
| ເນດຄົນຂໍາ | ໃສດໍາປານນິນ |
| ແມ່ຍຸພິນ | ງາມສິ້ນເກີນຄົນ |
| | |
| ເກີດອັນຫຼັງໜໍ | ກິນເຂົ້າກັບຫຼັງ |
| ເປັ່ງປັ່ງ | ແຫ້ໜໍໜ້າມົນ |
| ເປັນລູກຫຼ້າ | ຫຼືອ່າລູກໂທນ |
| ນິຈົນ | ຫຼືຄົນທັນມະດາ |
| | |
| ໂອ່ງໂຕ່ງ | ແຫ້ນໍ ຍອດຍິງ |
| ໄດ້ພັກພິງ | ແລ້ວຕາຍກໍຢ່າ |
| ໄປຣດເອັນດູ | ອ້າຍແດ່ນາງຟ້າ |
| ແມ່ຂວັນຕາ | ນ້ອງຢ່າທໍາເມີນ. |

# ຟ້າລືມດິນ

| | |
|---|---|
| ອາສນາ | ຊາຕາຂອງເຮົາ |
| ແສນໂສກເສົ້າ | ເຫງົາໃຈເຫຼືອທົນ |
| ຮັກແສນຫວານ | ນານເຂົ້າພະຈົນ |
| ໂທ ຈົນແສນຈົນ | ທຸກຄົນເມີນສິ້ນ |
| | |
| ແຕ່ດວງໃຈ | ອ້າຍຍັງບໍ່ລືມ |
| ຮັກດູດດື່ມ | ຟ້າຢ່າລືມດິນ |
| ພະອັນນາ | ໄຫວ້ພິນນະຣິນ |
| ຟ້າລືມແລ້ວດິນ | ຈົນສິ້ນໝົ່ນໝອງດວງໃຈ |
| | |
| ຫຼືຟ້ານີ | ຊາຍອື່ນຊິດເຊີຍ |
| ແຕ່ດິນນີ້ເອີຍ | ຍັງຮັກບໍ່ອາຍ |
| ຫຼົງລະເມີ | ເພີ້ເຝົ້າຄອຍຫາຍ |
| ທົວໃຈຕ້ອງຕຣົມ | ລະທົມທຸກຍິ່ງໜັກໜາ |
| | |
| ຊາດໃດໜາ | ຟ້າຈະປຣານີ ? |
| ຮັກອ້າຍນີ້ | ດ້ວຍໃຈເມດຕາ |
| ແມ່ນຟ້າລືມ | ດິນສິ້ນເໜືອນວ່າ |
| ຈຳຕ້ອງຂໍລາ | ຈົນກວ່ານິດນິຣັນດອນ. |

# ບົດເພັງຊີວິດ

ຟ້າລ່ອງອາຣຸນ ແສງທອງ ສ່ອງຜືອທານີ
ນີ້ໃໝ່ແລ້ວນີ້ ທົ່ວປັຕພີ ດູງາມແຈ່ມໃສ
ເມກໝອກຄອຍເລືອນ ຈາງຫາຍ ຈາກຂອບຟ້າໄປ
ຖິ້ມຄວາມຫຼັງໄວ້ ໃຫ້ເປັນພາບຖ່າຍ ອະດີຕການ

ເໝືອນສາກລະຄອນ ອັກຕອນ ຜາດໂຜນຕາມໄປ
ກ້າວໃໝ່ອັກໃໝ່ ຍ່າງຕິດຕາມໄປ ຈຸດອະວະສານ
ເຫຼືອພຽງກໍເປັນ ແນວຄິດ ອະດີດຂອງມັນ
ໃຫ້ເຮົາທ່ານໆ ຫວນຄິດເຖິງມັນ ເຖິງອັນສຸດທ້າຍ

ອະຣຸນສ່ອງແສງ ສີແດງ ສ່ອງອັນໃໝ່ແລ້ວ
ສຽງນົກແຜ່ວໆ ຈາກໄພດແອ່ວມາ ມາຕັ້ງຕົ້ນໃໝ່
ທຸກສິ່ງນັ້ນເປັນ ພຽງຝັນ ໃຫ້ຜ່ານພົ້ນໄປ
ທຳຈິດຜ່ອງໃສ ຕັ້ງຈິດຕັ້ງໃຈ ກໍ່ຄຸນຄວາມດີ

ເພື່ອແຜ່ນໂລກາ ທີ່ເຮົາ ທ່ານນັ້ນກຳເນີດ
ເພື່ອສັດປະເສີດ ທົ່ວສັພທຸກ ຢູ່ໃນໂລກນີ້
ເພື່ອກຽດຂອງຕົວ ເຮົາທ່ານ ຈົ່ງໝັ້ນສ້າງດີ
ວ່າໃນຊາດນີ້ ບໍ່ຕ້ອງເສັຽທີ ທີ່ໄດ້ເກີດມາ.

# ອີກພຽງຄັ້ງດຽວ

ຖ້າຫາກຍັງຄິດ　　　　ນອກໃຈກັນອີກ
ຮັກແສນຮັກອ້າຍຈຳຕ້ອງຫຼີກ　　　　ຫຼີກທາງໃຫ້ນ້ອງເດີນໄປ
ທັ້ງນັ້ນທັ້ງນີ້ ທີ່ພົບພານ　　　　ອ້າຍແທບອົດກັ້ນໄວ້ບໍ່ໄດ້
ອີກພຽງຄັ້ງດຽວຄັ້ງດຽວດວງໃຈ　　　　ວອນນ້ອງຢ່າກະທຳ

ສິ່ງໃດທີ່ນ້ອງ　　　　ນັ້ນເລີຍພັ້ງຜິດ
ຂໍໃຫ້ນ້ອງເລີກມັນດ້ວຍຈິດ　　　　ແຫ່ງຄວາມສຳນຶກບາບກັມ
ແມ່ນນ້ອງຍັງຄິດອວດທະນົງ　　　　ວ່າເກີດເປັນທົງສຸດແສນງາມ
ແອບມີຄູ່ຄອງຫຼາຍຄົນປະຈຳ　　　　ຈະຊ້ຳເມື່ອຄວາມງາມສິ້ນ

ອ້າຍ ຢູ່ຄອງ　　　　ກັບນ້ອງດ້ວຍໃຈ
ກໍຄວນເອົາໃຈ　　　　ເລີກໄປລ້າງຮອຍມົນທິນ
ອ້າຍຍອມສະລະ　　　　ຮັກອື່ນມາ ເພື່ອນ້ອງທັງສິ້ນ
ເອົາຄວາມດີລ້າງຮອຍຮາຄິນ　　　　ໃຜຈະຫຍາມໝິ່ນບໍ່ຫວັ່ນບໍ່ໄຫວ

ອີກພຽງນຶ່ງຄັ້ງ　　　　ຖ້າຍັງໃຫ້ເກີດ
ຮັກອ້າຍນີ້ ກໍຄົງລະເບີດ　　　　ແຕກພັງຄວາມຫວັງທະລາຍ
ແມ່ນນ້ອງຮັກແທ້ຈິ່ງຄິດດູ　　　　ແອບໄປມີຊູ້ບາບເທົ່າໃດ
ແຕ່ມັນແລ້ວມາອ້າຍຍອມອະພັຍ　　　　ແຕ່ນີ້ຕໍ່ໄປຂໍນຳ

# ກຸຫຼາບປາກຊ້ນ

ແດນດິນຖິ່ນໄກ          ເຫຼືອຕາ
ຢູ່ສຸດນະພາ          ຍັງມີດອກຟ້າແສນງາມ
ຫາກໃຜໄດ້ເຫັນຈະມົວຫຼົງ          ເຝົ້າຝັນພະວົງ ຫຼົງຕິດຕາມ
ສາວເອີຍ ສາວງາມ          ງາມເຫຼືອຕາ

ງາມຈິງດັ່ງຄຳ          ເຂົາຊົມ
ຫາກໄດ້ສຸກສົມ          ຊື່ນຊົມກັບນ້ອງສົມໃຈ
ຈະຂໍໄຝ່ຝັນ ແຕ່ນາງດ່ຽວ          ບໍ່ຂໍຂ້ອງກ່ຽວຍິງອື່ນໃດ
ເຝົ້າແຕ່ຫຼົງໄຫຼ          ໄຝ່ຝັນໃຈປອງ

ໂອ້ ກຸຫຼາບສວັນ          ແຫ່ງເມືອງປາກຊັນ
ທີ່ອ້າຍຝັນ          ໝາຍປອງ
ໃຈຫວັງຢູ່ຄຽງປະຄອງ          ກຸຫຼາບເປັນສີດັ່ງທອງ
ເມື່ອຍາມແສງສ່ອງ          ຈາກດວງສຸຣິ

ຍາມແລງຄ່ຳລົງ          ນ້ຳຊັນ
ໂອ ບໍຣິຄັນ          ນ້ຳຊັນໄຫຼຜ່ານ ໃສດີ
ໄດ້ເຫັນໜຸ່ມສາວເຈົ້າລ່ອງລອຍໝູ່ປາໃຫຍ່ນ້ອຍລອຍຫຼິ້ນດີ
ສິ້ນແສງສຸຣິ          ສຸດສີແສງຈັນ.

# ພາບຮັກໃນດວງຕາ

ໃນດວງຕາອ້າຍ ຍັງມີພາບນ້ອງ ສາຍຢູ່
ບໍ່ມີວັນລືບເລືອນເລືອງຫ່າງຫາຍ ໄດ້ເລີຍ
ຍັງເປັນພາບດຽວຝັງແໜ້ນໃນຕາ ເຊັ່ນເຄີຍ
ບໍ່ລານເລືອນເລີຍເໝືອນເຄີຍ ເໝືອນຄວາມຫຼັງເກົ່າ

ຍັງຄົງເປັນພາບທີ່ງາມສົດສວຍ ບໍ່ປ່ຽນ
ກົດຕິດວົນວຽນຕາຄວາມຫຼອກຫຼອນ ທຸກຄາວ
ນາງໃດພາບໃດໃສອື່ນໝື່ນປຽບ ທຽບເທົ່າ
ທຽບທັນຕົວເຈົ້າໃນໂລກ ນີ້ຫາມີມີ

ໃສວ່ານາງນ້ອງ ສວຍກວ່ານາງຟ້າ
ໃສວ່າໂລກາ ຮັກທຽບບໍ່ມີ
ແຕ່ນາງນ້ອງງາມ ສະເພາະອ້າຍນີ້
ປຽບຣາຊີນີ ຜູກມັດຫົວໃຈ

ດວງໃຈສຸດຮັກນາງດຽວທີ່ອ້າຍ ຮັກຍິ່ງ
ເສົ້າໃຈຈິງໆຍິ່ງດຽວທີ່ອ້າຍ ໝາຍໃຈ
ມັນເປັນເຄາະກັມຫຼືບາບບຸນທຳ ຊາດໃດ
ອ້າຍຈຶ່ງບໍ່ໄດ້ຕົວນ້ອງມາເປັນ ຄູ່ຄອງ.

# ໑໙
# ຖ້າມທ່ຮັກ

ຣາຕຣີນີ້ງາມ ຍິ່ງໜັກ
ຖ້າຫາກມີຮັກ ມີນ້ອງຄຽງໃກ້
ອ້າຍຄົງເພີດເພີນ ສຸດຊຶ້ງຣຶທັຍ
ຈະກອດເຈົ້າໄວ້ ໃຫ້ສົມອຸຣາ

ລົມອີດອີວພື່ວ ກິ່ງໄມ້
ເມກຜ່ານລອຍໄຫຼ ລົມລູບຈັນທາ
ງົດງາມເຫຼືອຄຳ ຈະພັລນາ
ຄົງສຸກຈິງໜາ ຖ້າມີຂວັນໃຈ

ຣາຕຣີນີ້ງາມ ຍິ່ງໜັກ
ແຕ່ຂາດຄົນຮັກ ດູງຽບເຫງົາໄປ
ບໍ່ມີນ້ອງນາງ ກໍຂາດຄວາມໝາຍ
ເຈົ້າຫຼົບຢູ່ໃສ ຍອດຊູ້ ?

ຈັນສາດສີນວນ ງາມໜັກ
ຖ້າຫາກມີຮັກ ມີນ້ອງຄຽງຄູ່
ສອງຄົນພ້ຳພອດ ອອດອ້ອນຊື່ນຊູ
ແຕ່ຂາດຍອດຊູ້ ກໍດູປ່ຽວໃຈ.

# ອ້າຍຍັງຮັກນາງ

ຄືນນັ້ນ ນີໃຈ
ພ່ຳລ່ຳໄລ ເພີ້ແຕ່ຄຳຣະອື້ນ
ທ້ານກາງສຽງເພັງ ສອງເຮົາຊິດຊື່ນ
ຫວານຮັກອື່ນ ຈະປານຮັກເຮົາ

ຄືນນັ້ນ ຍັງຈຳ
ທຸກຖ້ອຍຄຳ ທີ່ກະຊິບເບົາໆ
ຢາກຢູ່ໃກ້ກັນ ຍານນີ້ນານເຂົ້າ
ຈວບຈົນສອງເຮົາ ສລາຍຈາກກັນ

ແລ້ວວັນກໍຄື້ນ ແລ້ວເດືອນກໍປ່ຽນ
ເດືອນປີໝູນວຽນ ນ້ອງກໍປ່ຽນແປຜັນ
ໄປພົບຄົນໃໝ່ ຫຼືໃດຈອນຂວັນ
ນາງປ່ຽນເຫັນ ດ້ອຍເຫດຜົນໃດ ?

ຄືນນີ້ ນີພຽງ
ຖ້ອຍສຳນຽງ ສຽງທີ່ນ້ອງເຄີຍໃຫ້
ສ່ວນຕົວຂອງນາງ ນ້ອງຢູ່ຫົນໃດ ?
ນາງຫຼົບຢູ່ໃສ ? ອ້າຍຍັງຮັກນາງ.

# ສາມສິບປີແຫ່ງຄວາມຫຼັງ

ຈາກກັນວັນນັ້ນ ຈວບຈົນວັນນີ້
ສາມສິບປີ ທີ່ພົ້ນຜ່ານມາ
ໃຈຍັງຄິງຮັກ ພັກດີບູຊາ
ຍັງປາຖນາ ໄຝ່ຮັກແຕ່ນ້ອງ

ໂອສຸດທີ່ຮັກ ເຈົ້າຈະຢູ່ໃສ ?
ຢູ່ກັບໃຜ ຊື່ນຫຼືນິ່ນໝອງ ?
ຍັງຈຳຄວາມຫຼັງ ຄັ້ງເຄີຍປອງດອງ
ຈຳໄດ້ບໍ່ນ້ອງ ຍາມສອງຄົນເຮົາຮັກກັນ

ສຸດເຮົາຮັກ ສຸດເຮົາຫວງ
ສຸດເຮົາຫວງ ຮັກດຽວໝຽວໝັ້ນ
ປານຈະກືນ ໂອຍາມຮັກກັນ
ກັນເວນມາກັ້ນ ເຮົານັ້ນໃຫ້ຕ້ອງພັດກັນຫ່າງໄກ

ຈາກກັນວັນນັ້ນ ຈວບຈົນວັນນີ້
ສາມສິບປີ ກໍພົ້ນຜ່ານໄປ
ດວງໃຈນາງນ້ອງ ເດ່ເປັນສັນໃດ ?
ຍັງມີພາບອ້າຍ ຈັກນ້ອຍໃນໃຈບໍ່ນາງ ?

# ສິ້ນສຸຣິຍາ

ສິ້ນສຸຣິຍັນ    ຕາວັນອຳລາ ນະພາມົ່ນ
ໝູ່ນົກວົກວຽນວົນ    ຄືນກັບຮັງນອນ
ດວງຈັນກໍໝູນມາໃໝ່    ຢູ່ໃສ ເພື່ອນເຄີຍຮ່ວມໝອນ ?
ຈາກຈອນ    ແລ້ວບໍ່ກັບມາ

ເສັ້ນສຸຣິຍັນ    ຂ້າມສຸດຂອບຟ້າ ທິວາກະຈາຍ
ຄ່ຳແລ້ວ ແສງເດືອນລາ    ຄ່ອຍຈືດຈາງລາ
ດວງໃຈ ເຂົາກໍເໝືອນກັນ    ສິ່ງສານຊື່ວພຽງເວລາ
ຜ່ານມາ    ແລ້ວກໍຜ່ານໄປ

ໂອ ດວງສຸຣິ    ແມ່ນຈຳຕ້ອງລາ
ຍັງກັບມາ    ເມື່ອອາຣຸນໃໝ່
ແລ້ວຮັກ    ທີ່ຈອນຈາກໄປ
ເມື່ອໃດ    ນໍຈະກັບມາ ?

ສິ້ນຄວາມສິ່ງສານ    ໝົດຄວາມປຣານີແລ້ວຫຼືໃດ ?
ຈຶ່ງທຳເຫີນຫ່າງໄກ    ເໝືອນເສັ້ນທາຣາ
ລືມຄຳ ທີ່ເຄີຍພ່ຳພອດ    ຖອດເຄືອງ ເຊິ່ງຄວາມສເນຫາ
ຈາກລາ    ແລ້ວລືມສິ້ນກັນ.

# ສວ້ນສລາຍ

ອັນຄວາມຮັກໃດ ຈະໃຫຍ່ຍິ່ງໜັກ ເກີນຮັກຂອງເຮົາ ?
ເໜືອຄວາມຮັກເຮົາ ເໜືອໃຈຂອງເຮົາ ຈະມີຢູ່ໃສ ?
ເມື່ອຍາມເຮົາສອງ ຮ່ວມຄອງສາບານ ຮ່ວມສັນຍາໃຈ
ສຸກໃດຊື່ນໃດ ຫອມໃດຫວານໃດ ຈະທຽມທຽບທັນ

ອ້າຍບອກຮັກນ້ອງ ນ້ອງບອກຮັກອ້າຍ ໃຈຮັກລອຍລື່ອ
ສອງໃຈພັດລື່ອ ສອງໃຈລອຍລື່ອ ສູ່ສອງສວັນ
ລືມຄວາມໝົ່ນໝອງ ລືມຄວາມທຸກຕຣົມ ຂອງໂລກຊີວັນ
ເໝືອນໃນຍາມນັ້ນ ໂລກເປັນສວັນ ຂອງເຮົາສອງຄົນ

ນ້ອງໃຫ້ແຮງໃຈ ອ້າຍໃຫ້ແຮງຫວັງ ຕັ້ງມານະສູ້
ເພື່ອຊີວິດຄູ່ ເພື່ອຄວາມເປັນຢູ່ ຂອງເຮົາສອງຄົນ
ໂອ ທາງສວັນ ທີ່ເຮົາຮ່ວມກັນ ອາດໄດ້ໃຫຍ່ລົ້ນ
ຕ້ອງມາມືດມົນ ສັບສົນວົນວຽນ ໃຫ້ປ່ຽນຫົວໃຈ

ໃຜຜິດສັນຍາ ທີ່ບອກວ່າຮັກ ວ່າຮັກໝຽວໝັ້ນ
ຮັກດຽວຊື່ວການ ຊົ່ວຊີວາວັນ ຈະແຕກສລາຍ
ຜູ້ໃດກັນໜໍ ທີ່ລືມນ້ຳຄຳ ລືມສັນຍາໃຈ
ທີ່ເຄີຍວ່າໄວ້ ຈະເປັນໄສ້ໃຈ ຂອງກັນແລະກັນ.

໑

# ລາທີ

ຣາຕຣີ ນີໄຊ່ລາແລ້ວ
ດວງແກ້ວ ຢ່າໂສກໂສກາ
ເຖິງຍາມ ຈະກັບມາຫາ
ຂໍຢ່າ ເປັນທຸກແຄ້ນໃຈ

ຣາຕຣີ ຂໍຝາກຄວາມຫວັງ
ຍາມຫ່າງ ຢ່າຄິດນີໃໝ່
ແມ່ນເຮົາ ຈະຢູ່ຫ່າງໄກ
ຂໍໃຫ້ໃຈ ນັ້ນຊື່ຕໍ່ກັນ

ທີ່ຮັກ ຖຸນອມໃຈຂ້າ
ຈຳລາ ທັ້ງທີ່ຈາບັນ
ແສນຫ່ວງ ຫ່ວງດວງຊີວັນ
ຫ່ວງໆຈອມຂວັນ ເມື່ອຈະຈາກໄກ

ລາທີ ນີໄຊ່ລາແລ້ວ
ດວງແກ້ວ ສຸດຮັກອາລັຍ
ອ້າຍຄິງ ເປົ່າປ່ຽວດວງໃຈ
ຍາມເມື່ອໄກ ພາກຈາກນອນນາງ.

# ເພລາຣາຕຣີ

ໄກ້ຣາຕຣີແລ້ວ ແກ້ວຕາ
ນອນນິກາກາ ຕ່າງກັບຮັງນອນ
ສຸຣິໂຍລັບແລງ ແສງເຮືອງອ່ອນ
ນ້ອງບໍ່ສະທ້ອນ ຫຼືໃດ ?

ຍາມຣາຕຣີແລ້ວ ແກ້ວຂວັນ
ທັງແສງຈັນ ສາດສີສ່ອງອຳພັຍ
ໂອຄືນເພັນ ເຫັນວັງຟ້າກວ້າງໃຫຍ່
ງາມສວັຍ ອ້ອນດວງຈັນ

ຫຼົບຢູ່ໃສ ນໍຄືນຮັກຂ້າ
ຊອກຊ່ອນຫາ ທົ່ວໃນດວງຈັນ
ກໍເຮົາເຄີຍ ນັດມາເຈີກັນ
ທີ່ດວງຈັນ ດວງນີ້

ຄ່ອຍຣາຕຣີແລ້ວ ແກ້ວໃຈ
ນອງທີ່ນໃດ ມືດຟ້ານິນຣາຕຣີ
ບໍ່ມີພຽງ ແນ່ນເງົານ້ອງຫຼືນີ້
ຣາຕຣີນີ້ ຊ່າງອາງເອງ.

# ຜິດຫວັງ

ຜິດຫວັງ  ແລ້ວເຈົ້າຈຶ່ງຮູ້ເມື່ອ
ບອກບໍ່ເຊື່ອ  ແລ້ວເສືອເປັນຢ່າງໃດ ?
ຈະຫັນໜ້າ  ໄປຄອຍຖ້າຜູ້ໃດ ?
ເຂົາຄົງຈະບໍ່ສົນໃຈ  ແລ້ວໃຜຈະທໍຣະມານ

ຜິດຫວັງ  ແລ້ວມານັ່ງຮ້ອງໄຫ້
ຈະໂທດໃຜ  ແຈ້ງໃຜລົງອາຍາ
ເດີນຫຼົງຜິດ  ທາງຊີວິດນານຍາ
ເສັຽຕົວເສັຽທີເສັຽທ່າ  ນ້ຳຕາເຈົ້າຕ້ອງຫຼັ່ງໄຫຼ

ກັບຕົວ  ກັບໃຈເສັຽໃໝ່ກໍດີ
ມາຊຸບຊີວີ  ຢ່າໄດ້ມີອັກຄີເສົ້າໝອງ
ຮັກຄົນທີ່ເຂົາ  ຮັກເຮົາຢ່າຫວັງເງິນທອງ
ຫົວໃຈບໍ່ແມ່ນສິ່ງຂອງ  ຈະກອງຊື້ໄດ້ຂາຍກັນ

ຜິດຫວັງ  ແລ້ວມາຕັ້ງຕົວໃໝ່
ເຣື່ອງແລ້ວໄປ  ຂໍໃຫ້ເປັນຄວາມຝັນ
ຊີວິດໃໝ່  ຄົງສົດໃສຣາວັນ
ຟ້າຄົງຈະລົງໂທດທັນ  ສາບານທີ່ເຂົາແກ້ງລືມ.

# ດົນໆເຫັນກັນ

ດົນໆເຫັນກັນ ເທື່ອນຶ່ງ
ຈົນຕົກຕະລຶງ ນາງງາມແທ້ງາມແທ້
ກ່ອນນັ້ນ ທັງດຳທັງແຫຼ້ ( ຊ້ຳ )
ບັດນີ້ຍັງໄຄແດ່ ໜ້າຮັກໜ້າແພງ

ງາມເກີນຄາດໝາຍ ໄວ້ກ່ອນ
ຈົນອົກສະທ້ອນ ໃຈຍ້ອນແຮງໆ
ຫຼົງມັກ ຫຼົງຊົມຫຼົງແຍງ ( ຊ້ຳ )
ລືມເຂົ້າສວາຍເຂົ້າແລງ ນອນຕະແຄງຝັນເຫັນ

ໃຜມາໝັ້ນ ຫຼືຍັງ ?
ຫຼືແຕ່ງງານ ໄປແລ້ວແຕ່ເຊັ່ນ
ນ້ອງງາມ ໝົດນີ້ໝົດເອັນ ( ຊ້ຳ )
ຜູ້ໃດມາເຫັນ ບໍ່ເປັນອັນກິນອັນນອນ

ເທວາ ຟ້າໃດນໍສ້າງ ?
ປະດິດນ້ອງນາງ ຈຶ່ງງາມງຽບງາມງອນ
ນ້ອງສາວ ຢ່າຟ້າວໜີກ່ອນ ( ຊ້ຳ )
ອ້າຍຂໍຈອງຈັກບ່ອນ ຫ້ອງຫົວໃຈນ້ອງນາງ.

# ຮັກແທ້ຢູ່ໃສ ?

ຮັກແທ້ນັ້ນນີ  ຢູ່ໃສ ?
ໃກ້ຫຼືໄກ  ແຫ່ງໃດຮັກແທ້ນັ້ນຢູ່ ?
ຢູ່ແດນດິນຟ້າ  ເບື້ອງບົນສວັນ
ຂໍດິນດັ້ນ  ໄປຈົນໄດ້

ຮັກແທ້ນັ້ນນີ  ຢູ່ແຫ່ງໃດ ?
ໂລກໝູນໄປ  ປ່ຽນດັ່ງໃຈຊາຍແສນໜ່າຍ
ກ່ອນເຄີຍມູ້ງໝາຍ  ມອບໃຈແລະກາຍ
ແມ່ນຍິງຮັກ  ຮັກຍັງເລືອນລອຍ

ໃຜວ່າຮັກ  ຫວານຊື່ນວຸຣາ ?
ແຕ່ອາສນາ  ນ້ອງນີ້ຕ່ຳຕ້ອຍ
ຮັກຈຶ່ງໄດ້ທຳ  ຈິດໃຫ້ເລືອນລອຍ
ຫຼືສຸດເອື້ອນສອຍ  ຮັກແທ້ຢູ່ສູງ

ຮັກແທ້ນັ້ນນີ  ຢູ່ທີ່ໃຈ
ຫາກຊາຍໃດ  ມີໃຈເລື້ອນໃສໝາຍມຸ້ງ
ນ້ອງຈະຖນອມ  ເທີດທູນຢູ່ສູງ
ໃຫ້ເຮືອງຮຸ່ງ  ເໝືອນຈັນແຈ່ມຟ້າ.

# ບໍ່ລືມວຽງຈັນ

ແມ່ນຢູ່ແສນໄກ ສຸດແດນດິນຟ້ານັ້ນ
ເຖິງມີສຸກສັນ ກໍລືມວຽງຈັນ ບໍ່ໄດ້
ຈາກນານແສນນານຍັງຫ່ວງ ຍາດມິດທັງປວງ
ຂ້າສຸດອາລັຍ ດວງໃຈຄະນຶງທຸກວັນ

ເມື່ອຢູ່ຜູ້ດຽວ ຍິ່ງປ່ຽວຍິ່ງຄິດເສົ້າ
ເໝືອນນົກທີ່ເຫງົາ ຢູ່ໃນກົງທອງອັດອັ້ນ
ສຸກໃຈທຸກໃຈເມື່ອຈາກ ເມື່ອຍາມໄດ້ພາກ
ແຄ້ວນຖິ່ນວຽງຈັນ ຖິ່ນຖານນະຄອນຂອງລາວ

ຈາກໄປ ສູ່ໄຕ້ຟ້າ ປະເທດອື່ນ
ຫ່າງມິດທີ່ເຄີຍສິດຊື່ນ ຫ່າງລຸງປ້ານ້າອາວ
ເຖິງມີສຸກຢູ່ວັງທອງ ບໍ່ເໝືອນເຫັນໜ້າພີ່ນ້ອງລາວ
ຄິດນາແສນເສົ້າ ຫ່ວງໃຍ

ນິວາດຫຼົງລືມ ພາບແຫ່ງຄວາມຫຼັງນັ້ນ
ເຖິງນອນຫຼັບຝັນ ກໍລືມວຽງຈັນບໍ່ໄດ້
ເມື່ອຍາມຫວນມາ ຢັ້ງມຖິ່ນໄຕ້ຟ້າເໜືອດິນ
ລາວນີ້ເມື່ອໃດ ສຸກໃຈເຫຼືອຄໍາ ກ່າວຂານ

# ຫນ້າຫນາວສາວຈົ່ມ

ເມື່ອເວລາ ຫນ້າຫນາວ
ຫນຸ່ມສາວ ຫນາວລ້ອນນອນສັ່ນ
ຫນາວ ຈົນສະບັ້ນ
ເມື່ອເຫມັນ ກັບຜັນພັດມາ

ຢູ່ດຽວດາຍ ໃຈເຫງົາ
ຫນາວຫນັກ ຫນາວຈອນຈຽນບ້າ
ຫນາວ ຍາມນິທາ
ປ່ອຍອຸຣາ ສຸດຖ້າໄດ້ແກ້ຫນາວ

ຫນາວລົມ ທົ່ນຜ້າ
ໃສ່ວ່າ ຈະອຸ່ນໃຈສາວ
ຫນາວຫຼາຍ ໃຈເສົ້າ
ຄອຍບ່າວ ບໍ່ມາຈັກທີ

ຫາກໄດ້ຍິນ ເພັງຫອນ
ຂໍເຊີນ ຊອນມາທາງນີ້
ສົງສານ ກາລີ
ຊ່ວຍນ້ອງນີ້ ອີວາກັນແກ້ຫນາວ

# ອະດີດຮັກ

ອະດີດຍັງຝັງ ຍັງຝັງຢູ່ໃນດວງຈິດ
ຍັງເພີ້ຍັງຄິດ ເຖິງຄວາມຫຼັງເຄີຍຜ່ານມາ
ຍັງຮັກຍັງຫຼົງ ຍັງຄົງຕິດຕຣຶງອຸຣາ
ຫົວໃຈຍັງປາຖນາ ຢາກເຫັນຢາກມາຢູ່ຮຽງຄຽງຂວັນ

ອະດີດຍັງເຕືອນ ຍັງເຕືອນບໍ່ມີວັນໜ່າຍ
ຍັງຄິດຍັງໝາຍ ຫວັງໃຈຕໍ່ສັນຍານັ້ນ
ທີ່ຮັກຄົງຮູ້ ຄົງຮູ້ແກ່ໃຈມານານ
ທີ່ສອງເຮົາແຍກທາງກັນ ດ້ວຍຄວາມກົດດັນຂອງປະເພນີ

ຄົງເປັນເວນກັນ ຊັກນຳດຶງຈ່ອງເຮົາ
ຮັກຈຶ່ງຕ້ອງເສົ້າ ເຜົາທາງຮັກເປັນທຸຣີ
ໂອ ກາມມະເທບ ໃຈຮ້າຍບໍ່ຄິດປານີ
ຮັກກັນໝັ້ນຢູ່ດີໆ ຍັງມີແນວທາງແຍກກັນ

ອະດີດຄວາມຮັກ ຄວາມຮັກເຮົານັ້ນຍັງຢູ່
ຍັງຮັກຍອດຊູ້ ຄູ່ແລ້ວຄາດແຄ້ວຈາກກັນ
ຢ່າລືມຢ່າລືມ ຢ່າລືມຄວາມຫຼັງກ່ອນນັ້ນ
ຮັກຍັງຄົງຢູ່ທຸກວັນ ຮັກຈົນເຖິງວັນ ວັນຈະສິ້ນໃຈ.

# ນ້ອຍໃຈ

ຄິດໆ ແລ້ວຄິດ
ໄຫຊີວິດ ຂອງຄົນ
ເມື່ອເກີດ ມາຈົນ
ຕ້ອງທົນ ສູ້ຄວາມນ້ອຍໃຈ

ຫວັງໆ ຂ້າຫວັງ
ຕັ້ງໃຈຫວັງ ພຽງໃດ
ກໍພັງ ທະລາຍ
ບໍ່ເຄີຍ ສົມໝາຍຈັກທີ

ຫວັງຕໍ່ ຄວາມຮັກ
ຄົນຮັກ ກໍຫ່າງໜີ
ຫວັງສ້າງ ຄວາມດີ
ກໍເກີດມີ ອັນເປັນໄປ

ຄິດໆ ຍິ່ງຄິດ
ຈິດຍິ່ງຄ້ອຍ ນ້ອຍໃຈ
ອີກຈັກ ເມື່ອໃດ
ຈະສົມ ຄວາມໝາຍດັ່ງປອງ.

# ສີທັນດອນ

ພາຍເຮືອ ເລາະຕາມຝັ່ງແມ່ນ້ຳຂອງ
ແສນສຸກໃຈໝາຍປອງ ເມື່ອຍາມລ່ອງເຮືອລົງໄປ
ໄດ້ເຫັນ ໝູ່ດອນຖິ່ນແດນແຂວງໄຕ້
ໄຫຊ່າງງາມວິໄລ ຫາໃດໃສຈະທຽມທັນ

ດອນແດງ ເໝືອນແປງປັ້ນຈາກເມືອງຟ້າ
ແສນທີ່ງາມເຫຼືອຕາ ຕໍ່ນານັ້ນດອນພະກັນ
ໄອດອນເຫຼົາ ເປັນດອນທີ່ງາມເຫຼືອລ້ຳ
ຂ້າຍັງຄິດນ້ອມນຳ ແສນງາມນັ້ນຄືດອນຊຽວ

ດອນນະລອຍ ດອນສັງດອນໄຊ
ຂ້າຍັງຈຳໃສ່ໃຈ ເຫັນດອນພິມານງາມດີ
ໄອນັ້ນດອນໂຂງ ດອນຂາມລົບປະດີ່
ດອນເດດດອນພີ ແສນງາມເຫຼືອທີ່ຈະພັລນາ

ງາມຈິງສິນຄຳ ທີ່ເຂົາກ່າວມາ
ແສນສຸກສິນອຸຣາ ລ່ອງມາໄດ້ເຖິງລີ່ຜີ
ໄດ້ເຫັນໂຄ່ນຫີນ ຕ້ອງແສງສຸຣິ
ປຽບດັ່ງເໝືອນມະນີ ງາມຣືດີໄອສີທັນດອນ.

# ຢ່າບັ້ງຄັບໃຈ

ຢ່າບັງຄັບ　　ບັງຄັບໃຈຄົນເລີຍທ່ານ
ເພາະຄົນນັ້ນ　　ຍຶດໝັ້ນໃຈຄົນເປັນໃຫຼ່
ແມ່ນນິຮັກ　　ກໍຢາກເລືອກເອົາຕາມໃຈ
ບໍ່ວ່າສິ່ງໃດ　　ຫາກພໍໃຈກໍຈຶ່ງຕ້ອງການ

ຢ່າບັງຄັບ　　ບັງຄັບໃຫ້ຄົນຊ້ຳຈິດ
ຢ່າໄປຄິດ　　ຖືສິດເໜືອໃຈຄົນນັ້ນ
ຫົວໃຈນີ້　　ມີສິດເສຣີທົ່ວກັນ
ຈະຄິດຈະຝັນ　　ຈະຮັກໃຜໄດ້ທັງນັ້ນເລີຍ

ຖານະ　　ສັກສີມີອາດຂວາງກັ້ນ
ເມື່ອໃຈຄົນນັ້ນ　　ຮັກກັນແນ່ວແນ່ນ
ແມ່ນຖືກຂັດຂວາງ　　ຄົງຊ້ຳຊອງໃຈເປື່ອຍເປັນແຜ
ຫາກຕາມໃຈ　　ໃຈຄົງສຸກແທ້ ທ່ານເອີຍຢ່າບັງຄັບໃຈ

ຢ່າບັງຄັບ　　ບັງຄັບເຄື່ອງຍົນດີກວ່າ
ປີກນາວາ　　ນັ້ນກໍພໍບັງຄັບໄດ້
ທ່ານຢ່າຄິດ　　ບັງອາດຫຼືບັງຫຼຽນໃຈ
ຈົ່ງຄິດຜ່ອນຄາຍ　　ຢ່າໄປຂວາງຫົວໃຈຄົນເລີຍ.

# ລືມເສັຽເຖີດ

ລືມ ຂໍເຊີນອ້າຍລືມຄວາມຫຼັງ
ລືມ ຄືນເຮົາສາບານສັນຍາ

ລືມ ແມ່ນລືມໄດ້ແລ້ວບອກມາ
ລືມ ໃຫ້ລືມຈົນກວ່າສິ້ນໃຈ

ນ້ອງ ເປັນຍິງຕ້ອຍຕ່ຳ
ເຖິງ ຈະຊ້ຳທົນໄດ້
ຍອມ ຫຼີກທາງໃຫ້ໄປ
ແມ່ນອ້າຍລືມໄດ້ ນ້ອງຂໍຂອບໃຈ ເທົ່າຟ້າ

ລືມ ຂໍໃຫ້ອ້າຍລືມເຖີດໜາ
ລືມ ຊາດນີ້ຊາດໜ້າໃຫ້ລືມ.

# ຫ່າງຮັກ

ຫ່າງກັນພຽງນ້ອຍ ຄອຍແຕ່ເສົ້າເຫງົາໃຈ
ຄົນຮັກຫ່າງໄກ ໂອໃຈເຝົ້າແຕ່ຫ່ວງຫາ
ຄິດເຖິງຄິດເຖິງ ຄິດເຖິງຢູ່ທຸກເວລາ
ໂອປານນີ້ດວງຊີວາ ແກ້ວຕາໄປຢູ່ຫົນໃດ ?

ນັ່ງຫຼືນອນຝັນ ໜໍຈອນຂວັນຄົນດີ
ເຫັນຟ້າປ່ຽນສີ ຢ່ານິທີ່ປອງສອງໃຈ
ທີ່ຮັກທີ່ຮັກ ທີ່ຮັກຄົງບໍ່ລືມໄລ
ຝາກຄວາມຫວັງ ມອບໄວ້ໃຫ້ ຍອດຊາຍຈຶ່ງໄດ້ປານີ

ຍາມໃດ ໄດ້ຢູ່ຮຽງຄຽງຄູ່
ເໝືອນນ້ອງໄດ້ຢູ່ ສວັນວິມານເສັ່ງທີ
ຍາມໃດ ຢູ່ໄກຍອດຂວັນຊີວີ
ດັ່ງໄຟສຸມໃນຮິດີ ດັ່ງຕົກອະເວຈີທັ້ງເປັນ

ຫາກໄດ້ຍິນສຽງ ເພັງທີ່ຮ້ອງສົ່ງໄປ
ຂໍວອນແກ້ວໃຈ ຈົ່ງປະກົດກາຍໃຫ້ເຫັນ
ຢ່າໜີໜ້ານ້ອງ ຂ້ານ້ອງໃຫ້ຕາຍທັ້ງເປັນ
ຫາກແມ່ນອ້າຍໝາຍຫຼີກເວັ້ນ ຂໍໃຫ້ມີເວນຕາມມາ.

# ບໍ່ຮັກຢ່າມາ

ບໍ່ຮັກ ຢ່າມາໃຫ້ເຫັນ
ນ້ອງເປັນ ຜູ້ຍິງຜູ້ຍິງຊື່ໆ
ເອີ່ຍອອກຄຳໃດ ຂໍໃຫ້ເປັນທີ່ນັບຖື
ຂໍໃຫ້ຈຳຈື່ ຢ່າເອົາແຕ່ດື້ ຂູຊີ

ບໍ່ຮັກ ຢ່າມາໃຫ້ຫຼີງ
ອ້າຍຄົງ ເປັນຊາຍຫົວໃຈອາຣີ
ຢ່າຫຼອກຢ່າລອງ ຢ່າຕົວະຢ່າຫຼອກນາຣີ
ຮັກກັນດີໆ ໂລກຈະແຈ່ມສີງາມເດັ່ນ

ຂໍ ຂໍນຳແຫ້ໆ
ນ້ອງຂໍພຽງແຕ່ ຢ່າຜານຫົວໃຈກັນຫຼີ້ນ
ຫຼີບລີ້ນປີ້ນຄວາມ ຂໍນຳຢ່າທຳໃຫ້ເຫັນ
ນ້ອງຂໍຫຼີກເວັ້ນ ບໍ່ຢາກຈອງເວນຜູ້ຊາຍ

ບໍ່ຮັກ ບໍ່ຕ້ອງມາຫາ
ເສັຽເວລາ ອ້າຍມາຫວັງລອຍບໍ່ໄດ້
ຫາກອ້າຍມາດີ ຫວັງດີນ້ອງກໍພໍໃຈ
ນ້ອງຍອມມອບໃຫ້ ທັງໃຈແລະກາຍບໍ່ຫວງ.

# ແພມົນ

ແພມົນຜືນນີ້ ທີ່ເຂົາມອບໃຫ້
ຖັກຮູບຫົວໃຈ ໃຫ້ໄວ້ເປັນອະນຸສອນ
ຈ້ອງມອງ ຄັ້ງໃດຊອນໃຫ້ອາວອນ
ພາບຄວາມຫຼັງກ່ອນ ຫຼອກຫຼອນດວງໃຈ

ດັ່ງມີມົນຂັງ ຝັງໃນຜືນຜ້າ
ຈຶ່ງຄຳນຶງຫາ ເຈົ້າຂອງແຜ່ນຜ້າບໍ່ຫາຍ
ຍິ່ງມອງ ຍິ່ງຊອນໃຫ້ໝອງດວງໃຈ
ເມື່ອເຂົາແໜງໜ່າຍ ປ່ຽນໃຈໄປຈາກເຮົາ

ດວງໃຈຈຶ່ງຊ້ຳ ຣະກຳທຸກຄືນ
ແພມົນຈຶ່ງຊືມ ດ້ວຍຍາດນ້ຳຕາ ອັບເສົາ
ນາງລືມສັນຍາ ສາບານກ່ອນເກົ່າ
ປ່ອຍເຮົາ ເຫງົາໃຈ

ພຽງແພຜືນນີ້ ທີ່ຄົງເຫຼືອຢູ່
ແຕ່ຂາດຍອດຊູ້ ຂ້າຈຶ່ງຕ້ອງຢູ່ດຽວດາຍ
ໂຖ ເຮົາ ຫຼົງເຝົ້າຖນອມງົມງາຍ
ເຖິງເຂົາແໜງໜ່າຍ ແຕ່ໃຈເຮົາໝັ້ນຄົງ.

# ທອງເພາະຮັກ

ຂໍ ຍອມຮັບວ່າ ອ້າຍອິດໃຈ ໄອ້ອີກບໍ່ໄຫວ
ທັ້ງທີ່ນ້ອງລອງໃຈ ແກ້ງໄປ ຄອງຄົນອື່ນມາ
ໄປເອົ້າຄົນນັ້ນ ກະຊິບຄົນນີ້ ມັນກອນສາຍຕາ
ອ້າຍຢາກຈະຂ້າ ຢາກຂ້າ ຢາກຂ້າ ຜູ້ມາຂວາງທາງ

ເຫັນຄູ່ຮັກອື່ນ ຊື່ນຊູໃຈ ຍິ່ງພາໃຫ້ເຫງົາ
ທີ່ຄວາມຮັກຂອງເຮົາ ຕື້ນຕັນ ຄອຍວັນຈືດຈາງ
ຮູ້ໄອ້ ຮູ້ໄອ້ ນ້ອງເຮັດແບບນັ້ນ ໃຈອ້າຍແຄ້ນຄາ
ມັນອາດຈະພາດ ມັນອາດຈະພັ້ງ ເມື່ອນາງຫຼອນໃຈ

ທັ້ງໆ ທີ່ຮູ້ ວ່າລອງໃຈກັນ
ແຕ່ເຮັດຈັ່ງຊັ້ນ ອ້າຍທົນ ນ້ອຍໃຈບໍ່ໄດ້
ຂືນປ່ອຍ ອ້າຍທົນ ອີກຕໍ່ໄປ
ອ້າຍຄົງ ຊ້ຳຕາຍ ດ້ອຍຄວາມຫວງ

ນ້ອງກໍຮູ້ວ່າ ອ້າຍຮັກນາງ ຮັກຍິ່ງສິ່ງໃດ
ຮັກນາງເຫຼືອດວງໃຈ ບໍ່ເຄີຍ ຄິດວ່າຈະລອງ
ເຫດນີ້ຈຶ່ງຫ່ວງ ດ້ອຍຮັກຈຶ່ງຫວງ ຈຶ່ງຫວງຈຶ່ງຫ່ວງ
ບໍ່ໃຫ້ໃຜລ່ວງ ບໍ່ໃຫ້ໃຜລວງ ກີດຂວາງດວງໃຈ.

# ຢ່າກຽດກັນ

ຍອດຮັກຂອງອ້າຍ ທາງຮັກຂອງເຮົາ ນີອຸປສັກເສັ້ງແລ້ວ
ແຕ່... ເຖິງນ້ອງຈະປ່ຽນໃຈຈາກອ້າຍ ກໍຕາມເຖີດ
ອ້າຍທົນຕໍ່ຄວາມຊ້ຳນັ້ນໄດ້ ຂໍສິ່ງດຽວ...
ນ້ອງຈົ່ງໃຫ້ຄວາມເປັນມິດແກ່ອ້າຍ... ກໍພໍ

ເຖິງແມ່ນຕັດຮັກ ກໍຢ່າກຽດກັນ
ເຖິງຕັດສັມພັນ ຂໍຢ່າແໜງໜ່າຍ
ໃຫ້ຄວາມເປັນມິດ ສນິດແໜ້ນ
ໃຫ້ຄວາມລື້ງແກ່ນຕໍ່ກັນໄວ້ ເພາະຍັງໄດ້ຢູ່ໂລກດຽວກັນ

ເຖິງແມ່ນຕັດຮັກ ກໍຢ່າປະນາມ
ຂໍຢ່າໄດ້ທຳ ໃຫ້ໃຈຂ້າຫວັ່ນ
ຢູ່ຢ່າງເປັນມິດ ກັນດີກວ່າ
ຂືນນິວເຄືອງໂກດຕໍ່ກັນນັ້ນ ຄົງຕຣົມໂສກສັນຕະລອດຕາຍ

ບາງທີ ວັນນຶ່ງເຂົ້າໃຈກັນ
ວັນນຶ່ງ ເກີດສົງສານ
ວັນນັ້ນຄົງອາຍ ຄິດຈະຮັກຄືນຄົງເກງໃຈ
ແໜງສູ້ເປັນມິດຕໍ່ກັນໄວ້ ດີກວ່າຈະກຽດຊັງ

ສູນສິ້ນຄວາມຮັກ ກໍຢ່າໃຈດຳ
ຂໍຢ່າສ້າງກັນ ໄວ້ເປັນຮອຍດ່າງ
ປ່ອຍຄວາມເຈັບແຄ້ນ ໃຫ້ສິ້ນສຸດ
ທົວໃຈຈົ່ງຢຸດຢ່າເມີນໜາງ ແມ່ນຊີບຂາດຍັງ ກໍຢ່າກຽດກັນ

# ສຽງຄວນຈາກຊາຍຈົນ

ຕົວຂ້າອັບຈົນ ຕ້ອງທົນຝືນໃຈ
ຈະຝາກຮັກໃຜ ກໍເກງທົວໃຈ ເຈັບຊ້ຳ
ຂ້າເກງແຕ່ຍິງ ວ່າຈົນຕ້ອຍຕ່ຳ
ເກງຍິງຈະປະນາມ ຢຽດຫຍາມໃຫ້ອາຍ

ຈຶ່ງຫ້າມຫັກຄວາມ ຮັກທີ່ມີຂຶ້ນ
ໂສກຕຣົມທົນຝືນ ເຝົ້າກືນນ້ຳຕາຕົກໃນ
ຄິດວ່າຈັກວັນ ຍິງຄົງເຫັນໃຈ
ຮັກຄົນຈົນໆໄວ້ ເປັນຄູ່ສເນຫາ

ແລ້ວ ຂ້ານີ້ຈະມອບຈິດ
ຈະອຸທິດ ຮັກໃຫ້ຈົນໝົດອຸຣາ
ຈະສ້າງຕົວ ເພື່ອຍິງທີ່ກະຣຸນາ
ໃຫ້ຄວາມຮັກຢ່າງເມດຕາ ຮັກຂ້າຈາກໃຈຈິງ

ມີໃຜຈັກຄົນ ຄິດເຫັນໃຈຂ້າ
ທີ່ລໍຄອຍຫາ ສັດຫາຮັກແທ້ຈາກຍິງ
ແມ່ນມີ ຂ້າຍອມມອບທຸກໆສິ່ງ
ຂໍພຽງແຕ່ຍອດຍິງ ຢ່າລວງໃຫ້ຕຣົມ.

# ຫາດຊາຍແດນງາມ

ສຸຣິຍາ ຕ່ຳຄ້ອຍລົງແລງ
ສາດສ່ອງແສງ ສີທອງອາຣ່າມ
ນອນນົກກາກໍບິນ ເຫີນຫາຖິ່ນ ເມື່ອຈອນຄ່ຳ
ນອງດູແສນງາມ ໜັກໜາ

ຫາດຊາຍງາມ ຕ່ຳຄ້ອຍຊອນທ່ຽວ
ເມື່ອແລຫຼຽວ ວິລັຍສງ່າ
ດັ່ງເທບລົງເສກສັນ ຄູ່ວຽງຈັນຕະລອດມາ
ປວງຊົນກໍພາ ກັນລົງທ່ຽວ

ເດີນເລາະຕາມ ແດນຝັ່ງຫາດຊາຍ
ໜຸ່ມສາວນ້ອຍໃຫຍ່ ຕ່າງກໍສຸກໃຈຢູ່ໃນດອນຊຽວ
ສາຍລົມ ໂຊຍພັດຟອງ ສະບັດເປັນກຽວ
ນ້ຳຂອງໄຫຼລ້ຽວ ໄຫຼໄປສຸດຕາ

ເບິ່ງແສງທອງ ຕ້ອງຜືນນະທີ
ຫຼາກເປັນສີ ສູນໃນໃຈຂ້າ
ຈອນຄ່ຳລົງເທົ່າໃດ ໃຈຂ້າຍັງບໍ່ຢາກມາ
ແຕ່ຈຳຝືນລາ ຫາດຊາຍງາມ.

# ໑໒ ສີຮັກຈາກສາຍຕາ

ເມື່ອຕາສອງຕາ ນອງຈ້ອງກັນ
ປຽບປານ ຕອນຮັກປັກຕິດຕຶງ
ຍິ່ງນອງຍິ່ງງິງ ຫຼົງຕະລຶງ
ສວັນຊາບຊຶ້ງ ເໝືອນນ້ຳເຜີ້ງຍົດຍ້ອຍ

ເນດຄົນຄູ່ນັ້ນ ດູເດັ້ນງາມ
ເມື່ອຍາມນອງຄ້ອນ ອ່ອນຊ້ອຍ
ເຝົ້າຫຼົງຕິດຕາມ ຕັ້ງຕາຄອຍ
ຫົວໃຈເລື່ອນລອຍ ຄອຍນ້ອງນອງສິ່ງຕາ

ໃຈ ໝາຍໝັ້ນ
ຜູກສຳພັນ ຢູ່ທຸກວັນເວລາ
ຄວາມຮັກ ເກີດຈາກສາຍຕາ
ເປັນຊື່ສັດທາ ຈ້ອງນອງກັນເລື້ອຍໄປ

ເຮົາສອງນັ້ນຄົງ ໄດ້ຮ່ວມກັນ
ບຸເພສັນນິວາດ ສ້າງໄວ້
ສົ່ງຍິ້ມໃຫ້ ແທນຄຳທັກທາຍ
ເປີດເຜີຍຄວາມໃນ ກັນດ້ວຍສີສາຍຕາ.

# ກຸຫຼາບນາຊາຍທອງ

ໂອ ສາວນາຊາຍທອງ　　ນ້ອງເປັນດອກໄມ້ປ່າ
ງາມສງ່າ　　ຊາບຊຶ້ງຮືທັຍ
ສາຍຕາ　　ຄົມຂ່າບາດໃນທົ່ວໃຈ
ກິຣິຍາອ່ອນໄຫວ　　ນ້ອງເປັນຂວັນໃຈຂອງໃຜແລ້ວນາ

ໂອ ສາວນາຊາຍທອງ　　ຜິວຂາວງາມຜຸດຜ່ອງ
ຂໍຮັກນ້ອງ　　ຮັກສາວບ້ານນາ
ສາຍໃຈ　　ໝາຍໄວ້ແນບໃນອຸຣາ
ຈາກວຽງຈັນຊອກຫາ　　ອ້າຍດັ້ນດົ້ນມາ ເພື່ອຫວັງໄມຕຣີ

ໂອ ນວນນ້ອງເອີຍ　　ຢ່າເລີຍຢ່າຕັດໄມຕຣີ
ອ້າຍຂໍຝາກຊີວີ　　ຝາກຄວາມຫວັງດີກັບນາຊາຍທອງ
ຍາມເຊົ້າ　　ອ້າຍຈະໄປໄຖນາ
ພໍຕົກແລງມາ　　ອ້າຍຈະຫາປານາໃຫ້ນ້ອງ

ໂອ ສາວນາຊາຍທອງ　　ຂໍນ້ອງຈົ່ງເອັນດູ
ໃຫ້ອ້າຍຢູ່　　ເປັນຄູ່ຄຽງຄອງ
ນ້ອງເອີຍ　　ຂໍຈົ່ງໄດ້ຮັບອາຈາ
ອ້າຍຈະມາສູ່ຂໍ　　ຕາມປະເພນີ ນ້ອງຈົ່ງເຫັນໃຈ.

# ອີກນາທີດຽວ

ອີກນາທີດຽວ ອີກນາທີດຽວ ພຽງເທົ່ານັ້ນ
ຈະຈາກພາກກັນ ຈິດຕື້ນຕັນ ຫວັ່ນດວງຫືທັຍ
ສຸດແຂງໃຈຂື່ນ ຍັງຕຣອມຕຣົມ ຣະທົມອາລັຍ
ສຸດຄິດຫ່ວງໃຍ ບໍ່ຢາກໄປ ໄກນ້ຶງຂວັນ

ຢາກຫ້າມເວລາ ຢາກຫ້າມໂລກາ ໃຫ້ຢຸດໝູນ
ເກງຈະສິ້ນສູນ ຄວາມລະມຸນ ອຸ່ນອາຍສຸກສັນ
ຫວັ່ນນ້ອງມີໃໝ່ ປ່ຽນດວງໃຈ ຫ່າງໄປໄກກັນ
ຈະຊ້ຳຈາບັນ ຫາກສຳພັນນັ້ນ ສິ້ນໄປ

ເຫັນ ພຽງໃບໜ້າ
ຍິ້ມສັ່ງລາ ນາທີສຸດທ້າຍ
ນີ້ນ້ອງ ແກວ່ງໄກວ
ດັ່ງເຕືອນໃຫ້ ອ້າຍຢ່າລືມສັນຍາ

ຫ່າງໄກຫ່າງກັນ ຫ່າງໄກຫ່າງກັນ ໃຈຝາກຝັງ
ເຖິງແຜ່ນຟ້າບັງ ໃຈອ້າຍຍັງ ດັ່ງຈັນຄູ່ຟ້າ
ຈະຄິດຝັນໄຝ່ ພຽງດວງໃຈ ເຖິງໄກສຸດຕາ
ຈະຫວັງຕັ້ງໜ້າ ບໍ່ລືມລາ ແກ້ວຕານາງ.

# ປາແດກກິ້ນໄຫ

ໂອ ປາແດກຕ່ອນກາງ
ເຂົາກິນເຫຼືອແຕ່ຮ່າງ ເຫຼືອພຽງແຕ່ກ້າງຄ້າງຄາ
ສິ້ນສູນທຸກຢ່າງ ເຫຼືອພຽງກ້າງປັກຝັງອຸຣາ
ເຖິງເຈົ້າຈະສູນຣາຄາ ອ້າຍຍັງໄຝ່ຫານ້ອງນາງ

ໂອ ປາແດກກິ້ນໄຫ
ເຂົາເບື່ອນ້ອງໄປໄດ້ ເຫັນໃຈອ້າຍເຖີດນ້ອງນາງ
ຢ່ານຶກຝັນໄຝ່ ຫຼົງລືມໄດ້ຄືນເຂົາຫຼອກນາງ
ຮັກອ້າຍບໍ່ມີຈືດຈາງ ຍັງລໍຄອານຫວັງພຽງນາງຜູ້ດຽວ

ເຖິງ ມີພຽງກ້າງ ອ້າຍຍັງແຫນຫວງ
ເຈົ້າເຄີຍຖືກຄົນເຂົາລອງ ອ້າຍຍັງເຝົ້າຫວງນອນນ້ອງ
ຮັກອ້າຍຍັງຢູ່ ຫວັງເປັນເນື້ອຄູ່ຢູ່ຄຽງຄອງ
ບໍ່ແມ່ນອ້າຍຢາກມາລອງ ອ້າຍຫວັງປອງນ້ອງນາງດັ້ງໝາຍ

ໂອ ປາແດກກິ້ນໄຫ
ຝາລະໄງເຈົ້າເປີດ ເຈົ້າຍັງປະເສີດເລີດອີລັຍ
ຮັກອ້າຍຍັງຢູ່ ຫວັງເປັນເນື້ອຄູ່ຢູ່ສອງຄອງໃຈ
ຂໍຢູ່ເປັນຄູ່ແນບກາຍ ອ້າຍຍັງທົນໄຫວດ້ອຍໃຈຮັກໝັ້ນ.

# ແສບຊວງ

ເຈັບຊ້ຳໃນໃຈ ເໝືອນໄຟສຸມແສກແສບຊວງຈິງໜໍ
ເຂົາລວງເຂົາລໍ້ ໃຫ້ຕາຍໃຈນຳ
ພໍສິນໃຈແລ້ວ ເລີຍຖິ້ມ ເຂົາຊິນຈິນເສັ່ງຄວາມງາມ
ກໍກັນທຳເຂັນ ໄອ້ໃຫ້

ນີ້ຫຼືສັນຍາ ສາບານຂອງຄົນ ສຸດທົນທານເຫຼືອ
ປົນເຈືອຢາພິດ ຝັງແໜ້ນພາຍໃນ
ເງິນລ້ານເງິນແສນ ນອບໃຫ້ ເລົ້າໂລມໂອບອ້ອນເອົາໃຈ
ແລ້ວດ້ອຍເຫດໃດ ຈຶ່ງລືມໄດ້ລົງ ?

ຄົງເປັນເພາະນ້ອງ ສິ້ນສາວສິ້ນສວຍເສັ່ງໂສມ
ສິ້ນຣົດນິຍົມ ຈຶ່ງຫາໃໝ່ຊົມໄສສິ່ງ
ພະຍາແຖນເອີຍ ນັ່ງເສີຍເລີຍໜໍພະອົງ
ແຫຼກໝົດແລ້ວເຂົາເອົາມາສິ່ງ ເຫຼືອແຕ່ໂຄງຄວາມຮັກໜ້າຊັງ

ລູກຂໍອຸທອນ ສານຂອງພຣະພຣົມ ອີກຍົມມະນາ
ຟ້ອງຖານເຂັ້ນຂ້າ ຫົວໃຈຈິນພັງ
ໃຫ້ສານຕັດສິນລົງໂທດ ຄະດີທັ່ງມໂທດເຖິງຊີວັງ
ຫຼືທວນກັບຫຼັງ ບ່ອນເຄີຍໄດ້ຊື່ນ.

# ຫົວໃຈຊີຂາດ

ຫົວໃຈຮອນຊີຂາດ ແລ້ວເອີຍ
ຮັກເຫຼືອຈະເອີ່ຍ ໃຫ້ນ້ອງໄດ້ຟັງຄຳຂາດ
ຄ່ຳຄືນໄຝ່ຝັນ ອານາດ
ກິນເດີນນັ່ງເຫັນຮູບພາບ ລອຍອາດ ຢູ່ທຸກນາທີ

ສາຍຕາເຫັນແລ້ວອງ ທຸກວັນ
ສັມພັນໃຈຢູ່ ບໍ່ຮູ້ລືມເລືອນຈັກທີ
ຢາກໃຫ້ຄວາມຝັນ ເປັນຈິງ
ຢູ່ແນບແອບຂວັນນອນອີງ ຄຽງຄູ່ສູ່ສົມໃຫ້ສົມໃຈ

ອິນພົມ ຍົມນະນາ
ຈົ່ງເຫັນໃຈຂ້າ ຮັກນາດັ່ງໝາຍ
ສຽງເພັງຮ້ອງນີ້ ອອກຈາກໃຈ
ຮັກແທ້ຮັກນາງເຫຼືອສິ່ງໃດ ໄດ້ໂປຣດຟັງໄວ້ຢ່າລືມ

ສຽງເພັງດັ່ງອ້ອຍອີ່ນ ຍາມໃດ
ນັ້ນຄືສຽງຈົ່ມ ຈາກຄົ້ວຫົວໃຈດູດດືມ
ຢ່າລືມວ່າໃຜ ຜູ້ນຶ່ງ
ເຝົ້າຫຼິງພ່ຳເພີ້ລຳພຶງ ຂໍໃຫ້ຈອນຂວັນຈົ່ງເຫັນໃຈ.

# ແຄມຝັ່ງເຊວັ້ນ

ນະແຄມຝັ່ງ ເຊວັນແຫ່ງນັ້ນເອີຍ
ຂ້ານີ້ເຄີຍ ໄດ້ຢູ່ຄູ່ອາສັຍ
ຕອນຕິດຕາມ ສັດຕູຢູ່ຖິ່ນແດນໄຕ້
ຂ້າອາສັຍ ແຄມເຊວັນນັ້ນພັກນອນ

ໂລກກວ້າງໃຫຍ່ ແລໄປສຸດສາຍຕາ
ເບິ່ງແລ້ວພາ ໃຈເສົ້າໂສກອາວອນ
ຫວນຄິດເຖິງ ວຽງຈັນໃຈສັ່ນສະທ້ອນ
ຄິດເຖິງນ້ອງ ແມ່ງາມງອນອ່ອນຣືທັຍ

ສຸຣິໂຍ ອ່ອຍລົງລັບດົງໜາ
ເຫັນນົກກາບິນຄືນຮັງ ຂ້າຊ່າງນ້ອຍໃຈ
ຢາກຈະຫວນກັບຄືນ ສູ່ເຄຫານ້ຳຕາຕົກໃນ
ແຕ່ຈົນໃຈ ເພາະໄດ້ມີໜ້າທີ່ສຳຄັນ

ຂ້າເສີຍບຸກ ສັດຕູຢ່າງກ້າຕາຍ
ດ້ອຍແຄ້ນໃຈ ທີ່ໄດ້ພາກຈອນຂວັນ
ພໍສັດຕູ ແຕກໄປຈຶ່ງໄດ້ກັບທັນ
ຂ້າລາແລ້ວ ແຄມເຊວັນແຫ່ງນັ້ນເອີຍ.

# ຂາດນາງ

ບໍ່ຢາກໄດ້ເງິນ ບໍ່ຢາກໄດ້ທອງ
ແຕ່ຢາກໄດ້ນ້ອງ ນານອນແນບຂ້າງ
ຈະຕິງໄປໃສ ບໍ່ໃຫ້ເຫີນຫ່າງ
ມີອ້າຍມີນາງ ຕລອດເອລາ

ຢູ່ຍ່ອງຢ່ອງໃຈ ຜູ້ໃດບໍ່ເຫັນ
ຄ່ຳຄືນເຊົ້າເຢັນ ເໝືອນເປັນຄົນບ້າ
ຂາດຄູ່ຄຽງໝອນ ຍາມນອນນິທຣາ
ຢາກໄດ້ແກ້ວຕາ ມາເປັນເພື່ອນໃຈ

ຍາມນອນ ກໍນອນບໍ່ຫຼັບ
ຫົວໃຈແລະຕັບ ມັນສັ່ນມັນສາຍ
ຢ້ານໂຊຢ້ານເຈັບ ຢ້ານຕາຍ
ຍ້ອນຢ້ານບໍ່ໄດ້ ສາຍໃຈມາກອດນອນ

ບໍ່ຢາກມີເງິນ ບໍ່ຢາກມີຄຳ
ຢາກມີງານຂຳ ທຸກຍາມເຂົ້າບ່ອນ
ບໍ່ມີເຂົ້າກິນ ບໍ່ເຫັນອາວອນ
ບໍ່ເຄີຍເດືອດຮ້ອນ ເທົ່ານອນຂາດນາງ ຂາດນາງໆໆ.

# ປາກຝາກຄວາມຮັກ

ປາກຝາກຄວາມຮັກ ແກ່ນາງ
ຫົວໃຈອ້າຍຊ່າງ ຕື່ນຕັນໄຫວຫວັ່ນສະທ້ານ
ເໝືອນດັ່ງມົນຕາຟ້າລັ່ນ ຄອຍເຝົ້າຈະເອົາໂທດທັນ
ນາຄອຍກາງກັ້ນ ຫົວໃຈບໍ່ວາຍ

ຍິ່ງນອງຍິ່ງສວຍ ຍິ່ງງາມ
ສົນຊື່ສົນນານ ຄົນງາມມີຄູ່ຫຼືໃດ ?
ໄດ້ແຕ່ນອງໆຂວັນໃຈ ຈິດອ້າຍຫວັ່ນໄຫວໝາຍປອງ
ສເນນອນນ້ອງນາງ ຝັງໃຈອ້າຍນີ້ ບໍ່ເລືອນ

ເໝືອນຟ້າ ປະທັບດວງໃຈ
ຈະຫາຍິງໃດ ງາມນໍ້າໃຈບໍ່ມີເໝືອນ
ປາຖນາ ຂວັນຕານ້ອງມາເປັນເພື່ອນ
ຮ່ວມຊີວີ ຄົນດີທີ່ອ້າຍໝາຍໃຈ

ປາກຝາກຄວາມຮັກ ກັບສຽງເພັງ
ອ້າຍຈະບັນເລງ ເປັນເພັງຮັກຈາກດວງໃຈ
ແມ່ນນ້ອງໄດ້ຍິນຄັ້ງໃດ ຈົ່ງໄດ້ເຂົ້າໃຈເສັ່ງທີ
ຕຣາບຊົ່ວຊີວີ ອ້າຍຮັກນ້ອງນີ້ນາງດຽວ.

# ບໍ່ເຄີຍ

ບໍ່ເຄີຍໆ ໄດ້ແຕ່ງງານ
ຕັ້ງແຕ່ເກີດມາ ອາຍຸສາມສິບເອັດ
ມີລູກຕັ້ງເຈັດ ມີເມັຽກໍແສນນານ
ແຕ່ຂ້າບໍ່ເຄີຍ ບໍ່ເຄີຍໄດ້ແຕ່ງງານ
ເພາະໜີຕາມກັນ ງານອີອາເລີຍບໍ່ມີ

ບໍ່ເຄີຍ ບໍ່ເຄີຍ ບໍ່ເຄີຍເປັນເສດຖີ
ພໍ່ຂ້າຖືກຫວຍ ເລີຍລ່ຳລອຍເງິນລ້ານ
ຊື້ນາຊື້ບ້ານ ຊື້ໂຮງງານໂຮງສີ
ແຕ່ຂ້າບໍ່ເຄີຍ ບໍ່ເຄີຍເປັນເສດຖີ
ໝູນເງິນບໍ່ດີ ເງິນທີ່ມີເລີຍໝົດໄປ

ບໍ່ເຄີຍ ບໍ່ເຄີຍ ບໍ່ເຄີຍສົດຊື່ນໃຈ
ພໍ່ໝົດເງິນທອງ ເລີຍຕ້ອງນັ່ງໜ້າເສົ້າ
ທົ່ວໃຈແສນເສົ້າ ຄິດມານ້ຳຕາຕົກໃນ
ເສັຽເສັ້ນຈິງໜໍ ຂ້າບໍ່ເຄີຍຈະດີໃຈ
ຢາກຜູກຄໍຕາຍ ຢ້ານເມັຽເປັນໝ້າຍເລີຍທົນເອົາ

ບໍ່ເຄີຍ ບໍ່ເຄີຍ ບໍ່ເຄີຍຂີ່ເຮືອບິນ
ພໍ່ຂື້ນໄປນັ່ງ ສຽງຍິນດັງໃບພັດປີ່ນ
ຍິນຂື້ນເສັດສິ້ນ ຂ້າກໍເປັນອິນຈີນໜ້າຂາວ
ເພາະຂ້າບໍ່ເຄີຍ ຂີ່ເລີຍຂ້າຈຶ່ງເມົາ
ພໍ່ຍິນຈອດເຊົາ ຟ້າວເອົາຂອງເກົ່າໄປເທ

ບໍ່ເຄີຍ ບໍ່ເຄີຍ ບໍ່ເຄີຍທ່ຽວໂລເລ
ພໍ່ເບີກເງິນເດືອນ ເພື່ອນເລີຍຊວນກິນເຫຼົ້າປຸກ
ກິນແລ້ວໄປບຸກ ບຸກຈົນເດີນໂຊເຊ
ຍ້ອນເຫຼົ້າດອກໜາ ຂ້າຈຶ່ງທ່ຽວໂລເລ
ຕ້ອງເດີນຂາເຄ ເພາະສິ່ງໂລເລອາໃສເຮົາ.

# ມັສໂປເຕໂຕ

ມັສໂປເຕໂຕ ....
ມັສໂປເຕໂຕ ....
ມັສໂປເຕໂຕ ....

ຄ່ຳຄືນອັນນີ້ ຂ້ານີ້ສຸກຫລັກ
ຈິດໃຈຄຶກຄັກ ຊັກພາເຕັ້ນຕື່ນ
ດົນຕຣີບັນເລງ ຄື້ນເພັງຕະລອດຄືນ
ຊີວິດຈະຍືນ ຍາວນານພັນປີ

ເຖົ້າແກ່ແລະສາວ ລື້ນເລີງເບີກບານ
ຍັ້ງຍືນສະຖານ ວິມານເຕັນທີ່
ຟັງເພັງເບົາໆ ແຖມເຫຼົ້າຢ່າງດີ
ສວັນແຫ່ງນີ້ ໃສນີປຽບປານ

ເພີນກັບສຽງ ສຽງເພັງອັນເຢົ້າໃຈ
ປອງເທົ່າໃດ ຍິ່ງພາໃຈໄຝ່ຝັນ
ຈັ່ງອະເພັງ potatoe potetoe ສຸກສຳລານ
ສນຸກສນານ ຕ່າງຟ້ອນກັນ ຕາມແບບນີ້

ບາງຄົນກໍຟ້ອນ Mashed ແນວແປກຫລັກ
ບາງຄົນກໍຊັກ ຊັກຈົນຕາຕື່
ຟັງເພັງເພີນໃຈ ລືມຮ້າຍໄດ້ດີ
ຄວາມທຸກທີ່ມີ ຫາຍໄປໝົດເລີຍ.

# ຮ້ອນໃນ

ໂອະ ໆ ໆ ຮ້ອນໃນຈິດ
ເຝົ້າແຕ່ຄິດ ຈົນອ່ອນໃຈ
ທັ້ງໆທີ່ເປັນຍາມໜາວ ແຕ່ຂ້າຍັງຮ້ອນໃນ
ບະ ຮ້ອນຢ່າງໃດກັນ

ໂອະ ໆ ໆ ຮ້ອນເຕັມທີ່
ດັ່ງອັກຄີ ໄໝ້ເຜົາຜານ
ຄິດໆຍິ່ງພາປອດໃຈ ສຸດຮ້ອນໃນດວງມານ
ຮ້ອນແທບທານ ທົນບໍ່ໄຫວ

ເຖິງນັ່ງແຮງຮ້ອນ ຈະນອນຍິ່ງ ຊັກໆ
ອາບນ້ຳບໍ່ເຊົາ ໂອະໆເອົ້າຈະຕາຍ
ຄົງເປັນເພາະຮັກໜີໜ້າ ຂ້າຈຶ່ງເກີດຮ້ອນໃນ
ຮ້ອນໃນ ເຫຼືອດີ

ໂອະ ໆ ໆ ຮ້ອນໃນຈິດ
ຊ່ວຍດັບພິດ ຮ້ອນໃຫ້ທີ
ຈະທົດຈະແທນບຸນຄຸນ ຈະຄ້ຳຈູນນານປີ
ແມ່ນຮ້ອນນີ້ ຫາຍຈາກໃຈ.

# ຫຼົງຮັກເມັງເຂົາ

ວັນນີ້ໂຊກດີ ພົບນາຣີ ນຶ່ງນັ້ນ
ໂສພາຜ່ອງພັນ ຍິ່ງກວ່າຈັນວັນເພັນ

ນ້ອງງາມບາດໃຈ ເທວາອົງໃດສ້າງສັນນ້ອງມາ
ໃຫ້ບັນດານ ດັ່ງດາຣາ ຢາດຟ້າມາດິນ
ຜິວຜ່ອງໃສ ຄ້າຍກັບນິນ
ເນື້ອກາຍຫອມກິ່ນ ດັ່ງບຸຜາສວັນ

ຍິງໃນໂລກນີ້ ຫາໃດຈະມີຫຼຽບຫຼຽມແກ້ວຕາ
ອ້າຍຈິ່ງຫຼົງ ຕິດຕາມມາຜູກມິດສຳພັນ
ຫຼົງຮັກນາງ ແຕ່ວັນນັ້ນ
ບໍ່ໄດ້ພົບພານ ອ້າຍແທບສິ້ນຊີວັນ

ແຕ່ພໍພົບນາງ ມາກັບຊາຍແສນງາມ
ອ້າຍເຂົ້າໄປຖາມ ນຶກວ່າອ້າຍຂອງນາງ
ນ້ອງຕອບໃຫ້ອ້າຍ ໃບໜ້າຈືດຈາງ
ນີ້ຄືຜົວນາງ ອ້າຍເກືອບເປັນລົມ

ໂອຍ ອາຍຍິ່ງລ້ຳ ທັງເຈັບທັງຊ້ຳ ທົ່ວໃຈໜອງຕຣົມ
ເປີດເຂົ້າບາຣ໌ ດື່ມສຸຣາໃຫ້ຫາຍຣະທົມ
ນ້ອຍບໍ່ນານ ກໍສຸກສົມ
ເພາະດັບອາຣົມ ດ້ວຍຈັ່ງວະຫວິສ໌.

# ສຽງສັ່ງຄືນຊໍ້າ

ສຽງນີ້ສັ່ງ ຈາກຄືນຊໍ້າໃນ
ຈາກຄືນປອດຮ້າວດວງໃຈ ຈາກຣືທັຍຄືນເສົ້າ
ຂໍສັ່ງລາ ດ້ວຍຄວາມຫງອຍເຫງົາ
ເມື່ອນ້ອງລືມຄືນຮັກເກົ່າ ປ່ອຍຮັກເຮົາສລາຍ

ສຽງນີ້ສຸດ ຈິ່ງຢຸດຮັກພະລັນ
ຈົ່ງລືມຖ້ອຍຄຳສາບານ ຕັດສຳພັນທີ່ໃຫ້
ລືມສິ້ນເສັຽ ສັນຍາຈາກໃຈ
ຢ່າເຫັນກັນຈົນວັນຕາຍ ເກີດຊາດໃດ ໄກຫ່າງກັນ

ນ້ອງ ເປັນຍິງຫຼາຍໃຈ
ຝືນຮັກອີກຕໍ່ໄປ ຄົງຕາຍດ້ວຍຄວາມໂສກສັນ
ສາບຮັກເຮົາ ໄວ້ພຽງເທົ່ານັ້ນ
ຢ່າຄິດອາລັຍຕໍ່ກັນ ແຕ່ວັນນີ້ໄປ

ຂໍລາຫ່າງ ຈາກຄືນລໍ້ລວງ
ຕັດຮັກສາບແລ້ວທັງປວງ ຢ່າຊໍ້າຊວງຄືນໄດ້
ສູນສິ້ນຮັກ ຂ້າຄົງບໍ່ຕາຍ
ແຕ່ຖ້າຍັງຮັກກັນໄປ ຄົງຊໍ້າໃນຕາຍກ່ອນເອີຍ.

# ລືມນ້ອງບໍ່ໄດ້

ບໍ່ອາດຈະລືມ　　ຈະລືມນ້ອງລົງ ຊົ່ວຊີວິດນີ້
ເຖິງນ້ອງຈະມີ　　ຄູ່ຄອງຄົນໃໝ່
ເຖິງນ້ອງຈະຊັງອ້າຍກ່ອນ　　ເຖິງນ້ອງຈະຖອນຫົວໃຈ
ແຕ່ອ້າຍກໍ　　ລືມນ້ອງບໍ່ລົງ

ບໍ່ອາດຈະລືມ　　ຈະລືມນ້ອງເລີຍ ດ້ອຍເຄີຍຮ່ວມຮັກ
ພາບນັ້ນສະລັກ　　ຝັງໃຈໝັ້ນຄົງ
ອ້າຍນີ້ສຸດແສນອາວອນ　　ນັ່ງນອນຫຼັບໄຫຼໃຈພະວົງ
ເຝົ້າຫ່ວງອະນົງ　　ທຸກໆໂມງຍາມ

ຈະໃຫ້ລືມນ້ອງ　　ລືມນ້ອງອ້າຍລືມບໍ່ໄດ້
ຈະປວດຫົວໃຈ　　ຈະເຈັບຊ້ຳໃຈພຽງໃດກໍຕາມ
ດ້ອຍວ່າຮອຍຍິ້ມຍັງຝັງຈິດ　　ດ້ອຍວ່າຍັງຄິດເຖິງນ້ຳຄຳ
ທີ່ນ້ອງເຄີຍພ້ຳ　　ອອດອ້ອນຫວານໆ

ຜິດອີກຜິດໃຈ　　ສິ່ງໃດນໍນາງ ຈຶ່ງຈາງຮັກອ້າຍ
ທັ້ງໆທີ່ໃຈ　　ອ້າຍຍັງຮັກໝັ້ນ
ດຽວນີ້ສຸກສົມຫຼືໃດ　　ຫຼືນາງເສົ້າໃຈທໍຣະມານ
ຫາກຈະກັບທັນ　　ອ້າຍຍັງຄອຍຢູ່.

# ວິເສດປານໃດ ?

ວິເສດປານໃດ ຫົວໃຈຜູ້ຍິງ ?
ນ້ອງລືມທຸກສິ່ງ ເສັ້ຽແລ້ວຫຼືນີ້
ລືມທັ້ງອາຈາ ທີ່ໃຫ້ຕໍ່ກັນ
ລືມຄວາມສຳພັນ ລືມກັນແລ້ວຫຼືດວງໃຈ

ວິເສດປານໃດ ຫົວໃຈເຈົ້ານັ້ນ ?
ຕັດຮັກສະບັ້ນ ບໍ່ເຫຼືອເຍື້ອໃຍ
ປ່ອຍໃຫ້ອ້າຍຕຣົມ ຣະທົມດຽວດາຍ
ຄວາມຫວັງທະລາຍ ລືມກາຍລືມໃຈໂສກຕຣົມ

ຫຼາຍປີ ທີ່ຜ່ານໄປນັ້ນ
ເໝືອນເປັນ ຄວາມຝັນຣະທົມ
ຫຼົງຮັກຫຼົງປອງ ປ່ອຍໃຫ້ຂື່ນຂົມ
ຫຼົງຫວັງຊື່ນຊົມ ຮັກແທ້ຈາກໃຈ

ວິເສດປານໃດ ຫົວໃຈເຈົ້ານີ້ ?
ຊາດໜ້າຖ້າມີ ຂໍພົບນ້ອງໃໝ່
ຊາດນີ້ມີກັນ ຕ້ອງຈຳຈາກໄປ
ເພາະອ້າຍເປັນຊາຍ ເປັນຊາຍໃຈຊື່ເກີນໄປ.

# ສົມຣົດສົມຮັກ

ເມື່ອທ່ານທັງສອງ ສົມປອງໝາຍໝັ້ນກັນແລ້ວ
ຫວັງເປັນພືວທີບເມັຽແກ້ວ ແນ່ແລ້ວພົບຄວາມສຸກສັນ
ຫວັງມອບຊີວິດ ຈິດໃຈໄວ້ອີກດຽວກັນ
ຕ່າງກໍສັດທາຍຶດໝັ້ນ ໄຝ່ຝັນເຖິງວັນວິວາ

ພໍ່ແມ່ຍາດມິດ ຕ່າງຄິດຕໍ່ເຕີມເສີມສ້າງ
ຊ່ວຍເປັນພາລະທຸກຢ່າງ ໃຫ້ສົມດັ່ງປາຖນາ
ໃຫ້ທ່ານສົມຣົດ ສົມຮັກສົມດັ່ງອຸຣາ
ພີ່ນ້ອງເພື່ອນຝູງທົ່ວໜ້າ ຕ່າງມາເພື່ອຮ່ວມອວຍໄຊ

ຈົ່ງຄອງຮັກ ໃຫ້ຍືນຍາວໝັ້ນ
ຢ່າແປຜັນ ຈົນວັນແກ່ເຖົ້າລົງໄປ
ຊັບສິນເງິນທອງ ກໍຈົ່ງເນືອງນອງຫຼັ່ງໄຫຼ
ແມ່ນເກີດລູກຍິງຊາຍ ຈົ່ງເລີດດ້ວຍປະຕິພານ

ບັດນີ້ທັງສອງ ສົມປອງເປັນຄູ່ກັນແລ້ວ
ໄດ້ເປັນພືວທີບເມັຽແກ້ວ ແນ່ແລ້ວພົບຄວາມສຸກສັນ
ແມ່ນຍາມພັ້ງພາດ ຜິດໄປອະພັຍໃຫ້ກັນ
ດວງໃຈສອງຈົ່ງຍຶດໝັ້ນ ຕໍ່ຄຳຂວັນພືວດຽວເມັຽດຽວ.

# ຈົ່ງຈອນມາເຖີດ

ຈົ່ງຈອນມາເຖີດ ທີ່ຮັກ
ຝາກໃຈມາຮັກ ກັບຄົນຮັກເກົ່າ
ຫຼັບຕາ ແລ້ວມາຮ່ວມເຮືອນທຳເຮົາ
ອ້າຍແປງ ໄວ້ຄອຍຂວັນເຈົ້າ ຢູ່ໃນຝັນ

ຈົ່ງຈອນມາເຖີດ ທີ່ຮັກ
ເມື່ອທາງແຫ່ງຮັກ ທີ່ຈິງແທ້ນັ້ນ
ຕ່າງເຮົາ ຕ້ອງຈຳຫັນຫຼັງໃຫ້ກັນ
ໝົດຫວັງ ທີ່ຈະຜູກພັນ ສຳພັນໄສ້ໃຈ

ສຸດທ່ອງສຸດຮັກກັນ ປານຈະກືນ
ກໍບໍ່ອາດຝືນ ປະເພນີໄດ້
ຈົ່ງລືມເສັຽ ຄວາມຫວັງທີ່ສລາຍ
ເສັຽແກ່ຜາຍ ຊຶ່ງຄວາມຫາງອຍເຫງົາ

ຈົ່ງຈອນມາເຖີດ ນົ່ງຂວັນ
ອ້ອມແຂນອ້າຍນັ້ນ ອ້າຄອຍຮັບເຈົ້າ
ຂ້າງຈິງ ນ້ອງເປັນຂອງຜູ້ອື່ນເຂົາ
ຈຶ່ງຂໍພົບພຽງຮ່າງເຈົ້າ ແມ່ນຊື່ອພຽງຝັນ.

# ຍາມຮັກຍາມຮ້າງ

ຍາມຮັກກັນ ຜູກພັນໄມຕຣີສເນີ
ຈິດພ້ຳເພີ້ ເຖິງກັນຢູ່ທຸກເວລາ
ຈາກໄກແສນໄກ ຈົນສຸດຂອບຟ້າ
ແຕ່ສັດທາ ຮັກນຳພາເຖິງກັນຈົນໄດ້

ຍາມຮ້າງກັນ ໃຈນັ້ນກໍຜັນປ່ຽນແປ
ບໍ່ຢາກແລ ເຫັນກັນຢາກເອັ້ນໄກໆ
ຈິດຫວັງສູນພລັງ ຫວັງອີກຕໍ່ໄປ
ສຸດລະອາຍ ທັງນ້ອຍໃຈ ນ້ອຍໃຈເຕັມທີ

ອ້າຍຮັກ ນ້ອງນາງດ້ອຍຈິດໝັ້ນໝາຍ
ນີເຄີຍທຳໃຫ້ ນ້ອງມີຮອຍຣາຄີ
ເອົາໃຈທຸກຢ່າງ ແຕ່ນາງກັບຕັດໄມຕຣີ
ເຫັນຊາຍອື່ນຮູບງາມມັ່ງມີ ນ້ອງນີ້ກໍປ່ຽນໃຈ

ອັນຮັກເຮົາ ເມື່ອຄາວເລີກລາຢ່າງນີ້
ດັ່ງນຶ່ງມີ ໜາມຄົມປັກຝັງຊອງໃນ
ບາດແຜ ຫາມີອັນຈະຈາງຫາຍ
ຫຼາບຈົນຕາຍ ຍິ່ງຫຼາຍໃຈ ຂໍໄກກັນເອີຍ.

# ເພື່ອນ້ອງເມື່ອຊ້ຳ

ອ້າຍເຈັບຊ້ຳໃນ　　ຈາກນ້ອງພຽງໃດ
ດັ່ງຟ້າຜ່າລົງກາງໃຈ　　ເກືອບຈະຕາຍເພາະຮັກນ້ອງນັ້ນ
ສູ້ທົນຂົມຂື່ນ　　ເຝົ້າຝືນແຕ່ຈາບັນ
ອົດແຮງອົດຫົວໃຈກັ້ນ　　ນ້ອງຍັງຫັນໜ້າບໍ່ນອງ

ນ້ອງຕັດສຳພັນ　　ຈາກອ້າຍໄປໄກ
ຕັດຮັກຕັດຄວາມສົນໃຈ　　ຈາກກັນໄປດັ່ງນ້ຳໄຫຼລ່ອງ
ນ້ອງໜີອ້າຍໄປ　　ຖິ້ມໄວ້ແຕ່ຄວາມໝອງ
ຖອດຮັກຖອດຄວາມສົນປອງ　ໃຫ້ອ້າຍໝອງໝົ່ນອິນຍາ

ຈາກອ້າຍ　　ໄປດີເຖີດນ້ອງ
ຈົ່ງໄປໃຫ້ພົບຊຸມທອງ　　ທີ່ນອນນ້ອງໄຝ່ປາຖນາ
ຈົ່ງໄປຫາຄົນ　　ທີ່ນອນນ້ອງເຝົ້າຝັນຫາ
ຫາກເຂົາສິ້ນຄວາມເມດຕາ　　ຈົ່ງນອງຟ້າດູດາວດວງເກົ່າ

ເມື່ອໝົດທົນທາງ　　ຈົ່ງຫວນຄືນມາ
ຊາດນີ້ຈະລໍຂວັນຕາ　　ຈິດໄຝ່ຫາສເມີເໝືອນເກົ່າ
ອ້າຍຍັງຝືນໃຈ　　ທ່ອງໃຍທຸກຄ່ຳເຊົ້າ
ໄປຣດນ້ອງກັບຄືນຮັງເກົ່າ　　ສ້າງຮັກເຮົາດັ່ງເກົ່ານາ.

# ເພາະຄວາມຈົນ

ດ້ອຍວ່າຕົວອ້າຍ ນີ້ຈົນຕ້ອຍຕ່ຳ
ອ້າຍຈຶ່ງຊອກຊ້ຳ ຣະກັມຣືດີໝອງໄໝ້
ຕ້ອງເກັບຄວາມທຸກ ຜູ້ດຽວເສື້ອຍໄປ
ແສນເຈັບຊວງໃນ ຈອນໃຈຊ່າງບໍ່ສົງສານ

ເມື່ອສິ້ນຄວາມຮັກ ສິ້ນຄົນເຫັນໃຈ
ອ້າຍຢາກຈະຕາຍ ຢາກຕາຍໃຫ້ມັນພົ້ນຜ່ານ
ອ້າຍເກີດມາຈົນ ປຽບຄົນຂໍທານ
ນ້ອງຈຶ່ງປະຫານ ທໍຣະມານຫົວໃຈຄົນຈົນ

ໂອ ຫົວໃຈ ຂອງຍິງຊ່າງບໍ່ແນ່ນອນ
ມີແຕ່ຫຼອກຫຼອນ ປ່ຽນແປເຫຫັນວຽນວົນ
ຮັກຂອງຜູ້ຍິງ ຊ່າງມີຢາພິດເຈືອປົນ
ເຈົ້າເຫັນແກ່ຕົນ ລືມຄົນທີ່ເຄີຍຮັກມາ

ນ້ອງບໍ່ສົງສານ ນ້ອງບໍ່ເຫັນໃຈ
ນ້ອງຈຶ່ງທຳລາຍ ຄວາມຮັກທີ່ເຄີຍສ້າງມາ
ອ້າຍນີ້ບຸນນ້ອຍ ກວ່າຍິງໂສພາ
ອ້າຍຈຶ່ງກົ້ມໜ້າ ເກັບຄວາມຣະທົມດຽວດາຍ.

# ສລັກຈິດ

ນ້ອງຄືທຸກສິ່ງ ທີ່ອ້າຍໝາຍປາຖນາ
ນຶ່ງຂວັນຊີວາ ຝັງໃນອຸຣາແນ່ແທ້
ເຫັນຍິງຫຼາຍລ້ານຫຼາຍໂກດ ຫົວໃຈປະກົດບໍ່ຢາກແລ
ຫຼິງໄຫຼພຽງແຕ່ ນ້ອງນີ້

ນ້ອງຄືປະທີບ ສ່ອງແສງແນວທາງຊີວາ
ຫຼິງໄຫຼໄປວ່າ ນ້ອງນາງເມດຕາປຣານີ
ຫວັງໃນຄວາມຮັກສູງສົ່ງ ເທບໄທ້ຂໍຈົ່ງໂປຣດຊ່ອຍທີ
ສິງໃຈຍິງທີ່ ຂ້າຮັກ

ສລັກຈິດ ສລັກໃຈ
ສລັກຢູ່ໃນ ຣືທັຍແນ່ນໜັກ
ນ້ອງຄົງຮັບຮູ້ ນ້ອງຄົງຮູ້ຈັກ
ວ່າອ້າຍເຝົ້າຮັກ ຫຼິງຮັກສລັກຈິດໃຈດຽວ

ຫົວໃຈເພີ້ພໍ້າ ຮໍາພຶງຮໍາພັນໄຝ່ຫາ
ຕັ້ງໃຈໄວ້ວ່າ ຮັກຍືນຊື່ວຟ້າແໜ້ນໜຽວ
ຮັກເຮົາຄົງຫວານຊື່ນໜັກ ແນ່ນນ້ອງບໍ່ທັກຮັກແໜ້ນໜຽວ
ຮັກດຽວແຕ່ອ້າຍ ຕລອດການ.

# ແກ້ວໃຈ

ແກ້ວໃຈ..... ແກ້ວໃຈ.... ແກ້ວໃຈ.....

ແກ້ວໃຈ
ນານນີ້ໂນ້ມໃຈ ໃຫ້ໄຫວຫວັ່ນ
ພົບພຽງຄັ້ງດຽວ ເທົ່ານັ້ນ
ຕ້ອງເກັບໄປຝັນ ໄຝ່ຫາ

ແກ້ວໃຈ
ງາມເຫຼືອຍິ່ງໃດ ໃນຫຼ້າ
ເໝືອນນາງຟ້າຢູ່ ຄູ່ຟ້າ
ໃຫ້ໂລກໄຝ່ຫາ ໝັ້ນປອງ

ນາງງາມ ພຽບພ້ອມ ກິຣິຍາ
ນັຍຍະນາເໝືອນດັ່ງ ດາຣາຈ້ອງ
ນາຣະຍາດອາດຊຶ່ງ ຄຸ້ມຄ້ອງ
ຍາມນອນນ້ອງ ຍ່າງຍ້າຍລີລາ

ແກ້ວໃຈ
ນາງນີ້ ດວງໃຈຂອງຂ້າ
ແມ່ນນ້ອງໄດ້ຄູ່ ອຸຣາ
ຈະເຝົ້າຮັກສາ ແກ້ວໃຈ

# ຫົວໃຈໄຮ້ຄ່າ

ຫາກສິ່ງໃດໆ ທີ່ນາງຫຼິງເຫັນ ວ່າເປັນຄວາມສຸກ
ເປັນຂອງ ສນຸກ ຊື້ນສຸກສົມປອງ
ກໍຈົ່ງຮີບທຳ ກະທຳໄປເສັ້ງ ໃຫ້ສົມໃຈນ້ອງ
ໃຫ້ສື ຊາກ້ອງ ໂລກາ

ອີກເຈັບໃດໆ ທີ່ໃນໂລກນີ້ ວ່າເປັນທີ່ເຈັບ
ຂໍນ້ອງ ຈົ່ງເກັບ ຄວາມເຈັບນັ້ນມາ
ເມື່ອຫາກນ້ອງຕີ ຣາຄາໃຈນີ້ ວ່າມັນໄຮ້ຄ່າ
ຈະຊັງ ຈະຂ້າ ກໍເຊີນ

ອ້າຍໄຮ້ ດວງໃຈ
ຈະທຳສັນໃດ ເອົາຕີ ຂໍເຊີນ
ເອົາຈົນ ປົ່ນປີ້ ຈົນຍັບຈົນເຍີນ
ໃຫ້ມັນ ເພີດເພີນ ສາໃຈ

ຝາກຈິດກຳນັນ ໃຫ້ທານນາງນ້ອງ ເພື່ອທົດລອງຫຼິ້ນ
ພລີແລ້ວ ຊີວິນ ພລີໝົດຫົວໃຈ
ຈະຢຽບຫຼືຍໍາ ຈະທຳໃຫ້ໝອງ ໃຫ້ແສນໝອງໄໝ້
ພລີແລ້ວ ເຮືອນກາຍ ນອບນາງ

# ປ່າຫອງ ປ່າຫ່ອງ

ປ່າຫ່ອງ ປ່າຫອງ    ອ້າຍເສີຍທູນໃຈ
ອ້າຍຕາຍໄປຈາກ    ດວງໃຈແລ້ວນີ້
ຈະມາສົນໃຈ    ຫ່ອງໃຍອ້າຍຫັຽງເຫວີ
ອ້າຍເລວສິ້ນດີ    ນ້ອງເຄີຍປະມານ

ປ່າຫ່ອງ ປ່າຫອງ    ອ້າຍເສີຍດີກວ່າ
ອ້າຍເລວອ້າຍຊົ່ວ    ປ່າມົວຫຼົງຕາມ
ອາດມີມົນທິນ    ເກາະກິນນ້ອງເສັຽຄວາມງາມ
ເສັຽຄຸລທັມ    ຄວາມງາມແຫ່ງໃຈ

ເຖິງອ້າຍຈະສຸກ    ທຸກຄືນຊື່ນຊົມ
ຫຼືຈະຂືນຂົມ    ເຈັບຊ້ຳເທົ່າໃດ
ຂໍນ້ອງປ່າຫ່ອງ    ອ້າຍເສີຍຈອນໃຈ
ຈົ່ງປ່ອຍອ້າຍໄປ    ເມື່ອໃຈບໍ່ປາຖນາ

ປ່າຫ່ອງ ປ່າຫອງ    ອ້າຍເສີຍນາງແກ້ວ
ຂໍເຮົາຈົ່ງແລ້ວ    ດັ່ງເຄີຍແລ້ວມາ
ຫາກຈະຝືນຄືນ    ອາດຈະສູນເສັຽເວລາ
ອ້າຍມັນໄຮ້ຄ່າ    ຂໍປ່າຫ່ອງໃຍ.

# ຮັກບໍ່ລືມ

ເກີດຊາດນີ້ ຂໍຮັກດຽວ ຮັກບໍ່ລືມ
ໂລກສລາຍ ເປັນເຖົ່າຖ່ານ ຮັກບໍ່ລືມ
ໄດ້ນອນນ້ອງ ຄອງໃຈຢູ່ ຮັກບໍ່ລືມ
ດິນປົກໜ້າ ຫ້າຮ້ອຍປີ ຮັກບໍ່ລືມ

ຈະຊື່ຕຣົງ ຫຼົງພຽງນາງ ຮັກບໍ່ລືມ
ຕື່ນໃຈໜັກ ເໝືອນນາງແກ້ວ ຮັກບໍ່ລືມ
ຊົ່ວດິນຟ້າ ໂລກາສິ້ນ ຮັກບໍ່ລືມ
ບໍ່ຖອິນ ຝືນຈາກນາງ ຮັກບໍ່ລືມ

ຂໍໄຫວ້ວອນ ອັນເທວາ ມາປົກປ້ອງ
ໃຫ້ຄຽງສອງ ສົມດັ່ງໃຈ ປາຖນາ
ອື່ນໝື່ນແສນ ແມ່ນລອຍມາ ຈາກສວັນ
ບໍ່ໄຝ່ຝັນ ຜູກສຳພັນ ຮັກບໍ່ລືມ

ຈະຢູ່ໃສ ໃກ້ຫຼືໄກ ຮັກບໍ່ລືມ
ຫຼັບຍັງຝັນ ເຫັນດວງໜ້າ ຮັກບໍ່ລືມ
ຢາກຄຽງຂວັນ ນອນເນື້ອອຸ່ນ ຮັກບໍ່ລືມ
ຫາກດັ່ງຫວັງ ສົມດັ່ງໃຈ ຮັກບໍ່ລືມ.

# ພາບນ້ອຍແທນນາງ

ພາບແຜ່ນນ້ອຍ ທີ່ນາງມອບໃຫ້
ເຕືອນໃຈຄາວນັ້ນ ຊັກພາໃຫ້ຝັນທຸກວັນແລະຄືນ
ຍາມຮືທັຍອ້າຍທຸກຕຮົມ ຮະທົມຂົ່ມຂືນ
ເຫັນພາບແລ້ວຊື່ນ ສິ້ນໝອງ

ພາບແຜ່ນນີ້ ມີຮອຍສລັກ
ຄວາມຮັກແອບແຝງ ອ້າຍເຝົ້າແຕ່ແຍງດ້ອຍໃຈໝາຍປອງ
ຫຼົງລະເມີກອດພາບນາງ ແນບຂ້າງຄຽງຄອງ
ຈູບພາບແທນນ້ອງ ທຸກວັນ

ຫາກມີມົນ ຄາຖາສັກສິດ
ຈະເສກສັນຊີວິດ ໃຫ້ສະຖິດໃນພາບນັ້ນ
ແມ່ນໃຈນ້ອງແປຜັນ ມີຮັກອື່ນສຳພັນ
ຈະເອົາພາບນັ້ນ ແທນນາງ

ຊົມແຕ່ພາບ ຍັງຊາບຊຶ້ງໃຈ
ຮືທັຍສິ້ນໝອງ ແມ່ນເປັນເຈົ້າຂອງອ້າຍຊົມມີຈາງ
ຂໍຊິດເຊີຍແຕ່ພາບດຽວ ຮັກດຽວພຽງນາງ
ຈົນກວ່າຄວາມຫວັງ ສົມປອງ.

# ບອກຮັກຈັກຄຳ

ຈົ່ງບອກວ່າຮັກ    ນ້ອງຈັກຄຳ
ຢ່າເກັບກຳ    ຫຼືອຳໄວ້ກ່ອນ
ຖ້າຮັກແທ້    ຈາກໃຈ
ຂໍຈົ່ງໄຂໃຫ້ຮູ້    ຮູ້ເຖິງຄວາມໃນ

ຢ່າມົວແຕ່ຄິດ    ຄິດປິດບັງ
ຫາກນ້ອງຊັງ    ແລ້ວຈະເສັຽໃຈ
ຢ່າມົວຫວງ    ຫ່ວງເລີຍ
ຂໍຈົ່ງເຜີຍເອີ່ຍໄຂ    ໄຂຄຳຮັກມາ

ນ້ອງເປັນຜູ້ຍິງ    ຊາ ຊາ ຊາ ໆ ໆ
ຮັກລວງຫຼືຈິງກໍຢູ່ໃນຕາ    ຊາ ຊາ ຊາ ໆ ໆ
ເຖິງຈະຮັກ    ຖ້ອນລິ້ນວຸຣາ
ຜູ້ໃດຈະກ້າ    ບອກກ່ອນຜູ້ຊາຍ

ອອກປາກວ່າຮັກ    ນ້ອງຈັກຄຳ
ຢ່າມົວທຳ    ອ້ຳອຶ້ງໜ່ຽວໜັກ
ເມື່ອນ້ອງຄິດ    ສົງສານ
ຂໍຈົ່ງຫານເປີດໃຈ    ໄຂຄວາມຮັກຈິງ.

# ດ້ອຍສັກຮັກສິ້ນ

ເສັຽດາຍຄວາມຮັກ ທີ່ເຄີຍປັກໃຈ ແນ່ວແນ່
ຂ້າໝົດສິ້ນແລ້ວ ຮັກເຄີຍສຸກສົມ ອຸຣາ
ຕ້ອງທົນສະອື້ນປວດໃຈ ນ້ຳຕາຈົນໄຫຼ ອາບໜ້າ
ດັ່ງຟ້າຟ່າລົງ ກາງໃຈ

ສອງເຮົາເຄີຍຫວັງ ຈະເດີນຮ່ວມທາງ ຄູ່ກັນ
ຫວັງສ້າງຄວາມຫວັງ ນັ້ນໃຫ້ເປັນຈິງ ດັ່ງໝາຍ
ຂ້າເລີຍສະທ້ອນອ່ອນຊວງ ດ້ວຍຄວາມຂັດຂວາງ ຜູ້ໃຫຍ່
ເຈັບໃຈຊ້ຳໃຈ ເຫຼືອທົນ

ຂ້ານີ້ ບຸນນ້ອຍ ດ້ອຍສັກ
ຝາກຄວາມຮັກ ແກ່ໃຜ ກໍຂັດສົນ
ຫົວໃຈຕື້ນຕັນ ດ້ອຍນີ ແຕ່ນານພະຈົນ
ຈຶ່ງຈຳຕ້ອງ ຫຼີກຕົນ ຫຼີກທາງນ້ອງໄປ

ຂ້າເອງກໍຮູ້ ຢູ່ເຕັມແກ່ນໃຈ ໄດ້ດີ
ຮູ້ວ່ານ້ອງນີ້ ກໍຍັງຊື່ຕຣົງ ໝັ້ນໃຈ
ດ້ວຍຄວາມບັງຄັບໜີບເຕງ ດ້ວຍຄວາມຂົ່ມເຫັງ ຜູ້ໃຫຍ່
ຈິດໃຈນ້ອງຈຶ່ງ ຜັນແປ.

# ສາວງາມສອັນ

ໂອ ສາວງາມ ແຫ່ງເມືອງສອັນ
ເທບເທວາໃດປັ້ນ ວິລັຍລາວັນໜັກໜາ
ເດືອນເພັງລອຍເດັ່ນ ຢູ່ບົນນະພາ
ຍັງບໍ່ຫງາມແກ້ວຕາ ດາຣາແຫ່ງເມືອງສອັນ

ໄດ້ພົບພານ ຍັງຝັນໄຝ່ປອງ
ເຝົ້າລະເມີເຖິງນ້ອງ ໝາຍປອງຮ່ວມຮຽງຄູ່ກັນ
ກະຕ່າຍໝາຍຢູ່ ຄູ່ຄຽງພະຈັນ
ກໍປຽບເໝືອນອ້າຍນັ້ນ ຫຼົງໄຝ່ຝັນຮັກນາງຜູ້ດຽວ

ຊີວິດນີ້ ອ້າຍເຝົ້າ
ຫຼົງຮັກແຕ່ເຈົ້າ ຮັກສາວສອັນ ໝັ້ນໜຽວ
ອ້າຍຍັງຂາດຄູ່ ຢູ່ຄຽງກາຍາແສນປ່ຽວ
ນ້ອງສາວເຈົ້າບໍ່ແລຫຼຽວ ຢູ່ໂດດດ່ຽວອ້າຍເທງົາຂຸຣາ

ໂອ ສາວງາມ ແຫ່ງເມືອງສອັນ
ອ້າຍຂໍຮັກນ້ອງໝັ້ນ ເໝືອນຈັນຄູ່ຄຽງກັບຟ້າ
ນ້ອງເອີຍນ້ອງຈົ໋ງ ສົ່ງຮອຍຍີ້ມມາ
ແມ່ນນ້ອງຄິດເມດຕາ ອ້າຍຈະພາເຖົ້າແກ່ມາຂໍ

# ໄປເຖິດນ້ອງຈະຄອຍ

ໄປເຖິດ ນ້ອງຈະຄອຍ
ຄອຍວັນກັບ ຈາກເສິກພັກແດນເໜືອ
ຈະພະວັນນາ ວອນຟ້າໃຫ້ທ່ານຊ່ວຍເຫຼືອ
ຄຸ້ມຄອງລູນເຈືອ ເພື່ອອ້າຍໄດ້ຢູ່ສຸກຂີ

ເພື່ອຊາດ ໄດ້ຢູ່ເຢັນ
ຈະໄດ້ເວັ້ນ ຈາກນານຮ້າຍຮາວີ
ຈົ່ງປາບປອງນານ ເມືອງບ້ານເຮົາຈະສົດສີ
ສິ້ນຄົນອັບປີ ລາວນີ້ຈະຢູ່ສຸກສັນ

ອັນຄຸນຄວານດີ ອ້າຍນີ້ຈົ່ງໄດ້ຊ່ວຍຊາດ
ຮັກນ້ອງຢ່າຂາດ ຮັກຊາດນັ້ນດັ່ງຊີວັນ
ເມື່ອອ້າຍກັບນາ ພ້ອນວິວາຕານສັນຍາກັນ
ນ້ອງຍັງຮັກສາຄຳໝັ້ນ ຢູ່ທຸກວັນເວລາ

ສິ້ນເສິກ ຊາດຈະເຮືອງ
ງານກະເດືອງ ເຟື່ອງທົ່ວທຸກໂລກາ
ພີ່ນ້ອງທັງຫຼາຍ ຈະໄດ້ຮັບການສຶກສາ
ທັງມີປັນຍາ ສ້າງສາໃຫ້ຊາດຈະເຣີນ.

# ເອົາຜູ້ຊາຍຖິ້ມລົງນ້ຳຂອງ

ປາກເອົາຜູ້ຊາຍ ຖິ້ມລົງນ້ຳຂອງ ໃຫ້ໝົດ
ປາກເອົານ້ຳກົດ ຫົດລົງຫົວໃຈຊາຍຈົງ
ຊາຍເກີດມາຫຼັງ ເກີດມາທຳລາຍໃຈຍິງ
ທຳລາຍທຸກສິ່ງ ແມ່ນແຕ່ຍິງເພດອ່ອນແອ

ປາກເອົາຄວາມຮັກ ຖິ້ມລົງກົ້ນເຫວ ກວ້າງໃຫຍ່
ປາກເອົາໜາມໄຜ່ ຖິ້ມໃສ່ຫົວໃຈເປັນແຜ
ຊາຍຫຼອກຊາຍລວງ ບໍ່ຄວງບໍ່ຂໍຕໍ່ແຍ
ຜູ້ຊາຍບໍ່ແທ້ ບໍ່ຂໍຫຼຽວແລໃຫ້ມີຣາຄີ

ຫາກປ່ອຍໃຫ້ຍິງ ຢູ່ດ້ວຍກັນໃນໂລກ
ຄົງບໍ່ມີເສົ້າ ມີໂສກຢ່າງນີ້
ບໍ່ມີນິນທາ ບໍ່ມີອິດສາ ບໍ່ມີສຽດສີ
ບໍ່ມີຣາຄີ ຈາກຊາຍໃຈຜີ ຕົນໃດ

ປາກເອົາຄວາມຊັງ ຖິ້ມລົງໃສ່ໜອງ ໂສໂຄກ
ປາກເອົາຄວາມໂສກ ຖິ້ມລົງໃນໂຄກກວ້າງໃຫຍ່
ແລ້ວເອົາຜູ້ຊາຍ ທັງຫຼາຍໂຍນທັບລົງໄປ
ເອົາໄຟກອງໃຫຍ່ ຈູດໃສ່ໃຫ້ສູນສິ້ນໄປ.

# ທີ່ສອນດອກໄມ້

ທີ່ສອນດອກໄມ້ ຂອງນາງກ່ອນນັ້ນ
ເຈົ້າເຄີຍຕື້ນຕັນ ເລົ່າຄວາມຝັນໃຫ້ຟັງ
ວ່າວະນາຄິດ ນ້ອງຢາກໜີສຸດຟ້າໄກຫ່າງ
ຢູ່ເມືອງນອກແລ້ວສ້າງ ແຕ່ຄຸນງາມຄວາມດີ

ທີ່ສອນດອກໄມ້ ອ້າຍຍັງຈົດຈຳ
ໄດ້ຍິນນ້ຳຄຳ ສຸດຫວານລ້ຳອະຈີ
ເມື່ອຢູ່ກັນສອງ ອ້າຍຢາກປອງ ຈູບນ້ອງເທື່ອ
ແຕ່ບໍ່ກ້າຈັກທີ ດ້ອຍກຽດສັກສີ ຂ້ານີ້ດັ່ງກາ

ໂອ ໆ ໆ ນ້ອງເອີຍ ຢ່າເລີຍ
ລືມຄຳ ພ້ຳອອນນະແກ້ວຕາ
ທັງສຸຣິຍັນ ຈອນລັບທິວໄມ້ປ່າ
ທີ່ອຸທະຍານນັ້ນໜາ ສອງເຮົາຮ່ອນເດັດດອກໄມ້

ພາບສອນດອກໄມ້ ອີລັຍໜັກໜາ
ເມື່ອດອກຟ້ານາ ປະດັບທີ້ງແຈ່ມໃສ
ຢາກເອົາບຸຜາ ທີ່ເກັບມາເໜັບໄວ້ກາງໃຈ
ຈຳຝັງຈິດຈົນຕາຍ ໂອສອນດອກໄມ້ໃນອະດີດເອີຍ.

# ສາບຮັກຊາຍ

ປາດນ້ຳຕາ ໄຫຼນອງດັ່ງນ້ຳລົ້ນຝັ່ງ
ເມື່ອຄວາມຫວັງ ມາສູນສິ້ນຈາກອຸຣາ
ຄົນນັບເນີນ ໜີໜ້າ
ຕັດອຸຣາ ຮັກມາສລາຍ

ສິ້ນຮັກລົງ ເໝືອນດັ່ງຖືກໄຟເຜົາໄໝ້
ສູນສຽບໃຈ ຄິດໄປແສນເສົ້າຖວິນ
ຂໍລົບນາ ຫຼາຍປີ
ແລ້ວຍ້ຳຍີ ທົວໃຈແຫຼກລານ

ຄົງເຫັນໃຈຍິງ ເປັນສນານອາຣົມ
ຈຶ່ງຂ້າຈຶ່ງຂົມ ຈຶ່ງທຳໃຫ້ຂົມດວງມານ
ຫຼິ້ນເກມຮັກ ສັບສົນຊອກຊ້ອນຫຼາຍອັນ
ສນານໃຈສະທ້ານ ກັນສລາຍແຕກແຜງ

ສາບຮັກຊາຍ ເຖິງຕາຍຈະທົນອ້າເອ່
ສຸດຈະເປັນ ບໍ່ຂໍໝາຍປາຖນາ
ຂໍສາບານ ໄວ້ວ່າ
ບໍ່ນຳພາ ກັບຄວາມຮັກເອີຍ.

# ໄຟຣັກ

ໄຟຣັກໄຟຫາ ນ້ອງມາແອບອີງ
ໄຟຣັກຍອດຍິງ ຮັກຈິງໝາຍໝັ້ນ
ຢາກຄຽງຄູ່ດາຣາ ຢາກຈະພາສຸກສັນ
ທຸກຄືນວັນ ຢາກພານພົບນາງ

ຢູ່ສູງໜັກໜາ ເໝືອນຟ້າແລະດິນ
ປຽບເໝືອນເພັດນິນ ຊັບສິນລົ້ນອັ່ງ
ຢູ່ຕະກູນຜູ້ດີ ຊື່ນາຣີກໍດັງ
ໄທ ນ້ອງນາງ ສຸດງາມນິຍົມ

ໄກກັນເຫຼືອເກີນ ນາງເຫີນຢູ່ຟ້າ
ຂ້າຮັກນາງນາ ຮັກຂ້າກໍຕຣົມ
ຕ່ຳສັກສິ້ນດີ ຂ້ານີ້ຣະທົມ
ເກັບຄວາມຣະບົມ ບົ່ມໃນທົວໃຈ

ຊາດໜ້າເກີດໜາ ຂໍຂ້າຈົ່ງມີ
ຊາດນີ້ລາທີ ເພາະສິໝອງໄໝ້
ສຸກສິນຫວັງເກີດນ້ອງ ຈົ່ງປອງດອງໝັ້ນໝາຍ
ສິນທົວໃຈ ຈົ່ງໄດ້ຮັກຈິງ.

# ຢູ່ໄປເຮັດຫຽັງ ?

ຢູ່ໄປເຮັດຫຽັງ ? ຄົນຮັກເຂົາຊັງນ້ຳໜ້າ
ຢູ່ໄປເຮັດຫຽັງ ? ໃຫ້ຄົນຕິສິນນິນທາ
ໂລກນີ້ກວ້າງໃຫຽ່ ຈະໄປໃຫ້ສຸດສາຍຕາ
ຫຼີກຄຳນິນທາ ຫຼີກອາຈາສຽດສີເຈັບໃຈ

ຢູ່ໄປເຮັດຫຽັງ ? ຄົນຮັກຫັນຫຼັງໃຫ້ຫ່າງ
ຢູ່ໄປເຮັດຫຽັງ ? ໃຫ້ເຂົາດ່າວ່າທຳລາຍ
ຂໍຕາຍດາບໜ້າ ບໍ່ມາໃຫ້ເຈັບຊ້ຳໃຈ
ຫຼີກທາງຫ່າງໄປ ຜູ້ຊາຍຫຼາຍໃຈບໍ່ປາຖນາ

ຈະສແວງ ຊອກຊອນຫາຊາຍໃຈຊື່
ທີ່ເຂົາລື ວ່າດີແລະສງ່າ
ເອົາມາປະດັບ ປະທັບໄວ້ໃນອຸຣາ
ກໍຍັງດີກວ່າ ທົນຢູ່ກັບຊາຍລໍ້ລວງ

ຢູ່ໄປເຮັດຫຽັງ ? ຄວາມຮັກເຂົາພັງສູນສິ້ນ
ຢູ່ໄປເຮັດຫຽັງ ? ແຜ່ນດິນມີຊາຍແສນລວງ
ແມ່ນຊີບຈະດັບ ບໍ່ກັບມາຮັກມາຫ່ວງ
ຜູ້ຊາຍແສນລວງ ບໍ່ຂໍຄອງໃຫ້ເສັຽເວລາ.

# ທີ່ຮັກຈົ່ງລືມກັນ

ຕໍ່ແຕ່ນີ້ ຂໍຢ່າມີໂນຕຣີກັນອີກ
ຈົ່ງຢູ່ຄົນລະຊີກ ຂອງໂລກແຫ່ງຄວາມຫວັງ
ອ້າຍໝາຍສິ່ງໃດ ນ້ອງຂໍໄກບໍ່ຂໍຮ່ວມທາງ
ແມ່ນອ້າຍຫາກສິ້ນຫວັງ ນ້ອງຂໍໝົດຫວັງຊົ່ວນິດນິຣັນ

ຕໍ່ແຕ່ນີ້ ຂໍຢ່າມີເຍື້ອໃຍດີກວ່າ
ໂປຣດຈົ່ງຄິດເສັຽວ່າ ນ້ອງໝົດສິ້ນຊີວັນ
ແມ່ນພົບຈົ່ງເມີນ ຂໍຈົ່ງເດີນຫຼີກທາງໃຫ້ກັນ
ຢ່າຍິ້ມຢ່າທັກທ້ວງກັນ ຈົ່ງເອີ້ນກັນໃຫ້ມັນແສນໄກ

ນ້ອງຊ້ຳນ້ອງເຈັບ ພໍແລ້ວ
ຫົວໃຈຈົນແປ້ວ ເປື່ອຍເປັນແຜຝັງໃນ
ອ້າຍຄອງຮັກອື່ນ ກໍຄົງຊື່ນສຸກສົມໃຈ
ແຕ່ວັນນີ້ ເປັນຫຍັງໜີໄປ ທີ່ຮັກຈົ່ງລືມກັນ

ໂອບຸນນ້ອຍ ນ້ອງຈຶ່ງຄອຍໃຫ້ຄົນເມດຕາ
ຈຶ່ງຍອມຕຣົມກົ້ມໜ້າ ເສັຽສະລະຮັກນັ້ນ
ອ້າຍເອີຍຈົ່ງລືມ ຂໍຈົ່ງລືມຢ່າຄິດເຖິງກັນ
ຕັດເສັຽຊຶ່ງຄວາມສຳພັນ ຢ່າເຫັນກັນຊົ່ວຊີວິດເອີຍ.

# ຢ່າຫ້າມໃຈ

ຢ່າຫ້າມຫົວໃຈ　　ຫົວໃຈຄົນຈະຮັກກັນ
ຢ່າກີດຢ່າກັ້ນ　　ຖານະຈະສູງຫຼືຕ່ຳ
ຄົນຈະຮັກກັນ　　ກ້າບຸກຫ້ວຍໜອງຄອງຫານ
ເຫວເລີກພູຜາກ້າຂ້າມ　　ເຖິງຍາມໃຈຮ່ຳຮຽກຮ້ອງ

ຢ່າຫ້າມຫົວໃຈ　　ຫົວໃຈຄົນທີ່ຮັກກັນ
ໂລກແຫ່ງຄວາມຝັນ　　ເຂົາມີປະທີບໃສສ່ອງ
ຮັກຢູ່ທີ່ໃຈ　　ບໍ່ໄດ້ເຫັນຊັບເປັນກອງ
ວິມານໝັ້ນໝາຍຜຸດຜ່ອງ　　ຫວັງປອງຮັກຊື່ນຊູໃຈ

ຄວາມຮັກຄວາມຫວັງ　　ມີອະນຸພາບ
ທັງສອງໃຈຮັບ　　ເອົາຄວາມຮັກນັ້ນເປັນໃຫຍ່
ຈະຂື້ນບິນຟ້າ　　ດິ່ງພະສຸທາ ບຸກນ້ຳລຸຍໄຟ
ຄົນຮັກໄປເຖິງກັນໄດ້　　ດ້ວຍໃຈເຂົາປາຖນາ

ຢ່າຫ້າມຫົວໃຈ　　ເຂົາມີຄວາມຮັກຕໍ່ກັນ
ຢ່າເພຄວາມຝັນ　　ວິມານອັນສູງສງ່າ
ແມ່ນຢາກຫ້າມໃຈ　　ຫ້າມໄຟເຜົາສຸມອຸຣາ
ຫ້າມນ້ຳບໍ່ໄຫຼດີກວ່າ　　ຄ່ອຍມາຫັກຫ້າມໃຈຄົນ.

# ສອງຝັ່ງຂອງ

| | |
|---|---|
| ສາຍນາທີ | ລິນຫຼັ່ງຈາກຟ້າ |
| ແບ່ງພະສຸທາ | ເປັນຊ້າຍແລະຂວາ ສອງຝັ່ງ |
| ຫາກນ້ຳກັ້ນຂວາງ | ກໍບໍ່ສຳຄັນ |
| ແຕ່ຄວາມສຳພັນ | ຂອງເຮົາໝັ້ນຄົງເລື້ອຍໄປ |
| | |
| ເຖິງໄກກັນ | ຄົນລະຝັ່ງຂອງ |
| ຕ່າງໝາຍປອງດອງ | ນຸ້ງຫວັງທັງສອງ ຈົນໄດ້ |
| ດ້ວຍຄວາມໄຝ່ຝັນ | ໝັ້ນສຸດຫົວໃຈ |
| ຝາກຝັງຊວງໃນ | ເໝືອນໃຈດຽວກັນ |
| | |
| ທັງສອງຝັ່ງ | ກັ້ນກາງດ້ວຍສາຍນະທີ |
| ແຕ່ປະເພນີ | ນັ້ນບໍ່ຕ່າງກັນ |
| ຊາດລາວແລະໄທ | ກ່ອນນັ້ນເຄີຍໄດ້ສຳພັນ |
| ຮ່ວມສາຍໂລຫິດດຽວກັນ | ພຽງນ້ຳເທົ່ານັ້ນມາກັ້ນແບ່ງກາງ |
| | |
| ຂໍຟ້າດິນ | ຊ່ວຍເປັນສັກຂີ |
| ໂປຣດຄິດປານີ | ຈົ່ງຢ່າໄດ້ມີ ອັນຫ່າງ |
| ຢ່າໃຫ້ສຳພັນ | ນັ້ນຕ້ອງຈືດຈາງ |
| ຝາກຝັງຊີວີ | ເໝືອນນະທີສອງຝັ່ງເອີຍ. |

# ລືມໜາວສາວຄອນ

ນານເຫຼືອທົນ ແລ້ວເຈົ້າ
ຄອຍເຂົາ ມາຕັ້ງຫຼາຍປີ
ຈິງເໝືອນຄຳຫຼືບໍ່ ລໍເຝົ້າລໍແສນນານ
ຢ່ານອ້າຍລອງ ໃຫ້ໝອງ

ຄົນເໝືອນກັນ ນະອ້າຍ
ມິໄດ້ ເປັນເຄື່ອງທົດລອງ
ລືມໜາວມາແລ້ວນີ້ ຄອນຈະມີຄູ່ຄອງ
ອ້າຍປ່ອຍນ້ອງ ຢູ່ດຽວ

ຮັກຈິງໃຫ້ບອກ ຮັກຫຼອກບໍ່ມີຫວັງ
ຢ່າມາຫາທາງ ໃຫ້ໃຈແຫ້ງຫ່ຽວ
ຜູ້ຊາຍສມັຍໃໝ່ ຫົວໃຈມັກບິດບ້ຽວ
ຊົມແລ້ວບໍ່ກ່ຽວ ບໍ່ຫຼຽວພຽງຕາ

ໜາວນີ້ ມັນໜັກຮ້າຍ
ທົນຫຼາຍ ນ້ອງເອີ່ຍອີວາ
ລືມຫຼືໃດໜໍນີ້ ຄຳສັກຂີສັນຍາ
ໂຖອະນິຈາ ຜູ້ຊາຍ

# ປາກຄວັກຫົວໃຈ

ປາກຄວັກຫົວໃຈ ນ້ອງອອກມາດູ
ເພື່ອຈະໄດ້ຮູ້ ວ່າມັນທຳດ້ວຍສິ່ງໃດ
ສີແດງຫຼືເຂັ້ມ ຫຼືເຕັ້ນໄປດ້ວຍເຫຼັກໄຫຼ
ຫຼືທຳດ້ວຍຫີນແນວໃດ ຈຶ່ງໂຫດຮ້າຍໂຫດຮ້າຍເຫຼືອຫີນ

ປາກຄວັກຫົວໃຈ ນ້ອງສັບເປັນຕ່ອນ
ສັບເປັນທ່ອນໆ ໃຫ້ແພດພິສູດໃຈຄົນ
ຊ່ວຍສັນນະສູດ ວ່າມັນມີເລືອດເຈືອປົນ
ຫຼືໃຈນັ້ນດ້ານເຫຼືອຫີນ ເລືອດຂອງຄົນນັ້ນສູນໄປສິ້ນ

ຈຶ່ງຕັດຮັກໄດ້ ຢ່າງເລືອດເຢັນ
ຂ້າຄົນທັງເປັນ ຖືຄວາມຮັກເປັນເກມຫຼິ້ນ
ຮ້າຍຈິງຮ້າຍຈິງ ຮ້າຍຍິ່ງກວ່າໂຈນທະມິນ
ນ້ຳຄຳກິ່ງກອກປອກປີ້ນ ປາກຕັກລີ້ນນັ້ນໃຫ້ຫຼຸດໄປ

ປາກຄວັກຫົວໃຈ ຍິງໂຫດໃຈຫຼົງມ
ສັບເປັນສິ້ນໆ ແລ້ວເອົາເຂັມສັກປັກໃນ
ເອົາຢາດນ້ຳກົດ ຄ່ອຍເທຄ່ອຍຫົດລົງໄປ
ໃຫ້ສາໃຫ້ສົມແກ່ໃຈ ທີ່ທຳລາຍຄວາມຮັກໄດ້ລົງ.

# ຊາຍເມືອງສວັນ

ພຽງພົບໜ້າຄັ້ງດຽວ ຄັ້ງດຽວເທົ່ານີ້
ດວງຮືດີ ນ້ອງນີ້ໄຫວຫວັ່ນ
ພໍມາພົບ ຊາຍເມືອງສວັນ
ສຽງປາກແອ່ວຫວານ ປາກຝາກສຳພັນຈາກໃຈຈິງ

ພໍອ້າຍສົ່ງສາຍຕາ ຈ້ອງມາຊອກຄົ້ນ
ເໝືອນນິມິນ ດົນໃຈເສັຽຍິ່ງ
ຫາກໄດ້ອ້າຍ ເປັນຄູ່ແອບອີງ
ຄົງສຸກໃຈຈິງ ສຸກໃຈຈິງເຫຼືອທີ່

ວຽງຈັນສວັນ ນັ້ນໄກເກີນກວ່າ
ນ້ອງຍັງດົ້ນມາ ຫວັງຝາກໄມຕຣີ
ຮັກອ້າຍລົ້ນເຫຼືອ ເໝືອກວ່າຊີວີ
ຂໍຝາກອະຈີ ໄວ້ຕໍ່ຊາຍ

ພໍອ້າຍສົ່ງຍິ້ມມາ ຍິ້ມມາເທົ່ານັ້ນ
ຈິດຕື້ນຕັນ ຫາໃດຫຼຽບໄດ້
ສາວວຽງຈັນ ຮັກແທ້ຈາກໃຈ
ຂໍແຕ່ພຽງຊາຍ ສວັນຮັກແທ້ຢ່າລືມ.

# ຍອດຮັກແກ່ນໃຈ

| | |
|---|---|
| ຍອດຮັກ | ແກ່ນໃຈ |
| ສຖິດຢູ່ໃນ | ອຸຣາ |
| ເຈົ້າພຽນຖນອມ | ມີຍອມສເນຫາ |
| ຍົກໄວ້ເປັນຍອດບູຊາ | ເປັນເຈົ້າແຫ່ງອະນາໃຈ |
| | |
| ຕ່າງຮັກ | ຕ່າງຫວັງ |
| ຕ່າງເປັນພະລັງ | ດັ່ງໝາຍ |
| ສາບານຈະຮັກ | ຮັກຈົນຊີບວາຍ |
| ຂໍວອນຈາກອິງເທບໄທ້ | ກູ້ນພັຍພິບັດນາໆ |
| | |
| ຮັກດຽວໃຈດຽວ | ບໍ່ຫຼຽວໃຜອື່ນ |
| ສຸດແສນດູດດື່ມ | ມີລືມໄລລາ |
| ສຸດຮັກສຸດແພງ | ດຸດດັ່ງແກ້ວຕາ |
| ສຸດຫວັງສຸດປາຖນາ | ເປັນສຸດບູຊາຢູ່ໃນຫົວໃຈ |
| | |
| ຊາດນີ້ | ຊາດດຽວ |
| ຈະມີຮັກດຽວ | ຈົນຕາຍ |
| ຂໍພຽງໄດ້ມາ | ຢູ່ຮຽງຄຽງໃກ້ |
| ຊື່ນຊົມສຸກສົມດັ່ງໝາຍ | ຂໍຕາຍໃນອ້ອມກອດນາງ. |

# ຢ່າໃຈນ້ອຍ

ຢ່າຫວັ່ນຢ່າໄຫວ ຢ່າໃຈນ້ອຍເລີຍ ນ້ອງ
ຢ່າໝິ່ນຢ່າໝອງ ຢ່ານອງນ້ຳຕາເລີຍ ເຈົ້າ
ບໍ່ມີສິ່ງໃດ ຈະມາພາກຮັກສອງເຮົາ
ຢ່າໂສກຢ່າເສົ້າ ຢ່າໝາຍຫ່າງນາງ

ບໍ່ຫຼອກບໍ່ລວງ ບໍ່ລືມເຈົ້າເລີຍ ນ້ອງ
ນຶ່ງບໍ່ມີສອງ ອ້າຍຂໍຮັບຮອງພຽງເຈົ້າ
ບໍ່ເຄີຍຈະຄິດ ແບ່ງໃຈດວງນີ້ ຫຼາຍທາງ
ຕັ້ງໃຈມຸ້ງຫວັງ ພຽງນາງຜູ້ດຽວ

ຄວາມຮັກຄວາມຫ່ວງ ຫຼັ່ງໄຫຼ
ຍິງອື່ນມາກມາຍ ບໍ່ຂໍຂ້ອງກ່ຽວ
ຈະຮັກຈະຫວນ ກໍນ້ອງຜູ້ດຽວ
ບໍ່ຢາກນອງແລຫຼຽວ ໃຜມາເປັນມິດ

ສຸດອີກສຸດໃຈ ບໍ່ມີໃຜປຽບແລ້ວ
ນ້ອງຄືນາງແກ້ວ ເປັນແວວມະນີໃນຈິດ
ຂາດນ້ອງເປັນຄູ່ ບໍ່ຢາກຢູ່ແລ້ວຊີວິດ
ໄປຮອດຈັ່ງໄດ້ຄິດ ຄິດແລະເຫັນໃຈ.

# ຈາກນ້ອງປີໃຫມ່

ຈາກນ້ອງເມື່ອຄາວ ສົງການປີໃໝ່
ອ້າຍຊຸກຫົວໃຈ ໄວ້ກັບເຈົ້ານ້ອງ
ປານນີ້ນາງລືມ ຫຼືໃດເນື້ອທອງ ?
ຈາກພາກຈາກນ້ອງ ດ້ອຍຄວາມໝົ່ນໝອງອາລັຍ

ຈາກນ້ອງໄປໄກ ຫົວໃຈເປັນຫ່ວງ
ຢ້ານແຕ່ນ້ອງລວງ ໃຫ້ຄວງຫຼົງໄຫຼ
ຫາກຮັກຂອງຍິງ ມີຈິງຈາກໃຈ
ຂ້າຍອມຖວາຍ ເນື້ອກາຍໄວ້ແທບບາດນາງ

ຮັກຄົງບໍ່ມີ ສັກດິນາ
ຂ້ອຍຫຼືອາຊາງ ເກີດມາຍ່ອມອະນິຈັງ
ຢູ່ສູງສຸດຢື້ ຂໍພຽງຊື່ໃນໝອນຂ້າງ
ຫາກກາຍສິ້ນຫວັງ ຂໍພຽງສຽງສັ່ງຍັງມີ

ຢາກຫອນຄືນໄປ ຫາຈອມຂວັນຈິດ
ໄປຫາມິ່ງມິດ ແມ່ມາລາສີ
ຢາກຮູ້ເຮື່ອງຮາວ ຜົນແຫ່ງໄມຕຣີ
ຊື່ນສຸກຮືດີ ຫຼືວ່າສັກສີສິ້ນສູນ.

# ຄິດເຖິງທີ່ຮັກ

ກ່ອນນີ້ ມີຄົນຮັກ
ສຸດຮັກ ໃສຫງຽນເທົ່າ
ທຸກໃຈ ອ້າຍຂາດເຈົ້າ
ສຸດເຫງົາ ເຝົ້າຫ່ວງໃຍ

ບໍ່ເຫັນ ອີກພຽງເງົາ
ສຸດເສົ້າ ເຫຼືອທົນໄດ້
ຂັດເຄືອງ ເຣື່ອງອັນໃດ ?
ເຫດໃດ ນ້ອງຈຶ່ງເມີນ ?

ໂອ ສຸດທີ່ຮັກ
ສຸດຮັກ ເຈົ້າເຫຼືອເກີນ
ຢ່າແໜງ ແກ້ງທຳເມີນ
ຫ່າງເຫີນ ເມີນຄູ່ຊື່ນ

ທີ່ຮັກ ເຈົ້າຢູ່ໃສ ?
ສຸກໃຈ ຫຼືຕຣອມຕຣົມ ?
ອ້າຍຍັງ ຄອຍພີຣົມ
ຂື່ນຂົມ ຕຣົມຫຸ່ນໃນ

ຄິດເຖິງ ສຸດທີ່ຮັກ
ຄິດເຖິງ ແທບຂາດໃຈ
ໄດ້ຍິນ ແລ້ວຫຼືໃດ ?
ກ່ອນຕາຍ ຂໍພົບນາງ

# ຮັກນ້ອງຄົນດຽວ

ບໍ່ເຄີຍໄດ້ຄຶດ ວ່າຈະບອກໃຈ
ບໍ່ເຄີຍຮັກໃຜ ເກີນກວ່ານ້ອງນີ້
ຮັກຮັກນ້ອງ ຍິ່ງກວ່າຊີວີ
ບໍ່ເຄີຍໄດ້ທີ່ ຈະຄຶດບອກໃຈ

ບໍ່ເຄີຍໄດ້ຄຶດ ວ່າຈະຫຼອກລວງ
ຍິງອື່ນທັງປວງ ບໍ່ເຄີຍສົນໃຈ
ຮັກຮັກນ້ອງ ຍິ່ງກວ່າສິ່ງໃດ
ບໍ່ເຄີຍຄຶດໃຫ້ ນ້ອງເສົ້າວຸຣາ

ຮັກນ້ອງຄົນດຽວ ເທົ່ານັ້ນ
ບໍ່ເຄີຍນຶກຝັນ ວ່າຈະຫ່າງລາ
ອ້າຍຂໍສາບານ ຂໍສາບານວ່າ
ຮັກນ້ອງເທົ່າຟ້າ ທຸກລົມຫາຍໃຈ

ຈະຂໍຮັກນ້ອງ ແຕ່ພຽງຜູ້ດຽວ
ບໍ່ເຄີຍແລຫຼຽວ ຫາຍິງອື່ນໃດ
ຂໍພຽງນ້ອງ ຈົ່ງຢ່າທຳລາຍ
ໃຫ້ຄວາມຮັກອ້າຍ ຕ້ອງທຸກຣະທົມ.

# ລືມກັນເຖີດ

ລືມ ກັນເຖີດນະຄົນດີ
ຈົ່ງຢ່າໄດ້ມີ ເຍື້ອໃຍຕໍ່ກັນ
ລືມ ຮັກທີ່ເຮົາເຄີຍຊື່ນບານ
ລືມຕຣາບສິ້ນຊີວັນ ຈົ່ງຫ່າງກັນໃຫ້ໄກ

ລືມ ກັນເຖີດຍອດນາຣີ
ທັກທ້ານໄມຕຣີ ທີ່ມີໄວ້
ອ້າຍ ຕ້ອຍຕ່ຳຣະກຳເກີນໄປ
ນ້ອງຖອດຖອນດວງໃຈ ຈາກຣຶທັຍນ້ອງນາງ

ຈົ່ງລືມເສັຽສິ້ນ ລືມຢ່າອາລັຍ
ຈົ່ງທອນຫົວໃຈ ໄວ້ໃຫ້ຄົນອື່ນເຖີດນາງ
ອ້າຍນີ້ ຈະຂໍໜີໄປໃຫ້ຫ່າງ
ລືມເສັຽທຸກໆຢ່າງ ນ້ອງນາງຢ່າເສັຽໃຈ

ລືມ ກັນເຖີດຍອດຊີວີ
ຫາກຊາດໜ້າມີ ຄ່ອຍພົບກັນໃໝ່
ຂໍ ວອນໄຫວ້ຕໍ່ອິງເທບໄທ້
ພົບກັນໃນຊາດໃດ ຊົວຊີບອາຍສຸກເອີຍ.

# ຄືນທີ່ເຂົາຄອຍ

ພໍໄດ້ຍິນຂ່າວ ຂອງນາງ
ສຸດອ້າງວ້າງ ຮືທັຍໝອງເສົ້າ
ຮູ້ວ່າຄົນຮັກ ຈະຈາກເມືອງລາວ
ຍິ່ງໂສກເສົ້າ ງ່ອນເຫງົາເສົ້າໃນຊວງ

ເຫັນເຂົາຈະຈາກ ພາກໄປ
ເກີດຫວັ່ນໄຫວ ຫົວໃຈເປັນຫ່ວງ
ຢ້ານຍິ່ງຄົນຮັກ ຈະຖືກຫຼອກລວງ
ຄິດເປັນຫ່ວງ ຈົນຊວງຂ້າສັ່ນສາຍ

ຢູ່ຕ່າງແດນ ເມືອງແມນແຫ່ງຄວາມຈະເຣີນ
ເຈົ້າຢ່າເພີດເພີນ ຈົນເກີນຂອບເຂດເກີນໄປ
ຫາກເກີດພາດພັ້ງ ບາງທີອາດເຈັບຊ້ຳໃນ
ຂ້າຢ້ານແຕ່ໜຸ່ມໄວໄຟ ທຳໃຫ້ເຈົ້າຫຼັ່ງນ້ຳຕາ

ທີ່ຮັກເຈົ້າຈົ່ງ ໄປດີ
ຈົ່ງສຸກຂີ ເທີອີຂອງຂ້າ
ຢ່າລືມຄົນທີ່ ເຂົາເຝົ້າຄອຍຫາ
ຈົ່ງກັບມາ ຫາຄົນທີ່ເຂົາຄອຍ.

# ສັນຍາໄດ້ບໍ່ ?

ສັນຍາໄດ້ບໍ່ ? ອ່ານ້ອງຈະລໍຄອຍອ້າຍ
ສັນຍາໄດ້ບໍ່ ? ດວງໃຈກ່ອນໄປຈາກກັນ
ສັນຍາໄດ້ບໍ່ ? ຈະຂໍສືບຄວາມຜູກພັນ
ສັນຍາໄດ້ບໍ່ ? ຈອນຂວັນ ຈະບໍ່ໄຝ່ຝັນຜູ້ອື່ນ

ສັນຍາໄດ້ບໍ່ ? ເມື່ອອ້າຍໄປສຶກສາຕໍ່
ສັນຍາໄດ້ບໍ່ ? ຂໍພຽງໝັ້ນຮັກຍັ້ງຍືນ
ສັນຍາໄດ້ບໍ່ ? ຈະບໍ່ລົດໃຫ້ທົນຝືນ
ສັນຍາໄດ້ບໍ່ ? ຢ່າຝືນລືມນໍ້າສັດຈະອາຈາ

ຮັກດຽວໃຈດຽວ ນໍ້ະ ສັນຍາກ່ອນ
ແນ່ນອນ ຈົນກວ່າອ້າຍຍ້ອນຄືນມາ
ຫາກໃຜ ຄິດລອງຫຼືແກ້ງລືມລາ
ຂໍໃຫ້ນໍຣະນາ ຊີວານັ້ນວອດວາຍ

ສັນຍາໄດ້ບໍ່ ? ອ່ານ້ອງຈະລໍແນ່ນອນ
ສັນຍາໄດ້ບໍ່ ? ບັງອອນສຸດຮັກສຸດໝາຍ
ສັນຍາໄດ້ບໍ່ ? ຈົນກວ່າດິນຟ້າສລາຍ
ສັນຍາໄດ້ບໍ່ ? ຢ່າຄາຍໜ່າຍໜີຮັກທີ່ເຄີຍຄອງ.

# ຮັກເຮັດຫຍັງ ?

ຮັກເຮັດຫຍັງ ?
ຮັກກັນແລ້ວ ຈາກກັນໄປ
ຮັກກັນ ໃຫ້ອຸ້ນໃຫ້ອາຍ
ຮັກໃຫ້ດວງໃຈ ປ່ວງບ້າ

ຮັກເຮັດຫຍັງ ?
ຮັກກັນແລ້ວ ປ່ວງຫ່ວງຫາ
ຮັກແລ້ວ ເມື່ອບໍ່ສິນອຸຣາ
ຮັກເສົ້າຈິງໜາ ປ່ຽນແປງໄປ

ຮັກເພີ້ໄຝ່ຝັນ
ຮັກທໍຣະມານ ຮັກເຮັດຫຍັງ ?
ຮັກແລ້ວລະແວງ ຮັກແລ້ວລະວັງ
ຮັກແລ້ວ ສິງໃສ

ຮັກເຮັດຫຍັງ ?
ຮັກກັນ ໃຫ້ຫ່ວງອາລັຍ
ຮັກແລ້ວ ຕາຍຈາກກັນໄປ
ຮັກໃຫ້ອຸ້ນອາຍ ຮັກເຮັດຫຍັງ ?

# ຂໍເຊັດນ້ຳຕານ້ອງ

ອ້າຍຂໍເປັນຄົນ ເຊັດນ້ຳຕາໃຫ້ ນອນນ້ອງ
ລ້າງຄວາມໝົ່ນໝອງ ໃຫ້ໃສ ດັ່ງທອງລ້ຳຄ່າ
ເຖິງມາລຸນຫຼັງ ຄົນອື່ນ ອ້າຍຍັງຍິ້ມຊື່ນດອກໜາ
ຍິນດີ ອາສາ ມາຮັບໃຊ້

ນ້ອງເອີຍເຈົ້າຢ່າ ຣະທົມໝອງໄໝ້ ເລີຍນາ
ອ້າຍຍັງບູຊາ ຍັງຮັກແກ້ວຕາ ລົ້ນໃຈ
ເຖິງແມ່ນຖືກເຂົາ ລວງຫຼອກ ຂໍຢ່າຊ້ຳຊອກເກີນໄປ
ຍັງມີ ຕົວອ້າຍ ຢູ່ຜູ້ເດີມ

ເຖິງ ເກົ່າ ພຽງໃດ
ກໍຈະເອົານ້ຳໃຈ ອັນໃສ ລ້າງຢູ່ສເມີ
ບໍ່ຄິດນ້ອງເປັນຂອງເກົ້າຖືກເຂົາທັກເພ ດອກເດີ
ດີໃຈ ສເມີ ສຳລັບນ້ອງ

ອ້າຍຂໍເປັນຄົນ ຮັກຜູ້ສຸດທ້າຍ ຂອງເຈົ້າ
ຈະຊ່ອຍແບ່ງເບົາ ໃຫ້ເຈົ້າໄດ້ສຸກ ສົມປອງ
ຂໍເປັນຄົນຮັກຄົນກອດ ຂໍເປັນໝໍຈອດ ໃຈນ້ອງ
ຢ່າເສົ້າ ຢ່າໝອງ ເຖີດນອນນາງ

# ຄະຕິຕ່າງກັນ

ທີ່ຮັກກ່ອນເຮົາ　　ຈະພາກຈາກກັນ
ຈິດໃຈຮູ້ສຶກຫວັ່ນໆ　　ກ່ອນຈາກກັນໜີໄກ
ເມື່ອສາຍສວາດຂາດເດັນ　　ເໝືອນດັ່ງນີເອນດົນໃຈ
ໃຫ້ເດີນທາງໄປ　　ຄົນລະທາງ

ເຮົາສອງເກີດມາ　　ຕ່າງມີບາບກັນ
ຢູ່ກິນທຸກສຸກຄືນຄ່ຳ　　ກໍມາຈຳເຫີນຫ່າງ
ການເຂົ້າໃຈຜິດຕໍ່ກັນ　　ບໍ່ຍອມຜ່ອນຜັນເບົາບາງ
ຮັກຈຶ່ງແຍກທາງ　　ໜີຈາກກັນໄປ

ເຮົາ ຕ່າງມີ　　ອຸດົມຄະຕິຕ່າງກັນ
ຕ່າງຄົນຕ່າງຝັນ　　ເທຫັນຕາມໃຈ
ຄວາມຮັກຈຶ່ງແຕກ　　ຈຳແຍກແບ່ງທາງຮັກໄກ
ແລ້ວມານັ້ງຂໍອະພັຍ　　ສິ້ນເຍື້ອໃຍຮັກເຮົາກ່ອນເຄີຍ

ທີ່ຮັກຈົ່ງລືມ　　ຈົ່ງລືມອະດີດເຮົາ
ຕັດໃຈລືບສິ່ງເກົ່າໆ　　ຢ່າເກັບເອົາມາຄິດເລີຍ
ຢ່າໃຫ້ກັນເກົ່າຈອງເວນ　　ເມື່ອຍາມພົບເຫັນຈົ່ງເສີຍ
ເໝືອນເຮົາບໍ່ເຄີຍ　　ໄດ້ຮູ້ຈັກກັນ.

# ໙໒
# ສຸດທີ່ຮັກ

ນ້ອງສຸດທີ່ຮັກ ຊຶ່ງອ້າຍໝາຍປອງ
ຫວັງຢູ່ຄຽງສອງ ປະຄອງຮັກສຸດຫົວໃຈ
ແມ່ນຍິງອື່ນ ໝື່ນແສນມາກມີຫົວໄປ
ບໍ່ເຄີຍຄິດຈະສົນໃຈ ນອກໄປຈາກນ້ອງຄົນດຽວ

ແມ່ນຫາກນອນນ້ອງ ດັ່ງໄຟເຜົາຊອງ
ຮັກແລະເຝົ້າຫວງ ເປັນຫ່ວງຢູ່ທຸກສົ້ງວນາທີ
ຫວັງເປັນຄູ່ ຢູ່ຄຽງນ້ອງເຈົ້າຢ່າງນີ້
ບໍ່ເຄີຍຄິດຈະໜ່າຍໜີ ເມີນໝາງໃຫ້ເຈົ້າໝົ່ນໝອງ

ຫາກດວງດາວ ຍັງຄູ່ນະພາ
ຈະຮັກແກ້ວຕາ ຈົນດາຣາສິ້ນແສງໃສສ່ອງ
ຫາກຊາດນີ້ ອ້າຍຕ້ອງຜິດຫວັງຈາກນ້ອງ
ຊີວິດຄົງໝົ່ນໝອງ ມືດມົນຈົນສິ້ນຊີວາ

ນ້ອງສຸດທີ່ຮັກ ໂປຣດຈົ່ງເຫັນໃຈ
ອ້າຍບໍ່ເຄີຍຮັກ ຜູ້ໃດນອກຈາກແກ້ວຕາ
ຂໍເຈົ້າຢ່າ ຈືດຈາງແລະລືມສັນຍາ
ອ້າຍມີນ້ອງນີ້ລະໝາ ທີ່ຮ້ອງວ່າສຸດທີ່ຮັກ.

# ເຣືອຮັກທ່າຫົວໃຈ

ຍອດດວງໃຈ ອ້າຍນີ້ໄປບໍ່ລອດ
ເຮືອຮັກອ້າຍມາຈອດ ຈອດບ້ານນ້ອງນີ້ເອງ
ອ້າຍມີເຮືອຮັກ ບັນຈຸຮັກຈິງ ບໍ່ຕ້ອງຫວັ່ນເກງ
ເຮືອຮັກຂອງໜຸ່ມຄົນຮ້ອງເພັງຮັກແລ້ວກໍຕ້ອງຮັກຈິງ

ນັ່ງເຮືອໃຈ ຕາມນ້ຳຂອງຄິດລ້ຽວ
ເຮືອຮັກອ້າຍແສນປ່ຽວ ປ່ຽວໃຈໄຮ້ຄູ່ອີງ
ໄດ້ມາພົບນ້ອງ ທີ່ສຸດໂສພາ ໃຈກໍຮັກຈິງ
ຂໍນ້ອງນາງຢ່າໄດ້ປະອິງ ອ້າຍມອບຮັກຈິງດ້ວຍໃຈ

ໂອ... ນາວາຮັກ ຮື......
ນີ້ນ້ອງ ເປັນທ່າຈອດໄວ້
ເຮືອຮັກທີ່ໃຈນ້ອງ ລອຍລ່ອງມາແຕ່ໄກ
ຂໍຫົວໃຈ ຮັກຈິງໃຫ້ອ້າຍເຖີດໜາ

ຍອດດວງໃຈ ອ້າຍນີ້ຍອມເປັນທາດ
ເຮືອຮັກອ້າຍບໍ່ອາດ ຈາກນວນນ້ອງແກ້ວຕາ
ດ້ວຍວ່າເຮືອຮັກ ບັນຈຸຮັກເຕັມ ຈົນລົ້ນອຸຣາ
ຢ້ານເສັ່ງຈິງຢ້ານເຈົ້າຂອງທ່າ ຈະລົ້ມເຮືອຮັກອ້າຍຈົມ.

# ຄືນນັ້ນ

ສຸດທີ່ຮັກ ເວລານີ້ເຈົ້າຢູ່ໃສ ?
ແລະກໍຢູ່ຈັ່ງໃດ ຈື່ໄດ້ບໍ່ ?
ຄືນນຶ່ງ ທີ່ເຮົາພົບກັນ

ຄືນນັ້ນ ຢູ່ເງົາແສງຈັນ ໃສສ່ອງ
ເຮົາສອງ ຍຽງຄູ່ປະຄອງຊື້ງໃຈ

ຄືນນັ້ນ ຫວັງວ່ານ້ອງນັ້ນ ຈຳໄດ້
ວ່າໃຜ ອີງແອບແນບກາຍ ຈົນຂ້ອນຄືນ

ຈະຮັກກັນຈົນຊົ່ວຟ້າ ສັນຍາບໍ່ຂໍລືມເຈົ້າ
ຮັກເຮົາ ບໍ່ເຫງົາ ຂົມຂື່ນ
ເຮົາສອງເປັນຄູ່ດວງໃຈ ຮັກໃດຈະບໍ່ຫອມລື່ນ
ບໍ່ຫວານບໍ່ຊື່ນ ບໍ່ຍືນເໝືອນເຮົາ

ຄືນນີ້ ສຸດແສນໂສກີ ໝອງເສົ້າ
ຂາດເຈົ້າ ຈຶ່ງເຝົ້າຣະທົມຕຣົມອຸຣາ.

ໂອ... ໂອ... ໂອ... ໂອ...

# ພຽງນ້ອງຈາກ

ພຽງນ້ອງຈາກລາ          ນ້ຳຕາຂ້າຕົກ
ເຈັບຊ້ຳຣະກຳໃນອົກ          ດັ່ງໄຟນະຣົກເຜົາໃຈ
ເຫັນໜ້າ          ທຸກອັນນ້ອງກໍຈາກໄປ
ສູ່ຖິ່ນແຄ້ວນອັນແສນໄກ          ຂ້ານີ້ອາລັຍອາວອນ

ຍິນສຽງອ່ອນຫວານ          ນ້ອງນາງເອີ້ນສັ່ງ
ວ່ານ້ອງຂໍລາໄກຫ່າງ          ຂ້າສຸດອ້າງວ້າງເພັຽອ່ອນ
ນ້ອງຈິ່ງ          ໂຊກດີເກີດນະງານງອນ
ຈາກໄປແລ້ວຢ່າລືມຂ້າກ່ອນ          ຈິ່ງສັ່ງວອນວ່າຂ້າຫ່ວງໃຍ

ໂປຣດຄິດ          ເມດຕາ ຂ້ານີ້ນ້ອຍນຶ່ງ
ຈິ່ງມອງໃຈຂ້າໃຫ້ຊຶ້ງ          ວ່າຫຼົງຄະນຶງພຽງໃດ
ຄິດຢາກບອກ          ວ່າຮັກກໍເກງໃຈ
ເກັບຄວາມຮັກ          ຊ້ອນເອົາໄວ້ດ້ວຍຂ້າອາຍ ຂ້າອາຍ

ສິ້ນສຽງສັ່ງລາ          ນ້ອງຂ້າກໍຫ່າງ
ສູ່ຫ້ອງນະພາແສນກວ້າງ          ອ້າຍແລມອງຄ້າງ ນ້ອຍໃຈ
ກົ້ມໜ້າ ນ້ຳຕາ          ຂ້າລິນຕົກໃນ
ໝົດທາງແລ້ວທີ່ຂ້າຈະໄດ້          ເປີດຫົວໃຈ ວ່າຮັກແກ້ວຕາ.

# ປີໃໝ່ແລ້ວແກ້ວຕາ

ປີໃໝ່ແລ້ວ ແກ້ວຕາ
ສຸກຊື່ນເຖີດໜາ ຢ່າໂສກສັນ
ລືມຂຸ່ນຂ້ອງ ໝອງໃຈກັນ
ໃຫ້ປີເກົ່ານັ້ນ ຫອບພາໄປ

ປີໃໝ່ແລ້ວ ຄົນດີ
ສົດຊື່ນສຸກຂີ ຈິດແຈ່ມໃສ
ນຶກຄວາມຄິດ ຕ້ອງການສິ່ງໃດ
ກໍຂໍໃຫ້ໄດ້ ດັ່ງໃຈປອງ

ອາຍຸ ຍືນຍາວໝັ້ນ
ວັນນະ ນັ້ນຂາວຜ່ອງ
ສຸກຂະ ສຸກສົມປອງ
ພາລະ ຫ່າງໄພຍພັຍ

ປີໃໝ່ແລ້ວ ແກ້ວຕາ
ຮັກເຮົານັ້ນໜາ ຈົ່ງແຈ່ມໃສ
ເດືອນປີຜ່ານ ໝູນວົນໄປ
ຮັກເຮົາຢ່າໄດ້ ປ່ຽນໄປຕາມ.

# ສອງຝັ່ງນ້ຳຄານ

ສອງຝັ່ງນ້ຳຄານ ແລເຫັນສະພານສູງເດັ່ນ
ໂອ ງານແທ້ງານເຢັ່ນ ໄດ້ເຫັນແສງສ່ອງ ສ່ອງຜິວນະທີ
ປຽບດັ່ງແດນວິມານ ສຸດແສນສຳລານ ແທ້ຈິງຫຼືນີ້
ອ້າຍຂໍຝາກຝັ່ງໄນຕຣີ ປຣານີເຖີດສາວນ້ຳຄານ

ສອງຝັ່ງນ້ຳໃສ ຫຼັ່ງໄຫຼສູ່ລຳຂອງກວ້າງ
ນ້ຳຄານໄຫຼເປັນທາງ ຢູ່ເທິງສອງຝັ່ງ ມີພູສູງງາມ
ໂອນ້ຳຄານນ້ຳຂອງ ຕ່າງໄຫຼລົນນອງ ຄູ່ຄອງໄປນັ້ນ
ປຽບເໝືອນດັ່ງສາຍສຳພັນ ທີ່ອ້າຍນັ້ນຝາກໄອ້ຄຽງນາງ

ໂອ ຂົວງາມ ຂ້າມຝັ່ງນ້ຳຄານ
ໄດ້ໂປຣດຈົ່ງເປັນພະຍານ ຈະຂໍສາບານ ຕໍ່ນາງ
ມີຮັກດຽວ ບໍ່ຂໍຈືດຈາງ
ຫາກໄດ້ຄູ່ຄຽງດັ່ງຫວັງ ນ້ອງນາງຈົ່ງເຫັນໃຈອ້າຍ

ອ້າຍຈາກນ້ອງມາ ບໍ່ເຫັນແກ້ວຕາເໝືອນກ່ອນ
ໄດ້ແຕ່ຝັນອາວອນ ຫຼັບນອນຫຼືຕື່ນບໍ່ຫຼົງລືມໄລ
ນ້ອງຢູ່ແຄວ້ນແດນເໜືອ ບໍ່ຄິດລູນເຈືອ ຕໍ່ຄົນແຂວງໄຕ້
ໂອສາຍນ້ຳຄານແດນໄກ ຫາກຈິດໃຈ ບໍ່ຂໍລືມລາ.

# ນ້ຳລົ້ນຝັ່ງ

ຫຼຽວເບິ່ງຝັ່ງຂອງ ນ້ຳນອງໄຫຼຫຼັ່ງ
ນ້ຳໄຫຼບິນລົ້ນຝັ່ງ ໄຫຼເປັນທາງສູ່ແດນແສນໄກ
ເຫັນໝູ່ເຮືອ ລ່ອງຕາມນ້ຳໄປ
ງາມຫຼາຍນ້ຳຂອງກວ້າງໃຫຍ່ ລົມໂບກໄປຕາມສາຍນ້ຳອິນ

ເຫັນໄກສຸດຕາ ເນີນພູຜາຕ່ຳ
ເປັນແຖວທິວງົດງາມ ຟ້າສີຄາມກໍງາມເຫຼືອລົ້ນ
ເໝືອນດັ່ງລານ ຕາອັນເບື້ອງບົນ
ຊ່າງພາຫົວໃຈສຸກລົ້ນ ອ້າຍຊົມຈົນຕ້ອງຫຼົງຝັນໄປ

ນ້ຳລົ້ນຝັ່ງ ເມື່ອຍາມຝົນນອງ
ສອງຝັ່ງນ້ຳຂອງ ເປັນທາງນ້ຳນອງຫຼັ່ງໄຫຼ
ປຽບຄວາມຮັກ ອ້າຍຮັກນ້ອງລົ້ນຫົວໃຈ
ບໍ່ມີວັນລືມນ້ອງໄດ້ ຝາກຝັງໃຈ ກັບແມ່ນ້ຳຂອງ

ເຖິງຍາມນ້ຳລົງ ອ້າຍຄົງຮັກຢູ່
ໃຈຫວັງຄອຍຄຽງຄູ່ ຄອຍສົມສູ່ ດັ່ງໃຈໝາຍປອງ
ຂໍເທບໄທ້ ຈົ່ງມາຄຸ້ມຄອງ
ຝາກຮັກໄວ້ພຽງນວນນ້ອງ ໂອແມ່ຂອງຈົ່ງເປັນພະຍານ.

# ຄິດເຖິງທ່າເດື່ອ

ຄຶດເຖິງທ່າເດື່ອ ເມື່ອຍາມຈາກລາ
ມີທັງນ້ຳຕາ ອຸຣາສະອື້ນອ່ອນໃຈ
ທຸກວັນຄ່ຳຄອນ ເພາະຢູ່ຫ່າງໄກ
ແສນເສົ້າຣຶທັຍ ສຸດອາລັຍ ຫ່ວງຂວັນນາງ

ຄຶດເຖິງເຮົາສອງ ນັ່ງມອງນ້ຳໄຫຼ
ແສນເພີນສຸກໃຈ ທີ່ໄດ້ຄູ່ຄຽງຂວັນຕາ
ສາຍລົມໂບກໂບຍ ໂຊຍແຜ່ວພັດມາ
ຊາບຊຶ້ງອຸຣາ ຮັກພາໃຫ້ໃຈໄຝ່ຝັນ

ຄ້ອຍຄ່ຳ ນ້ຳໄຫຼ ລົງສູ່ເວີນວັງ
ແດນສອງຟາກຝັ່ງ ຊ່າງງາມດັ່ງແດນສວັນ
ເມື່ອແລມອງ ພາໃຫ້ສອງເຮົາສຸກສັນ
ໂອ ຈອມຂວັນ ພາບນັ້ນອ້າຍຍັງຈຳໄດ້

ຄຶດເຖິງທ່າເດື່ອ ເມື່ອຍາມຈາກລາ
ແສນເສົ້າໜັກໜາ ດັ່ງຟ້າຜ່າລົງຫົວໃຈ
ຄຶດມານ້ຳຕາ ອ້າຍຫຼັ່ງລິນໄຫຼ
ບໍ່ຢາກຫ່າງໄກ ສຸດອາລັຍສຸດຄ່ຳຄອນ.

# ເມື່ອສິ້ນຄວັນຫມອກ

ແສງສ່ວາງ ແຫ່ງດວງອາທິດ
ທອນມາອີກຫົນ ນະພານຶດນິນກໍແຈ່ມໃສ
ລົມເຢັນໆພັດຍາມເຊົ້າຕູ່ ໝູ່ເຜີ້ງຕອມເກສອນດອກໄມ້
ຈິດໃຫ້ ດູດດື່ມຣົດຫວານ

ສຽງວິວອິດ ແວວມາແຜ່ວຜີວ
ພັດປີວກັບລົມ ໄດ້ຟັງຊື່ນຊົມສຸດປະມາ
ຍາມກໍາເວນເຄາະເຂນສິ້ນໄປ ສຸດທີ່ໝາຍໃຫ້ແນວກິດກັນ
ສຸກສັນ ກໍຄືຊື່ນໃຈ

ເມື່ອສິ້ນຄວັນໝອກ ແຫ່ງຮັກ
ສິ້ນອຸປສັກ ທາງຮັກກໍແຈ່ມໃສ
ເໝືອນຟ້າງາມຍາມທີວາ ເມື່ອເມຄາເລືອນຫາຍ
ແດນວິລັຍ ສວາດຕາ

ແມ່ນບຸນສ້າງ ຮ່ວມທາງກັນແລ້ວ
ແຄ້ວກັນບໍ່ໄດ້ ເຖິງຢູ່ຫົນໃດ ກໍມາຫາ
ພຽງດວງໃຈຊື່ຕຣົງຄົງໝັ້ນ ຈະສຸກສັນຊົ່ວດິນແລະຟ້າ
ສັດທາ ຮັກດຽວຈົນຕາຍ

# ຮັກຄືນສຸດທ້າຍ

ຂໍ ຮັກນາງເປັນຄົນສຸດທ້າຍ
ຂໍ ມອບໃຈໃຫ້ນ້ອງຜູ້ດຽວ
ຍິງອື່ນ ບໍ່ໝາຍບໍ່ຂ້ອງກ່ຽວ
ຮັກແຕ່ນ້ອງຜູ້ດຽວ ຜູ້ດຽວເທົ່ານີ້

ຂໍ ຮັກນາງດັ່ງຕາທັງສອງ
ຂໍ ຄຽງຄອງຕາບສິ້ນຊີວິ
ຈະພຽນ ສ້າງຕົວເພື່ອນ້ອງຄົນດີ
ເພື່ອສຸກສອງເຮົານີ້ ອ້າຍຍອມສູ້ທົນ

ພຽງນ້ອງກໍຮັກ ຊື່ສັດຕໍ່ອ້າຍ
ລຳບາກຢາກແຄ້ນພຽງໃດ ດວງໃຈນ້ອງບໍ່ປ່ຽນອົນ
ອ້າຍຄົງຈະສຸກໃຈລ້ຳ ອາບເຫື່ອຕາງນ້ຳກໍຈະທົນ
ດີ້ນຮົນ ສ້າງສາຖານະ ໃຫ້ດີ

ອອນ ນ້ອງເປັນແຮງໃຈແກ່ອ້າຍ
ຈົນ ຊີບວາຍຢ່າຄິດໜ່າຍໜີ
ຊ່ວຍກັນ ສ້າງສວັນວິມານສິ້ນດີ
ບັ້ນປາຍ ແຫ່ງຊີວິດນີ້ ອ້າຍມີພຽງນ້ອງ.

# ເພື່ອກັນລືມ

ເພື່ອກັນລືມ ນ້ອງຊຸ່ມໄວ້ບົນຫຼັງພາບ
ເພື່ອກັນລືມ ຕຣາບດິນຟ້າຈະສລາຍ
ເພື່ອກັນລືມ ຍາມພາກຈາກໄກ
ເພື່ອກັນລືມ ນ້ອງໃຫ້ ພາບໃບນ້ອຍເປັນພະຍານ

ເພື່ອກັນລືມ ຮັກເຮົາທີ່ເຄີຍເຊີຍຊື່ນ
ເພື່ອກັນລືມ ອັນຄືນຂໍຝາກສຳພັນ
ເພື່ອກັນລືມ ນານແສນເທົ່ານານ
ເພື່ອກັນລືມ ອ້າຍອ່ານ ຍາມໃດຫວານໃຈເຫຼືອທີ່

ຮອຍຍິ້ມໃນພາບ ຊາບຊຶ້ງ
ຊວນໃຫ້ຄິດເຖິງ ເຈົ້າຂອງພາບທຸກນາທີ
ແວວເນດລອຍເລືອນ ເໝືອນຫ່ວງຍັງມີ
ພາບຮັກແຜ່ນນີ້ ອ້າຍມີແຕ່ເຝົ້າເບິ່ງແຍງ

ເພື່ອກັນລືມ ອ້າຍເກງນ້ອງເອງລືມກ່ອນ
ເພື່ອກັນລືມ ວອນໃຈນ້ອງຢ່າປ່ຽນແປງ
ເພື່ອກັນລືມ ດ້ວຍຮັກຢ່າງແຮງ
ເພື່ອກັນລືມ ຫຼົງແກ້ງ ລູບພິດພາບໄຮ້ອິນຍາ.

# ແມ່ຮ້າງລຳພັນ

ຄົນເຂົາຊ່າ	ວ່ານ້ອງເປັນແມ່ຮ້າງ
ນ້ຳຕານ້ອງນີ້ໄຫຼອາງ	ແມ່ຮ້າງນີ້ໝົດຄວາມໝາຍ
ທຸກນາທີ	ນ້ອງມີແຕ່ໄຫ້
ຜົວຮັກເຂົາຈາກລະໄປ	ຫຼົງໜີໄປບໍ່ກັບຄືນມາ

ສິ້ນທຸກຢ່າງ	ຊ່າງອະນາດໃຈແທ້
ບໍ່ມີຜູ້ໃດຫຼຽວແລ	ແມ່ເອີຍກໍແກ່ຊະຮາ
ພໍ່ກໍຕາຍ	ອ້າຍນ້ອງເມີນໜີໜ້າ
ສິ້ນແລ້ວສິ້ນບ່ອນເພິ່ງພາ	ຜູ້ໃດເມດຕາຂໍອອນຊ່ວຍທີ

ລູກສອງຄົນ	ເຫຼືອທົນອົດທີວຮ້ອງໄຫ້
ເຫັນຢືດນ້ຳຕາລູກໄຫຼ	ຍິ່ງອຸກຮຶທັຍເຫຼືອດີ
ກອດລູກນ້ອຍ	ອອດອອຍຈົນນ້ຳຕາລີ່
ລູກເອີຍພໍ່ເຈົ້າບໍ່ມີ	ຢຸດເສັຽທີຢ່າແອ່ວນານດາ

ຄົນເຂົາຊ່າ	ວ່ານ້ອງເປັນແມ່ຮ້າງ
ຜູ້ໃດກໍຄົງໄດ້ຟັງ	ແມ່ຮ້າງນັ້ນໝົດຮາຄາ
ຄິດນ້ອຍໃຈ	ໃຜຜູ້ໃດກໍວ່າ
ແມ່ຮ້າງນັ້ນສິ້ນຮາຄາ	ເຫຼືອພຽງນ້ຳຕາໄວ້ແທນນ້ຳໃຈ.

# ເຊໂປນລຳລຶກ

ເຊໂປນ ເມືອງງາມແຫ່ງຄັ້ງກ່ອນເກົ່າ
ມີອົງພະເຈົ້າ ຊົນພູສະຖາປະນາ
ຢູ່ພູສະງົ້ ທໍຄຳສອຍເດັ່ນງາມຕາ
ມີພະນາງສຸມັງຄະລາ ນຳພານະຄອນນັ້ນ

ເຊໂປນ ດິນແດນສຸກສັນງາມຍິ່ງ
ມີທຸກໆສິ່ງ ສົມບູນດັ່ງແດນສວັນ
ຜູ້ໃດໄປເຫັນ ມີເອັ້ນຊົມຊື່ນສຸກສັນ
ເຫັນນ້ຳເຊພັດໂງ່ນຫີນຊັນ ເຝົ້າຝັນຢາກຢູ່ເຊໂປນ

ຖ້ຳປ່ອງ ຕາດຕະໂກຍ ພິງໄພພຶກສາ
ດ່ຽວນີ້ສົງຄາມເຂັ່ນຂ້າ ຮາວີຍ່ຳຍີປີ້ປົ່ນ
ບ້ານແຕກສລາຍ ໜີຍາຍໄປທຸກແຫ່ງຫົນ
ປະຖິ່ມທີ່ເຄີຍສຸກລົ້ນ ໄປປົນກັບຄົນແດອ້ນອື່ນ

ເຊໂປນ ຄົງມີຈັກວັນເຮືອງຮຸ່ງ
ຂ້າຍັງໝາຍມຸ້ງ ສ້າງສາເວລາກັບຄືນ
ຂ້າຈຳໃຈໜີ ພັຍລິດ້ອຍຈິດຂົ່ນຂືນ
ຄົງມີນານຂ້າຈະຫອນຄືນ ຈະຄືນມາສ້າງເຊໂປນ.

# ຄຶດເຖິງ

ອ້າຍຄົງຈະຕາຍ ເພາະຄວາມຄຶດເຖິງ ນ້ອງ
ຄຶດຫາແຕ່ນ້ອງ ຄຶດຮອດແຕ່ນ້ອງ ຜູ້ດຽວ
ຄວາມຮັກຝັງປັກຊວງເລິກ ຫົວຄ່ຳຍາມເດິກບໍ່ແລຫຼຽວ
ຮັກນ້ອງຄົນດຽວ ຄົນດຽວສເມີນາ

ເຖິງຕົວຢູ່ໄກ ຫົວໃຈຍັງໂຫຍ ຫອນ
ເຊົ້າຄ່ຳບ່າຍຄອນ ຫານອນຢູ່ທຸກເວລາ
ຢ້ານຮັກຈະໜ່າຍໆແໜງ ລະແວງໃຈຢູ່ຢ່າງຜວາ
ຄຶດແລ້ວນ້ຳຕາ ອ້າຍຫຼັ່ງລົງໃຈ

ເວລານາທີ ທີ່ອ້າຍຫ່າງນ້ອງ
ອ້າຍທຸກໝົ່ນໝອງ ຢ້ານນ້ອງປ່ຽນໃຈ
ຫາກສຸດທີ່ຮັກ ຮັກຈິງຈາກໃຈ
ອ້າຍຂໍມາຕາຍ ຕໍ່ໜ້າຕັກນາງ

ຮັກນາງບໍ່ລືມ ຮັກດຽວບໍ່ລືມ ຫຼົງ
ຫົວໃຈໝັ້ນຄົງ ຊື່ຕຮົງຕໍ່ນ້ອງ ບໍ່ຈາງ
ອ້າຍຮັກອ້າຍຫ່ວງຫ່ວງຫຼາຍ ແທບທົນບໍ່ໄດ້ເກືອບໃຈພັງ
ຫຼົງເພີ້ພະວັງ ຮັກນາງຜູ້ດຽວ.

# ປາກໃຫ້ໂລກນີ້

ປາກໃຫ້ໂລກນີ້ ມີເຮົາສອງຄົນ
ເຮົາຄົງຈະພົ້ນ ຈາກການຕີສິນ
ຄວາມຮັກຄວາມຫວັງເຮົານັ້ນຄົງຈິງດັ່ງຝັນຢູ່ອາຈີນ
ສິນດັ່ງຖວິນ ຝັນໄຝ່

ຫາກໃນໂລກນີ້ ມີເຮົາສອງຄົນ
ເຮົາຄົງສຸກລົ້ນ ຍິ່ງກວ່າສຸກໃດ
ໃຈອ້າຍໃຈນ້ອງໝັ້ນເໝາະມີພຽງສະເພາະບໍ່ເພື່ອໃຜ
ຕັ້ງຈິດໝັ້ນໝາຍ ແນ່ນອນ

ແຕ່ໃນໂລກນີ້ ຍັງມີມະນຸດ ສຸດພັລນາ
ຄອຍເຕືອນຄອຍວ່າ ຄອຍຫຼອກຄອຍຫຼອນ
ຢູ່ໃສມີຮັກ ຢູ່ຫັ້ນມີທຸກ ສຸດແສນອາວອນ
ໄດ້ຍິນຄຳສອນ ວ່າອອນສອນມາ

ຫາກແມ່ນໂລກນີ້ ມີເຮົາສອງຄົນ
ໂລກກໍຈະພົ້ນ ຈາກພັຍນາໆ
ຄວາມໂລບຄວາມຫຼົງຄວາມໂກດຄົງເບົາແບ່ງລົດ ກວ່າເຄີຍມາ
ສິ້ນຄວາມອິດສາ ສິນປອງ.

# ເປັນມິດກັນດີກວ່າ

ເພາະນ້ອງເປັນຍິງ ສູງສັກ
ຫົນທາງແຫ່ງຮັກ ຈຶ່ງບໍ່ແຈ່ມໃສ
ເຖິງເຮົາຮັກກັນ ຈົນແທບຂາດໃຈ
ກໍບໍ່ມີຫວັງໄດ້ ຢູ່ຮ່ວງຄຽງໝອນນິທຣາ

ເພາະນ້ອງເລີດລອຍ ສູງສົ່ງ
ຫົວໃຈອ້າຍຄົງ ຕ້ອງຜິດອາຍາ
ແມ່ນຄວາມຮັກເປັນ ດັ່ງຫວັງຕັ້ງຕາ
ກໍບໍ່ທານວິວາ ບໍ່ກ້າຈະໄຝ່ເກີນໂຕ

ຫົງຄວນຄູ່ຫົງ ເຫີນຟ້າ
ກາຄວນຄູ່ກາ ສຽ່ງນຈຽ່ນຕົວ
ບໍ່ຢາກໃຫ້ນ້ອງ ມີທຸກໝອງມົວ
ເຮົາເປັນມິດກັນດີກວ່າ ດີກວ່າຫົນໝອງຊີວີ

ເພາະອ້າຍເປັນຄົນ ຕ້ອຍຕ່ຳ
ມີຄວນຈະທຳ ໃຫ້ນ້ອງເຊື່ອນສີ
ຕັ້ງໃຈໄວ້ພົບ ທາກຊາດໜ້າມີ
ຢ່າໄດ້ເໝືອນຊາດນີ້ ຮັກມີກຳແພງກີດກັນ.

# ໑໘ ມາເຖີດເພື່ອນ

ມາເຖີດເພື່ອນ      ຢ່າມົວຊ້າຢູ່
ຮີບຮຽນຮູ້      ຫາວິຊາເຂົ້າໃສ່ຕົນ
ການຮຽນນີ້      ມີປະໂຍດເຫຼືອລົ້ນ (ຊໍ້າ)
ໜຸ່ມລາວເຮົາທຸກຄົນ      ຄວນສແວງຫາວິຊາ

ມາເຖີດເພື່ອນ      ຢ່າເຍື້ອນຢູ່ນານ
ເພາະສັງຂານ      ນັ້ນໝູນວຽນຕາມເວລາ
ຍາມໜຸ່ມນ້ອຍ      ຢ່າທໍ້ຖອຍນ້ອຍໜ້າ (ຊໍ້າ)
ຈົ່ງມີໃຈມານະ      ອົດສາສູ້ຮຽນໃຫ້ໄດ້

ເພາະການຮ່ຳຮຽນ      ເປັນແສງຫຼຽນແຫ່ງຄວາມຈະເຣີນ
ຂ້າຂໍຊວນເຊີນ      ຊາວໜຸ່ມເຮົາ ຮີບຟ້າວຮ້ອນໃຈ
ຢ່າມົວກຽດຄ້ານ      ມົວຝັນຫຼົງລະເມີຢູ່ໄດ້
ຮີບຮຽນໄວໆ      ເພື່ອຮັບໃຊ້ປະເທດຂອງເຮົາ

ມາເຖີດເພື່ອນ      ຢ່າມົວຝັນເພີ້
ຢ່າມົວເຜີ      ຫຼົງລະເມີເລີຍໜຸ່ມລາວ
ຊາດຈະເຮືອງ      ເມືອງຈະຮຸ່ງຫຼຽນເຂົາ (ຊໍ້າ)
ກໍໃນເມື່ອຊາດລາວ      ເຮົາມີຜູ້ນຳທີ່ດີ.

# ເມືອງຊຳລຳລຶກ

ເມືອງຊຳແດນເໜືອ  ງາມເຫຼືອສຸດພັລນາ
ທົວທັດທ້ອງນາ  ປ່າດົງທົ່ງກວ້າງງາມຍິ່ງ
ນ້ຳຊຳໄຫຼຜ່ານ  ພູຜາໜ້າເພີນພັກພິງ
ງາມແທ້ຊວນຊົມທຸກສິ່ງ  ງາມຈິງຈັບໃຈບໍ່ຫາຍ

ເມືອງຊຳເຈົ້າເອີຍ  ກ່ອນເຄີຍສຸກສົມຮົ່ມເຢັນ
ຊຳເໜືອນັ້ນເປັນ  ຖິ່ນຖານສຳຣານຫົວໃຈ
ສາຍັນຄ້ອຍຄ່ຳ  ຢູ່ຕາມລຳນ້ຳຜ່ອງໃສ
ໜຸ່ມສາວອາບເຢັນຊື່ນໃຈ  ຫາໃສຈະເທົ່າເມືອງຊຳ

ອຸດົມສົມບູນ  ໄປດ້ວຍຊັບຢູ່ໃນດິນ
ຊາວເມືອງຢູ່ກິນ  ກັນດ້ວຍສິນຢູ່ໃນນ້ຳ
ຄ່ຳຄືນແອ່ວແຄນ  ແອ່ວແພງນ້ອງສາວເມືອງຊຳ
ທົບຄອນແລ້ວຍິ່ງສຸກລ້ຳ  ໂອທຳມະຊາດເມືອງເໜືອ

ເມືອງຊຳເຈົ້າເອີຍ  ເຖິງເຈົ້າຢູ່ແດນກັນດານ
ຍັງເໝືອນວິມານ  ຕະການບໍ່ມີຮູ້ເບື່ອ
ເຖິງຄາວຈຳຈາກ  ຈຳພາກຈາກຖິ່ນເມືອງເໜືອ
ຄິດເຖິງເມືອງຊຳທຸກເມື່ອ  ບຸນເຫຼືອຈະຫວນກັບມາ.

# ຊາຕາອາພັບ

ປູ່ສູງໜັກໜາ ແສນໄກຫຼາຍກວ່າ
ສຸດໄຝ່ຄວ້າ ນ້ອງມາເປັນຄູ່ຂວັນໃຈ
ໄດ້ແຕ່ແຫງນ ເຝົ້າແຫງນເງີຍຄໍຝັນໄຝ່
ດູດດັ່ງກັບຄືນໜາວໄຂ້ ໜາວເໜັບຫົວໃຈສັ່ນສາຍນານປີ

ບໍ່ມີຄົນເຫັນ ເຖິງໃນໃຈຂ້າ
ອາສນາ ນ້ອຍກວ່າຈະເອື້ຍອະຈີ
ໄດ້ແຕ່ຫຼິງ ຮັກເຂົາຂ້າງດຽວຫຼືນີ້
ກັນໃດໝູນນໍາຍ່ຳຍີ ເໝືອນເກີດມາມີບາບເອນເຂັນໃຈ

ໄກເກີນມືຄວ້າ ໄຝ່ຫາ
ຂ້າຕຣອນອຸຣາ ຕຣົມໃຈ
ຂໍວອນເທບໄທ້ ຊ່ວຍດົນຈອນໃຈ
ຂໍນາງຈິ່ງໄດ້ ອ່ອນໄຫວມຸ້ງໃຈເມດຕາ

ດັ່ງມີບາບໜາ ດັ່ງຟ້າລົງໂທດ
ໂກດຕົວຂ້າ ແສນດ້ອຍຕ້ອຍຕ່ຳເໝືອນກາ
ກ່ອນຈະຕາຍ ຊີບວາຍແຜ່ນດິນຖົມໜ້າ
ຈະຂໍບອກຈອນຂວັນວ່າ ຮັກເທົ່າຊີວາຊື່ວຟ້າມະລາຍ.

# ຝາກເພັງແທນໃຈ

ຂໍຝາກເພັງນີ້ ໄວ້ແທນດວງໃຈ
ແມ່ນຕົວຫ່າງໄກ ໃຫ້ນ້ອງໄດ້ຟັງ
ເພັງນີ້ອ້າຍຂໍຝາກຝັງ ແທນຕົວເມື່ອຍາມໄກຫ່າງ
ເພື່ອນ້ອງນາງ ໄດ້ຟັງແກ້ເຫງົາ

ແມ່ນເຈົ້າຟັງເພັງ ທີ່ອ້າຍຮ້ອງມາ
ຂໍໃຈເຈົ້າຢ່າ ໄປຄິດໂສກເສົ້າ
ອ້າຍນີ້ຢູ່ດົງປ່າເຂົາ ອ້າຍໄປເພື່ອຊາດຂອງເຮົາ
ຈຶ່ງຂໍວອນເຈົ້າ ດ້ວຍເພັງຈາກໃຈ

ຍາມ ອ້າຍຈາກເຈົ້າມາ
ຄຳໝັ້ນສັນຍາ ຍັງຈຳຝັງດວງໃຈ
ເຖິງ ວັນໝູນວຽນປ່ຽນໄປ
ອ້າຍຍັງບໍ່ປ່ຽນໃຈ ໃຫ້ຮັກເຮົາຕ້ອງແປຜັນ

ແມ່ນໄດ້ຍິນເພັງ ທີ່ອ້າຍຮ້ອງມາ
ຂໍນາງເຈົ້າຢ່າ ໄປຄິດໄຫວຫວັ່ນ
ຂໍນ້ອງຈົ່ງນອນຫຼັບຝັນ ບໍ່ນານຄົງໄດ້ພົບກັນ
ຄວາມຮັກເຮົານັ້ນ ຈະຕ້ອງສົມຫວັງ.

# ອ້າຍຍັງເປັນໂສດ

ນ້ອງສາວ ອ້າຍນີ້ຍັງເປັນໂສດ
ແລະກໍຍັງສົດໆ ມິດແນງບໍ່ຕອນໄຕ່
ເຣື່ອງຜູ້ຍິງ ອ້າຍນີ້ຍັງອ່ອນໄປ
ເພາະເປັນຄົນຂີ້ອາຍ ຈຶ່ງບໍ່ມີຄູ່ຄອງ

ນ້ອງເອີຍ ອ້າຍບໍ່ເຄີຍຮູ້ຈັກ
ຊື່ນຊົມຫຼືອົກຫັກ ເຣື່ອງຮັກບໍ່ເຄີຍປອງ
ຢ້ານຜູ້ຍິງ ພາຫົວໃຈໝົ່ນໝອງ
ແຕ່ພໍພົບໜ້ານ້ອງ ເຫດໃດຈຶ່ງຢາກລອງຮັກ

ອາດເປັນ ເພາະນ້ອງງາມດັ່ງນາງຟ້າ
ອາດເປັນເພາະສາຍຕາ ນ້ອງຄົນສຽບແທງໃຈໜັກ
ອາດເປັນເພາະຍີ້ມ ຂອງນາງຫວານໜ້າຮັກ
ຫົວໃຈອ້າຍຈຶ່ງຢາກ ອື... ບໍ່ຈັກວ່າຢາກຫຍັງ ຢາກຝາກຮັກນາງ

ນ້ອງສາວ ເຈົ້າເນດຕາຫຼືບໍ່ ?
ແມ່ນເຫັນໃຈແລ້ວກໍ ຍີ້ມພໍເປີດທົ່ນທາງ
ຈິດໃຈອ້າຍ ຈະມອບໃຫ້ແກ່ນາງ
ຈະບໍ່ຍອມຢ່າຮ້າງ ຫາກນາງນ້ອງບໍ່ປ່ຽນໃຈ.

# ຈາກພຽງກາຍ

ອ້າຍຈຳ  ຈາກນ້ອງໄປ
ນ້ອງຢ່າໄດ້  ເສົ້າໃຈໜັກໜາ
ຂໍນ້ອງ  ຈົ່ງຄອຍຖ້າ
ອ້າຍຈະ  ກັບມາເລວໄວ

ຍອດຮັກ  ອ້າຍນີ້ເອີຍ
ນ້ອງຢ່ານຶກເລີຍ  ວ່າຈະປ່ຽນໄປ
ອ້າຍຂໍ  ວອນໄວ້
ອິງເທບໄທ້  ຈົ່ງເປັນພະຍານ

ຈາກກັນ  ພຽງກາຍ
ແຕ່ຫົວໃຈ  ຂອງເຮົາຢູ່ຮຽງຄຽງສອງ
ໝາຍປອງຮັກດຽວ  ອ້າຍມີຮັກດຽວ
ຮັກດຽວ  ຮັກດຽວຈົນຕາຍ

ເມື່ອໃດ  ອ້າຍກັບມາ
ຂໍມອບຊີວາ  ດວງໃຈແລະກາຍ
ຊົ່ວຟ້າດິນ  ສລາຍ
ຈະບໍ່ຫ່າງໄກ  ໃຫ້ນ້ອງຕຣົມ.

# ປາກຟາກຮັກ

ປາກຟາກຄວາມຮັກ ໃຫ້ແກ່ນາງ
ຫົວໃຈອ້າຍຊ່າງ ຕື່ນຕັນໄຫວຫວັ່ນສະທ້ານ
ເໝືອນນຶ່ງມົນຕຣາຟ້າລັ່ນ ຄອຍເຝົ້າຈະເອົາໂຫດຫັນ
ມາຄອຍກາງກັ້ນ ຫົວໃຈບໍ່ອາຍ

ຍິ່ງມອງຍິ່ງສວຍ ຍິ່ງງາມ
ສົມຊື່ສົມນາມ ຄົນງາມມີຄູ່ຫຼືໃດ ?
ໄດ້ແຕ່ມອງໆຂວັນໃຈ ທີ່ໄດ້ຫວັ່ນໄຫວໝາຍປອງ
ສເນ່ນ້ອງນາງ ຝັງໃຈອ້າຍນີ້ບໍ່ເລືອນ

ເໝືອນ ຟ້າປະທັບດວງໃຈ
ຈະຫາຍິງໃດ ງາມນ້ຳໃຈບໍ່ມີເໝືອນ
ປາຖນາ ຂວັນຕາມາເປັນເພື່ອນ
ຮ່ວມຊີວີ ຄົນດີທີ່ອ້າຍໝາຍໃຈ

ປາກຟາກຄວາມຮັກ ກັບສຽງເພັງ
ອ້າຍຈະບັນເລງ ເປັນເພັງຮັກຈາກດວງໃຈ
ແມ່ນນ້ອງໄດ້ຍິນຄັ້ງໃດ ຈົ່ງໄດ້ເຂົ້າໃຈເສັຽທີ
ຕຣາບຊົ່ວຊີວີ ອ້າຍຮັກນ້ອງນີ້ນາງດຽວ.

# ປາກບອກຮັກ

ປາກຈະບອກ ຈັກຄຳວ່າຮັກ
ບອກໃຫ້ຮູ້ຈັກ ວ່າຮັກພຽງໃດ
ອ້າຍອົດມານານປີ ທີ່ເກັບກຳບັງໄວ້
ຫົວໃຈ ອ້າຍປາກບໍ່ເປັນ

ຮັກອີຫຼີ ບໍ່ຫຼອນຫຼອກລອງ
ອ້າຍຫອງອ້າຍຫ່ອງ ຊອງແທບກະເດັນ
ຍາມນ້ອງປາກກັບໃຜ ຫົວໃຈເກືອບຢຸດເຕັ້ນ
ເໝືອນຄົນ ເປັນບ້າຈີດພໍ

ດວງໃຈອາວອນ ກິນນອນລຳພຶງ
ເຝົ້າແຕ່ຄິດເຖິງ ນອນນ້ອງບັງອອນ
ພຽງເຫັນໜ້ານ້ອງ ຈອບມອງນິທອນ
ຫົວໃຈອຸທອນ ຮ້ອນສຸດທົນໄຫວ

ປາກຈະບອກ ວ່າຮັກວ່າຮັກ
ມັນຊ່າງຍາກໜັກ ຮັກຊ້ອນໃນໃຈ
ແມ່ນນ້ອງຄິດສົງສານ ຂໍໃຫ້ທານຮັກໄວ້
ຂໍຕາຍ ຢູ່ແນບອົກນາງ

# ຫນາວ

ໜາວ ໆ ໆ　　ໜາວລົມຈະຕ້ອງຫົ່ມຜ້າ
ຜູ້ໃດໜາວຟ້າ　　ໜາວຟ້າຈະຕ້ອງຜີງໄຟ
ໜຸ່ມສາວ　　ໜາວໃຈ
ເຮັດຈັ່ງໃດ　　ຈິເຊົາໜາວເອີຍ

ຊາຍ　ສວັດດີນ້ອງສາວ　　ນ້ອງໜາວໆໃຈມາຈັກປີ
ຢ່າອາຍໜ່າຍໜີ　　ໂປຣດຟັງອະຈິອິທີແກ້ໜາວເອີຍ
ຫາຄູ່ຢູ່ເຊີຍ　　ແນບຄະເນີຍ ຈະເຫີຍໜາວທັນ

ຍິງ　ສວັດດີອ້າຍເອີຍ　　ຂໍເພີຍໜາວມາຕັ້ງເຈັດປີ
ນ້ອງບໍ່ເຄີຍມີ　　ຜູ້ຫວັງໄມຕຣີຈັ່ງຊີ້ກັບນ້ອງເລີຍ
ອ້າຍຂາດຄູ່ເຊີຍ　　ຮີບຈອງເລີຍຢ່າປ່ອຍໃຫ້ໜາວໃຈ

ຮ່ວມ　ໜຸ່ມສາວທັງຫຼາຍ　　ໝັ້ນໝາຍໄວ້ນັ້ນຈຶ່ງແຕ່ງງານ
ຢ່າມົວໜາວກັນ　　ບໍ່ທັນຮັກກັນເຖີງວັນມາຊື່ນເຊີຍ
ຫາຄູ່ເຖີດເອີຍ　　ຢ່າທຳເສີຍ ເພື່ອນເອີຍຈະໜາວຕາຍ

# ຈາກວຽງຈັນ

ໂອວຽງຈັນເອີຍ ຂ້າຂໍລາໄປ
ຝາກຄວາມອາລັຍ ຮື່ທັຍອາວອນ
ຄິດເຖິງແດນດິນ ຖິ່ນທີ່ເຄີຍນອນ
ໄດ້ແຕ່ຖອດຖອນ ດວງໃຈ

ເພື່ອນທີ່ຮັກ ຂ້າຈະຂໍລາ
ຈາກໄປໄກຕາ ແລ້ວຍັງອາລັຍ
ຄິດເຖິງວັນຄືນ ທີ່ເຄີຍຊື່ນໃຈ
ເວນກັນອັນໃດ ມາພາກຈາກກັນ

ຍາມຄືນວັນເພັນ ເຫັນຈັນເຕັມດວງ
ຂ້ານຶກເປັນຫ່ວງ ໄຝ່ຝັນ
ເພື່ອນເອີຍ ຫາກແມ່ນຄິດເຖິງກັນ
ຂໍໃຫ້ມອງດູຈັນ ເຮົາຄົງພົບກັນໃນດວງຈັນທາ

ຈາກວຽງຈັນ ແລະເພື່ອນທີ່ຮັກ
ຈາກຍອດຮັກ ໄປດ້ວຍນ້ຳຕາ
ອ້າຍຕ້ອງຣະທົມ ໝົ່ນໝອງອຸຣາ
ຈາກກັນໄປໄກຕາ ວັນໜ້າຄົງໄດ້ພົບກັນ.

# ນ້ອງຄືທຸກສິ່ງ

ດຸດດັ່ງດາຣາ ສາດແສງມາຈາກສວັນ
ດັ່ງນຶ່ງດວງຈັນ ສ່ອງຜືນພັຕພີ
ນາງຄືຫົນທາງ ສ່ອງຊີວິດ
ເປັນຣາຊີນີ ແລະເຈົ້າຫົວໃຈ

ດຸດດັ່ງນ້ຳຝົນ ລີ້ນໄຫຼມາຈາກສວັນ
ຕົກເປັນລຳທານ ລໍ່ລ້ຽງພືກສາໄປ
ນາງຄືກຳລັງ ແຫ່ງພລັງນ້ຳໄຫຼ
ໄຫຼລ້ອນຣືທັຍ ໃຫ້ຊີວິດຍືນ

ນ້ອງຄືທຸກສິ່ງ ທີ່ອ້າຍຕ້ອງການ
ຝາກໃຈໄຝ່ຝັນ ທຸກວັນແລະຄືນ
ນັ່ງນອນຍັງເພີ້ ລະເມີຍາມຕື່ນ
ທຸກວັນແລະຄືນ ສຸດຝັນຫົວໃຈ

ຂາດນາງອາເວ້ ດັ່ງນະພາຂາດເດືອນດາວ
ຕ້ອງທົນງຽບເຫງົາ ໂສກເສົ້າສຸດເສັ້ງໃຈ
ຄືນວັນອາວອນ ຖອດຖອນຣືທັຍ
ສິ້ນຮັກໂຣມ ໄດ້ແຕ່ເພີ້ຢູ່.

# ຈາກພຽງດວງໃຈ

ເມື່ອຮັບຄຳສັ່ງ ຟັງແລ້ວໃຈຫາຍ ເໝືອນຕາຍທັງເປັນ
ຄ້າຍຖືກກະເດັນ ຈາກໂລກນີ້ໄປ
ຫ່ວງໃຍອາວອນ ຣະທົມດວງໃຈ
ຕ້ອງຈາກໄປໄກ ຖິ່ນເຄີຍສຸກສັນ

ດັ່ງຟ້າຂາດເດືອນ ດັ່ງເດືອນອັບແສງ ແຜງຄວາມມືດມົນ
ເໝືອນດັ່ງສາຍຊົນ ຂາດຮັກສານ້ຳ
ຕ້ອງຈຳໃຈລາ ອຸຣາໄຫວຫວັ່ນ
ແລ້ວຈາກຫ່າງກັນ ຕາມທາງແຫ່ງກັນ

ເປັນເຮືອລຳດຽວທີ່ລອຍ ຢູ່ຕາມສາຍຊົນ
ຟອງນ້ຳພັດໝູນ ວຽນຕາມ
ເຫັນພຽງຂອບຟ້າ ອຸຣາຣະກັນ
ລະເມີຄວນຄ່ຳ ສຸດຫວງ

ເມື່ອເຖິງໜ້າທີ່ ມີທາງໜ້ານັ້ນ ຟ້າບັນດານມາ
ໃຫ້ໝົດປັນຍາ ຈະຫຼີບໜີກ້ວາງ
ຈາກພຽງດວງໃຈ ຮັກໄວ້ເປັນຫ່ວງ
ຄອຍກັບມາຫວງ ເມື່ອຍາມສິ້ນເວນ

# ປ່າເຊື່ອຜູ້ຊາຍ

ປ່າເຊື່ອຜູ້ຊາຍ ໜ້າອ້າຍຫຼັງຫຼອກ
ຍາມຮັກກໍບອກ ແຕ່ຄຳຫວານໆ
ຜູ້ຊາຍຜູ້ຊາຍ ນີ້ແລະຍອດທໍຣະມານ
ສຸດແສນລຳຄານ ບໍ່ຫານຈະພົລນາ

ປ່າເຊື່ອຜູ້ຊາຍ ເຫັນຫຼາຍພາຍນາກ
ຄຳຫວານທີ່ປາກ ຈະພາຂື່ນຂົມ
ຜູ້ຊາຍຜູ້ຊາຍ ໝາຍຫຼອກໃຫ້ຊ້ຳພຽງຊົມ
ທັງເຈັບທັງຂົມ ລົມປາກຜູ້ຊາຍ

ຕ່ຳໜ້າ ສົມຍາສາບານ
ທັງໄຫວ້ທັງອານ ຢາກສົນໃຈໝາຍ
ສົມຍາບໍ່ລື້ມ ຈົນຫາຍບໍ່ທັນເທົ່າໃດ
ຍາມເຂົາຫ່າງໄກ ຫາໃໝ່ເຊີຍຊົມ

ປ່າເຊື່ອຜູ້ຊາຍ ເຫັນຫຼາຍລື້ນລົມ
ຈະຊ້ຳຈະຕຣົມ ຈະເສັຽນ້ຳຕາ
ຜູ້ຊາຍຜູ້ຊາຍ ລ້ວນແຕ່ໃຊ້ກົນມານຍາ
ແສນເບື່ອຣະອາ ໜັງໜ້າຜູ້ຊາຍ.

# ອາລັຍຮັກ

ຄ່ຳແລ້ວ                    ອ້າຍເອີຍ
ກ່ອນນີ້ອ້າຍເຄີຍ            ມາຫານ້ອງຢູ່
ເຄີຍເຫັນເຄີຍຊົມ            ເຄີຍຈົ່ມເຄີຍເອົ້າເປົ່າຫູ
ບັດນີ້ນ້ອງຕ້ອງທົນຢູ່          ຜູ້ດຽວປ່ຽວໃຈ

ອ້າຍຈົ່ງ                    ໂຊກດີ
ຂໍຂວັນຊີວີ                  ຢ່າມີໝອງໄໝ້
ຈົ່ງຕັ້ງໃຈທົນ                ຝຶກຝົນມີຜົນບັ້ນປາຍ
ນ້ອງຈະຖນອມກາຍໃຈ         ໃຫ້ອ້າຍຜູ້ດຽວ

ອາລັຍ                      ອາວອນ
ຍາມນອນພ່ຳເພີ້              ຫຼັບຕາລະເມີ ເຖິງອ້າຍຄົນດຽວ
ທົນຢູ່ທົນໝອງ                ທົນຄອງຍອດຊາຍແສນປ່ຽວ
ອິນພຣົມໂປຣດໄດ້ແລຫຼຽວ      ຢ່າຫຼຽວໄວ້ໃຫ້ເປັນອື່ນ

ຢ່າລືມ                     ນ້ອງນັ້ນ
ເມື່ອອ້າຍຫວນມາ             ຢ່າພາສະອື້ນ
ຈົ່ງເຫັນໃຈຍິງ                ທີ່ອ້າຍເຄີຍຮັກເຄີຍຊື່ນ
ອ້າຍຢ່າຫຼົງລືມຍິງອື່ນ          ລືມສິ້ນລືມນ້ອງ.

# ບ້ານນາຜາສຸກ

ຜືນດິນຖິ່ນນາ ບ້ານປ່າຂາດອນ ແຫ່ງນີ້
ຊ່າງສວຍງາມດີ ເມື່ອແສງສຸຣີ ສາດສ່ອງ
ເຫັນເຂົ້າໃນນາອາຣ່າມໄກວແກວ່ງຮວງງາມ ເມື່ອລົມຕ້ອງ
ງາມແທ້ຮວງທອງ ເມື່ອຍາມຫຼຽວມອງ ສຸກໃຈ

ນົກນ້ອຍກໍມາ ຫາບ່ອນທີ່ເຄີຍ ຊອກກິນ
ແຄມຫ້ວຍນ້ຳລິນ ຖິ່ນນີ້ຍິ່ງງາມ ສົດໃສ
ເຫັນນົກມີຄູ່ຄຽງຂ້າງ ດວງຈິດນ້ອງຊ່າງ ເກີດຫວັ່ນໄຫວ
ລົມພັດກໍໄຜ່ ສຽງດັ່ງກ່ອນໃຫ້ ນ້ອງນີ້ຫົງໄຫຼອ່ອນຊວງ

ເຫັນ ພໍ່ນາ ກ່ຽວເຂົ້າຊ່ວຍກັນ
ແດດກ້າຮ້ອນຍັງອົດດັນເກັບກ່ຽວເຂົ້ານັ້ນ ຫວັງໃຫ້ໝົດຮວງ
ຫຼຽວໄປແຄມປ່າ ໄອ໋ນັ້ນຜະກາ ບານຢູ່ເປັນພວງ
ພໍຕາເອັນຈະສິ້ນດວງ ດອກໄມ້ທັງປວງ ສົ່ງກິ່ນຫອມມາ

ຟ້າຄິງເສກສັນ ປັ້ນແຕ່ງບ້ານນາ ແຫ່ງນີ້
ຊ່າງງາມເກີນທີ່ ຂ້ານີ້ຈະພັລນາ
ພໍເຖິງຄາວຈະໄກຈາກ ຈຳພາກໜີໄປ ອາລັຍຫາ
ລາແລ້ວບ້ານປ່າ ຂ້ານີ້ຄິດວ່າ ຈະກັບຄືນມາດັ່ງເຄີຍ.

# ວຽງໃນຝັນ

ຄອຍເຝົ້າຄອຍ ແຕ່ພຽງຄວາມຝັນ
ຢາກເຫັນວຽງຈັນ ນ້ອງເຝົ້າຝັນທຸກວັນເວລາ
ຊາດນີ້ຄົງສິ້ນບຸນວາສນາ ນີແຕ່ຄືນເຂົາກ່າວມາ
ງາມໜັກໜາ ໂອ ເມືອງວຽງຈັນ

ພໍໄດ້ຊົມ ດັ່ງໃຈໝັ້ນໝາຍ
ງາມແສນວິລັຍ ໂອທາດຊາຍສິນນານດອນຈັນ
ປຽບເໝືອນເທວາບິນຟ້າສວັນປັ້ນແຕ່ງນີ້ງຂວັນວຽງຈັນ
ດັ່ງວິມານ ສຸດແສນງາມຕາ

ງາມທາດຫຼວງ ຍອດສູງພຽງເມກ
ສິນເປັນເມືອງເອກ ງາມທຸກຢ່າງສຸດພັລນາ
ງາມຫໍພະແກ້ວ ແສງວາວແວວສວຍເດັ່ນໃນຕາ
ສິນດັ່ງທີ່ລືກັນມາ ວ່າງາມເໜືອຟ້າແດນໄກ

ພໍໄດ້ຊົມ ຈົນລືມຖິ່ນຖານ
ມາເຫັນວຽງຈັນ ສຸກສຳລານເໜືອເມືອງໃດໆ
ໄດ້ເຫັນຣາຕຣີ ມີແສງສີດໃສ
ເຮືອງຮຸ່ງດັ່ງຟ້າອຳພັຍ ຊວນຈິດໃຈໄຝ່ຝັນບໍ່ລືມ.

# ກຸຫຼາບແທນກາຍ

ກຸຫຼາບດອກນີ້ ຊ່າງງາມດີ ນ້ອງນີ້ຂໍມອບໃຫ້
ເພື່ອເປັນຂວັນໃຈ ແກ່ຍອດຊາຍ ທີ່ປຣາຖນາ
ກຸຫຼາບກິ່ນຫອມ ນ້ອງຖນອມ ຢູ່ທຸກວັນເວລາ
ແຕ່ເພື່ອອ້າຍດອກໜາ ນ້ອງຈຶ່ງເດັດມາ ມອບໃຫ້ແທນກາຍ

ກຸຫຼາບດອກນີ້ ປຽບຊີວີ ນ້ອງຖອດແທອນສຖິດ
ເມື່ອໃດໝອງຈິດ ໂປຣດຢ່າຄິດ ປຽບຍ່ຳທຳລາຍ
ຂໍຈົ່ງຮັກສາ ແມ່ນບຸຜາ ຈະຊ້ຳສີແຫ້ງໄປ
ແຕ່ອ້າຍຢ່າປ່ຽນໃຈ ຢ່າຄິດແໜງໜ່າຍ ຊັ້ງເຈົ້າຂອງກຸຫຼາບ

ບຸຜາປ່ຽນໄປ ປຽບຮ່າງກາຍ ຂອງຄົນເຮົານີ້
ໜຸ່ມແໜ້ນຕຶງດີ ເຖົ້າແກ່ເສັ່ງສີ ປ່ຽນແປງສະພາບ
ເອັ້ນແຕ່ຫົວໃຈ ມິປ່ຽນໄປ ເໝືອນດັ່ງກຸຫຼາບ
ຍິ່ງນານຮັກ ຊືມຊາບຊວງໃນ ຫາກໃຜມີຮັກຈິງ

ກຸຫຼາບດອກດຽວ ປຽບຮັກດຽວ ນ້ອງຝາກຝັງຕໍ່ອ້າຍ
ບໍ່ມີສອງໃຈ ຝາກກັນໄວ້ ດ້ວຍກຽດຂອງຍິງ
ຂໍແຕ່ຕົວອ້າຍ ນັ້ນຢ່າໝາຍ ພຽງຫວັງຊົມແນບອີງ
ຈົ່ງຮັກຈາກໃຈຈິງ ແລ້ວທຸກໆສິ່ງ ຈະເປັນຂອງອ້າຍເອີຍ.

# ວິມານວຽງທອງ

ຄໍ່າລົງແສງຈັນ ສອດສ່ອງນະພາ
ທຸກວັນທິວາ ຣາຕຣີແສນງາມ
ດົນຕຣີບັນເລງ ສຽງເພັງກ່ອນຂວັນ
ດັ່ງເມືອງສວັນ ວິມານຂ້າຢູ່

ໜຸ່ມສາວຄູ່ກັນ ເດີນຫຼິ້ນແຄມຂອງ
ຮັກກັນສົມປອງ ຄຽງຄອງໝັ້ນຢູ່
ດວງໃຈຊື່ຕຣົງ ຮັກດຽວຍອດຊູ້
ຢູ່ຄູ່ຟ້າດິນ ຈົນສິ້ນແສງສຸຣິຍາ

ຫາກໄດ້ມາແດນ ຖິ່ນແຄວ້ນແສນສຸກ
ເໝືອນສິ້ນຄວາມທຸກ ສຸກສັນບານອຸຣາ
ແມ່ນ ໄດ້ຈາກລາ
ໃຈປຣາຖນາ ຄະນຶງເຖິງຢູ່ທຸກວັນ

ວຽງຈັນນີ້ໜໍ ງາມເດັ່ນໜັກໜາ
ໂລກເຂົາລືຊາ ວ່າເມືອງສວັນ
ຫາກໄດ້ມາແດນ ເໝືອນເປັນຄວາມຝັນ
ໂອ ເມືອງວຽງຈັນ ຕິດພັນທົວໃຈບໍ່ລືມ.

# ຫີນເຫີບແດນງາມ

ຖິ່ນລຳເນົາເງີກເງື້ນໂງ່ນຫີນ   ແອ່ວສຽງສາຍອາລີນ
ເສາະຫີນກາງນ້ຳ   ຊ່າງງາມເຫຼືອຕາ
ສອງແຄມຟາກຝັ່ງ   ແອ່ວດັ່ງສຽງສະກຸນາ
ຈັບຄອນອອນຄູ່ຖລາ   ກາງນ້ຳມີປາຄຽງຄູ່ດູງາມ

ແອ່ວຊະນີທີ່ຮ້ອງສິ່ງມາ   ກ່ອນເຂົາລຳເນົາແນວປ່າ
ຄ່ຳເຊົ້າເຂົາມາ   ພາຄູ່ຄຽງຄອນ
ເອື້ອງດອຍຄ້ອຍຢູ່   ຕາມຜາຜູ່ເຜີ້ງບິນຕອນ
ສິ່ງກິ່ນຫອມມາອ່ອນໆ   ໜ້າອອນຊອນສຸກສົມດວງໃຈ

ໂອ ຫີນເຫີບ   ເຈົ້າງາມເລີດກວ່າຖິ່ນໃດ
ທຳມະຊາດສ້າງໄວ້   ສີລານ້ອຍໃຫຍ່ງາມເຫຼືອຄະນາ
ຫາໃດທຽມເທົ່າ   ດັ່ງເຈົ້າອິນປັ້ນແຕ່ງມາ
ງາມແທ້ງາມເດັ່ນໜັກໜາ   ໝູ່ສາລິກາຄຽງຄູ່ຄືນຮັງ

ຄ່ຳຣາຕຣີ ເລໄລລະງິນ   ດັ່ງສຽງດົນຕຣີປະສົມ
ແອ່ວຕາມສາຍລົມ   ອ້ອຍອິ່ນອອນຊອນ
ແສງຈັນດັ່ງນຶ່ງ   ຄິງສ່ອງເມກໄມ້ດົງດອນ
ຫາຖິ່ນແດນໃດຈະເໝືອນ   ຫີນເຫີບຍັງເຕືອນຝັງໃຈບໍ່ລືມ.

# ລືມເສັ້ຽເຖິດ

ຈົ່ງລືມເສັ້ຽຫີ　　　　ວ່ານີ້ນ້ອງຢູ່
ໄປຣດເຖິດຍອດຊູ້　　　　ໄປຣດຈົ່ງຈຳໃຈ
ຈົ່ງຕັດຄວາມຮັກໃຫ້ຫັກ　　　　ຂີດຊື່ຂອງນ້ອງຈາກໃຈ
ຢ່າຫ່ວງອາລັຍ　　　　ຫ່ວງໃຍສຳພັນ

ເມື່ອເຮົາສອງຄົນ　　　　ຝັນຄົນລະຢ່າງ
ກໍສຸດໃຈຫວັງ　　　　ຕ້ອງຫ່າງໄກກັນ
ຢູ່ໄປຄົງຊ້ຳຣະທົມ　　　　ຂື່ນຂົມຈົມຊົ່ວຊີວັນ
ຢ່າທໍຣະມານ　　　　ຫົວໃຈໄຮ້ຄ່າ

ແຕ່ຈົ່ງຟັງສຽງ　　　　ຂອງນ້ອງນີ້ກ່ອນ
ກ່ອນຈະຈາກຈອນ　　　　ພາກໄປຫາຍໜ້າ
ໄປຣດຈົ່ງມອງນ້ອງ　　　　ດ້ວຍແວວເມດຕາ
ເຖິງຈະຈາກລາ　　　　ກໍຈົ່ງດ້ວຍດີ

ຫາກມີເມື່ອໃດ　　　　ຫົວໃຈກົງກັນ
ໂອ ເທບສວັນ　　　　ນັ້ນໄປຣດປຣານີ
ຈົ່ງໄດ້ມາຮັກກັນໃໝ່　　　　ຮ່ວມໃຈຮ່ວມສົມຝັນດີ
ຊົ່ວອາຣາຕຣີ　　　　ຊີບນີ້ມະລາຍ.

# ອາທິດອັສດົງ

ອາທິດໃກ້ດັບ ອັບແສງທອງ
ນະພາຟ້າຜ່ອງ ກັບໝອງມົວເສົ້າ
ສູນສິ້ນຕາວັນ ຟ້າຈະງຽບເຫງົາ
ຫ້ອງຟ້າໂສກເສົ້າ ດັ່ງເຮົາອ້າງວ້າງ

ອາທິດຄ້ອຍເຄື້ອນ ເລືອນລັບລາ
ເໝືອນຄົນຮັກຂ້າ ລາລັບໄກຫ່າງ
ລາຈາກກັນໄປ ພ້ອນໃຈຈືດຈາງ
ປ່ອຍເຮົາອ້າງວ້າງ ທາງຮັກພັງສລາຍ

ອາທິດ ຍາມລັບໄປນັ້ນ
ດັ່ງຈາກກະຊາກໃຈກັນ ໃຫ້ຫຼຸດຕາມໄປ
ເພາະຍາມຟ້າເສົ້າ ຂ້າສຸດເຫງົາໃຈ
ຢາກຕາມອາທິດໄປ ທຸກໆວິນາທີ

ອາທິດດວງຈິດ ຂອງທີວາ
ເຈົ້າເມີນໜີໜ້າ ໄປແລ້ວຫຼືນີ້
ແລ້ວອີກເມື່ອໃດ ເຈົ້າຈະປຣານີ
ສົ່ງຣັສມີ ສ່ອງທີວາອີກໜໍ.

# ນຶ່ງໃນຫົວໃຈ

ນຶ່ງເທົ່ານັ້ນ ໃນຫົວໃຈ
ເຝົ້າຫຼົງໄຫຼ ທຸກຄືນວັນ
ບໍ່ມີໃຜ ມາທຽມທັນ
ບໍ່ມີວັນ ຈະລືມໄລ

ນຶ່ງເທົ່ານັ້ນ ຄອງຫົວໃຈ
ສຸດໃຈໝາຍ ເຫຼືອຈະເອີ່ຍ
ຈະປອງອ້າຍ ໝາຍຊື່ນເຊີຍ
ນ້ອງບໍ່ເຄີຍ ຄິດຫຼອກລວງ

ຫຼົງຮັກຫຼົງຫ່ວງ ແທບປ່ວງຈຽນບ້າ
ໂອ ອະນິຈາ ຄວາມຮັກປັກຊວງ
ຮັກດວງໃຈດວງ ໜ່ວງໜັກປັກຊວງ
ໂອ ເທບບິນສວງ ຢ່າລວງຂ້າທີ

ນຶ່ງເທົ່ານັ້ນ ໃນຫົວໃຈ
ໂປຣດຈໍາໄວ້ ນະຄົນດີ
ອ້າຍເປັນຍອດ ຂວັນຊີວີ
ຊົ່ວຊີບນີ້ ນ້ອງຂໍຈອງ.

# ໑໑
# ຫນາມຊີວິດ

ໂອ ໜາມຊີວິດ ໃຜລິຂິດມາ
ຈາກໂຊກຊະຕາ ຂອງເຮົາຫຼືນີ້
ຈຶ່ງດົນຄວາມຊ້ຳ ຣະກັມເກີດມີ
ຈາກອະເວຈີ ຫຼືມີພຣະພຣົມປັ້ນແຕ່ງ

ຂ້າທຳຄວາມດີ ສ້າງດີໃສ່ຕົນ
ແຕ່ກັບມີຄົນ ຖືຜິດຄິດແກ້ງ
ຄົນເຄີຍຮ່ວມຮັກ ກໍມາຖືກແຍ້ງ
ໂອ ໃຜກັນແຕ່ງ ຊີວິດຂ້າໃຫ້ເກີດມາ

ໜາມຊີວິດ ພິດສວາດ
ຕາມພິຄາດ ຢູ່ທຸກເວລາ
ຂ້າທຳຜິດ ສິ່ງໃດແລ້ວໜາ
ຈຶ່ງໄດ້ຕາມມາ ລ້າງຜານກັນບໍ່ຮູ້ເບື່ອ

ບໍ່ເຄີຍກະທຳ ສ້າງກັມກໍເວນ
ຖ້າຈະຍາກເຂັນ ຂໍໄກທຸກເມື່ອ
ອິນພຣົມເຈົ້າເອີຍ ຂ້າຊ້ຳສຸດເຫຼືອ
ຂໍພຽງຊ່ອຍເກື້ອ ຖອດໜາມຊີວິດຈາກໃຈ.

# ອ້າຍມາທີຫຼັງ

ເສັຽດາຍ ທີ່ອ້າຍ ມາທີຫຼັງ
ຄົງບໍ່ມີຫວັງ ຈະໄດ້ເປັນເຈົ້າຫົວໃຈ
ໄດ້ພຽງເຫັນໜ້າ ແກ້ວຕາເຈົ້າງາມກວ່າໃຜ
ໂອຍເຈົ້າຮູ້ຫຼາຍ ເຈົ້າຮູ້ຫຼາຍແທ້ນ້ອງ

ບໍ່ເຄີຍ ບໍ່ເຄີຍ ເຫັນໃຜງາມ
ເທົ່າກັບນົງລານ ງາມຫຼາຍກະດັກກະດໍ້
ຫຼືເປັນນາງຟ້າ ລົງມາບໍ່ແມ່ນຍົກຍໍ
ຮັກເຈົ້າແທ້ໜໍ ຢາກຈະຂໍເປັນຄູ່ຄອງ

ໄດ້ຍິນເຂົາເວົ້າ ວ່າເຈົ້າມີແຟນແມ່ນບໍ່ ?
ເຖິງມີແລ້ວກໍ ອ້າຍຂໍເປັນຕົວສຳລອງ
ຖ້າແຟນນ້ອງໜ່າຍ ຢ່າລືມບອກອ້າຍເດີນ້ອງ
ອ້າຍຈະມາຈັບຈອງ ເປັນເຈົ້າຂອງຈົນຕາຍ

ຖ້າອ້າຍ ໄດ້ນ້ອງ ມາເປັນນາງາມ
ເຊື່ອເຖີດຄົນງາມ ຈະໃຫ້ຢູ່ສຸກສະບາຍ
ກິນອ້າຍຈະປ້ອນ ຍາມນອນອ້າຍຈະກອດໄວ້
ບໍ່ໃຫ້ອຸກໃຈ ເຖິງອ້າຍຈະມາທີຫຼັງ.

# ໑໗
# ກ້ຽວສາວງື່ມ

ຊາຍ ໂອ ສາວແຄມງື່ມແຫ່ງນີ້
ອ້າຍຂໍຝາກໄມຕຣີ ກັບນ້ອງນີ້ດ້ວຍໃຈໝາຍໝັ້ນ
ຂໍຝາກກາຍ ຝາກດວງຊີວັນ
ມອບໃຫ້ແກ່ຈອມຂວັນ ນວນນ້ອງສາວແຄມງື່ມ

ຮັກເຈົ້ານີ້ ອ້າຍບໍ່ຄິດຈະລະລືມ
ຫວັງຕາຍຮ່ວມສາວງື່ມ ບໍ່ລືມບໍ່ເລືອນນີ້ເລີຍ

ຍິງ ໂອ ບ່າວອຽງຈັນນີ້ເອີຍ
ນ້ອງເກີດມາບໍ່ເຄີຍ ຈະຮັກຊາຍຄົນໃດມາກ່ອນ
ນ້ອງເປັນສາວ ຊາວປ່າດົງດອນ
ໃຜບໍ່ເຄີຍມາວອນ ຂໍຄວາມຮັກຈາກນ້ອງ

ມີແຕ່ອ້າຍ ຄົນດຽວທີ່ມາໝາຍປອງ
ນ້ອງເອງບໍ່ຂັດຂ້ອງ ຮັກນ້ອງແລ້ວຢ່າປ່ຽນໃຈ

ຊາຍ ນໍ້າງື່ມ ຮັກແຄມງື່ມນັ້ນພຽງໃດ
ກໍປຽບເໝືອນຫົວໃຈ ອ້າຍຮັກນ້ອງພຽງນັ້ນ

ຍິງ ນ້ຳງື່ມ ຮັກແຄນບໍ່ຍອມແປຜັນ
ຂໍດວງໃຈອ້າຍນັ້ນ ເໝືອນນ້ຳງື່ມນີ້ແລ້ວກໍພໍ

ຊາຍ ໂອ ສາວແຄນງື່ມນີ້ໜໍ ອ້າຍຂໍຮັກນ້ອງໝັ້ນ
ຊົ່ວຊີວັນ ຈະຈາກໂລກນີ້

ຍິງ ນ້ອງເໝືອນກັນ ຈະຊື່ສັດພັກດີ
ຮັກແຕ່ພຽງອ້າຍນີ້ ບໍ່ມີວັນລືມໄດ້

ຊາຍ ບຸນອ້າຍແລ້ວ ນ້ອງແກ້ວເຈົ້າຍັງເຫັນໃຈ

ຍິງ ເພາະນ້ອງກໍຮັກອ້າຍ ຮັກອ້າຍໝາຍຝາກຊີວັນ

ຊາຍ ນ້ອງເອີຍ ຢ່າເລີຍລະລືມຮັກນັ້ນ

ຍິງ ອ້າຍເອີຍ ນ້ອງບໍ່ລືມເລີຍຮັກນັ້ນ

ຮ່ວມ ເຮົາຂໍຢູ່ຮ່ວມກັນ ຮັກກັນຊົ່ວນິຣັນດອນ.

# ປາກພົບຄັ້ງສຸດທ້າຍ

ອ້າຍຢາກພົບນ້ອງ ເປັນຄັ້ງສຸດທ້າຍ
ກ່ອນນ້ອງຈະກາຍ ເປັນຂອງຄົນອື່ນ
ອ້າຍຢາກອີງແອບແນບຊິດ ອ້າຍຢາກຈູບພິດເຊີຍຊື້ນ
ຢາກຢູ່ຢ່າງຄືນ ເມື່ອຄັ້ງເຮົາສອງ ຮັກກັນ

ອ້າຍເຝົ້າຄິດເຖິງ ຢູ່ທຸກເວລາ
ຢາກພົບແກ້ວຕາ ຈົນຫົວໃຈສັ່ນ
ນ້ອງຖືກຂັດຂວາງເອົາໄວ້ ຫຼືວ່າໃຈນ້ອງລືມນັ້ນ
ຫຼືສິ້ນສິງສານ ຈຶ່ງບໍ່ມາພົບ ດັ່ງເຄີຍ

ນ້ອງຄົງເພີນ ກັບຄົນຮັກໃໝ່
ນີສຸກສົມໃຈ ແລ້ວຫຼືຈຶ່ງເສີຍ
ບໍ່ຍອມພົບອ້າຍ ບໍ່ໄດ້ສັ່ງລາກັນເລີຍ
ອ້າຍຜິດເລື່ອງໃດນ້ອງເອີຍ ຮັກຈຶ່ງເຫີຍຫາຍຊື່ນ

ອ້າຍຢາກພົບນ້ອງ ເປັນຄັ້ງສຸດທ້າຍ
ຫາກນ້ອງຈະໄປ ເປັນຂອງຄົນອື່ນ
ອ້າຍຢາກບອກນາງໃຫ້ຮູ້ ວ່າຢູ່ຢ່າງທຸກຂົມຂື່ນ
ຫຼັບນອນທົນຝືນ ທ້ານໃຈຫຼີກຄິດ ທ່ອງນາງ.

# ອ້າຍຍັງເຝົ້າຄອຍ

ນອງເຫັນອາທິດ ໃກ້ອັສດົງ
ຕາວັນຄ່ຳລົງ ຈົມລັບຂອບຟ້າ
ປານນີ້ທີ່ຮັກ ຍັງບໍ່ເຫັນມາ
ນ້ອງເມີນໜີໜ້າ ໄປຢູ່ຫົນໃດ ?

ທີ່ຮັກທີ່ຮັກ ອ້າຍສຸດຄະນຶງ
ອ້າຍສຸດຄິດເຖິງ ນ້ອງແທບຂາດໃຈ
ຄອງແລ້ວຄອຍແລ້ວ ຄອຍແກ້ວຂວັນໃຈ
ຫຼິງຄອຍເມື່ອໃດ ນ້ອງຈຶ່ງຈະມາ

ການເວລາ ໝູນໄປໝູນໄປ
ກັບເຖີດດວງໃຈ ອ້າຍເຝົ້າຄອຍຫາ
ອີກປານໃດໜໍ ນ້ອງຈຶ່ງຈະມາ
ຈະມາຈະມາ ຮັບຂວັນດວງໃຈ

ທີ່ຮັກທີ່ຮັກ ອ້າຍສຸດເສາະຫາ
ຢ່າທໍຣະມາ ອ້າຍເສີຍແກ້ວໃຈ
ມາຕິທີ່ຮັກ ມາຢູ່ຊິດໃກ້
ມາຕິດວງໃຈ ອ້າຍຍັງເຝົ້າຄອຍ.

# ຮັກຄົນທີ່ເທົ່າໃດ ?

ນ້ອງເປັນຍິງ ຮັກທີ່ເທົ່າໃດ ?
ຮັກຈາກຫົວໃຈ ທີ່ອ້າຍໝາຍປາຖນາ
ຮັກຈິງແນ່ຫຼື ? ຍອດຊູ້ບອກໃຫ້ເຖີດໜາ
ຮັກເຈົ້າສຸດອຸຣາ ຂວັນຕາຊື້ງໃນຮືທັຍ

ໃຈຂອງຊາຍ ຫຼາຍຫຼູ່ງມເລ່ກົນ
ໂທເອີຍໜ້າມົນ ໂປຣດຟັງອ້າຍກ່ອນຊານວັຍ
ໂທຊາຍເຈົ້າຊູ້ ປາກຫວານຫວານນອກຂົມໃນ
ຂໍນ້ອງຢ່າສົງໃສ ຮັກນ້ອງເປັນຜູ້ສຸດທ້າຍ

ທີ່ນຶ່ງທີ່ສອງ ຫຼືທີ່ສຸດທ້າຍ
ຊຶ່ງມີຄວາມໝາຍ ເໝືອນມີດຂີດເສືອນຫົວໃຈ
ຮັກອ້າຍຄັ້ງແຮກ ແປກໃຈຮືດີບໍ່ຫາຍ
ຮັກແຮກແລະຮັກສຸດທ້າຍ ຂໍຕາຍໃນອ້ອມກອດນາງ

ນ້ອງເປັນຍິງ ຮັກດຽວໜຽວໝັ້ນ
ອ້າຍຂໍສາບານ ສັມພັນຮັກໝັ້ນບໍ່ຈາງ
ນ້ອງຂໍອຸທິດ ໄວ້ວອນຕໍ່ອົງພະບາງ
ຂໍໃຫ້ເຮົາສົມຫວັງ ຮັກກັນຊົ່ວນິຣັນເອີຍ.

# ສາວສີຊຽງໃໝ່

ປາກຜ່າຫົວໃຈ ສາວສີຊຽງໃໝ່ ເບິ່ງໜັກ
ອ້າຍໜຸ່ມສີໂຄອົກຫັກ ຍ້ອນຮັກສາວສີຊຽງໃໝ່
ເຈົ້າບອກບໍ່ເຄີຍ ບໍ່ເຄີຍຈະຮັກຜູ້ໃດ
ໂອຍຫຼອກລວງກັນໄດ້ ເຈັບອົກເຈັບໃຈຕົວະໄດ້ຕົວະເອົາ

ປາກຜ່າຫົວໃຈ ສາວສີຊຽງໃໝ່ ເບິ່ງແທ້
ປາກເຫັນຂ້າງໃນເຕັມແກ່ ຫົວໃຈນ້ອງຄົງຈະເນົ່າ
ຫ່ຽວເອົາຫົວໃຈ ແຈກໃຫ້ຜູ້ຊາຍບໍ່ເຊົາ
ລືມຮັກຈາກໜຸ່ມລາວ ຈະເອົາໃຜມາເປັນຄູ່ໃຈ

ລືມແລ້ວບໍ່ ? ວັນທີ່ໄດ້ຮູ້ຈັກກັນ
ເຮົາເຄີຍສຸກສັນ ສິງການທີ່ສີຊຽງໃໝ່
ເຈົ້າເຄີຍສັນຍາ ວ່າຮັກແທ້ແຕ່ໜຸ່ມສີໂຄ
ດ່ຽວນີ້ຫົວໃຈ ປ່ຽນໄປໂລເລໂລເລ

ຂໍຈາກຂໍໂກ ສາວສີຊຽງໃໝ່ ທີ່ຮັກ
ອ້າຍໜຸ່ມສີໂຄອົກຫັກ ຍ້ອນຮັກແມ່ຄົນຮ້ອຍເລ່
ເຈັບອົກໂສກເຫງົາ ນ້ອງສາວຮັກງ່າຍຖ່າຍເທ
ຫຼອກໃຫ້ໃຈອ້າຍເອ່ ລາແລ້ວຄົນງາມຂີ້ລືມ.

# ຄິດຮອດວຽງຈັນ

ຖິ່ນລຳເນົາ ທີ່ເຄີຍສຸກສັນ
ຊື່ສຽງລາວນັ້ນ ດັງກ້ອງໂລກາ
ດຽວນີ້ນິນານ ຮຸກຮານນາໆ
ຕີປຸ້ນເຂັ່ນຂ້າ ຊາວລາວນ້ຳຕາໄຫຼຫຼັ່ງ

ແຜ່ນດິນລາວ ຮ້ອນດັ່ງແປວໄຟ
ຝູງຊົນເໜືອໄຕ້ ຝ່າຍໜີຂ້າມຝັ່ງ
ຊາວລາວພົບຄວາມ ເສົ້າໃຈອ້າງອ້າງ
ເໝືອນສິ້ນຊີວັນ ດິນລາວຕ້ອງແຕກສລາຍ

ຄິດຮອດວຽງຈັນ ນັ້ນຍັງຝັງຈິດ
ຊາວລາວບໍ່ຄິດ ບໍ່ເຄີຍທີ່ຈະລືມໄລ
ເອນກັນໃດໜໍ ຈຳພາກຫ່າງໄກ
ສູ່ແຄວ້ນແດນໄກ ເທບໃຫ້ໂປຣດຈົ່ງສົງສານ

ຫາກອັນໃດ ບ້ານເມືອງສິ້ນພັຍ
ທົ່ວທັງເໜືອໄຕ້ ສົດໃສສິ້ນນານ
ຍິງຊາຍໃຫຍ່ນ້ອຍ ຊື່ນໃຈເບີກບານ
ຫອມຄືນກັບຫັນ ຖິ່ນຖານແຫ່ງດິນລາວເອີຍ.

# ນ້ອງຂໍຫຼີກທາງ

ທີ່ຮັກ... ຫົວໃຈຂອງນ້ອງ, ນ້ອງບໍ່ຢາກເຫັນຄວາມເສົ້າ ແລະ ນ້ຳຕາ ຂອງເພື່ອນຍິງດ້ວຍກັນ. ເອົາລະ... ເຖິງນ້ອງຈະປວດຫົວໃຈພຽງໃດ ກໍຕາມ. ເພື່ອຍິງຄົນນັ້ນ ແລະ ອ້າຍໄດ້ຢູ່ເປັນສຸກ... ນ້ອງຂໍຫຼີກທາງ...

ສັ່ງໃຈຂອງນ້ອງ ນີ້ໃຫ້ຢຸດຮັກ
ຈະຕັດຮັກ ທີ່ເຄີຍຮ່ວມຮັກກັນມາ
ຕໍ່ໄປ ນ້ອງບໍ່ຂໍໄຝ່ຫາ
ຂໍເປັນຜູ້ເສັຽສະລະ ເສັຽສະລະອ້າຍໃຫ້ຍິງນັ້ນ

ຫັກໃຈທັ້ງໆ ທີ່ໃຈຂື່ນຂົມ
ແຕ່ຍອມຕາຣົມ ຣະທົມດ້ວຍເຫັນໃຈກັນ
ເພື່ອຍິງ ທີ່ຫຼົງປອງຜູກພັນ
ຫວັງຄອງຫົວໃຈອ້າຍນັ້ນ ໄດ້ດັ່ງຝັນນ້ອງຂໍຫຼີກທາງ

ສຸກສັນກັນເຖີດ ນ້ອງເປີດເສັ້ນທາງໃຫ້ແລ້ວ
ແນ່ນໃຈຈະແປ້ວ ເປັນຮອຍເນື່ອຍານສິ້ນຫວັງ
ຈະເອົານ້ຳຕາ ແລະອັນເວລາລົບພາບຄວາມຫຼັງ
ຖ້າຊີວິດນ້ອງຍັງ ນ້ອງກໍຈະຫວັງຮັກໃໝ່

ສ້າງບຸນກຸສົນ ໄວ້ພຽງເທົ່ານີ້
ສຸດກັນທີ ຮັກເຮົາທີ່ຫວັງດົນໃຈ
ຈົ່ງລືມ ນ້ອງເສັຽເລີຍຢ່າໝາຍ
ແມ່ນບຸນເຮົາມີຊາດໃໝ່ ກໍຄົງໄດ້ຮ່ວມໃຈດັ່ງຫວັງ.

# ຮັກນຶ່ງໃຈດຽວ

ນ້ອງຄື ຍອດຍິງ ທີ່ອ້າຍຮັກໝັ້ນ
ຮັກດັ່ງຊີວັນ ຮັກຍິ່ງເຫຼືອຍິ່ງໃດ
ຮັກນ້ອງລື້ນຊອງ ຮັກໝົດໃຈ
ເທີດທູນໄວ້ ດ້ວຍຄວາມຮັກດ້ວຍຄວາມຫວງ

ນ້ອງມີວັນນະ ບໍ່ຂໍຂ້ອງກັ່ງວ
ຮັກນ້ອງຄົນດຽວ ຫຼາຍກວ່າຍິ່ງທັງປວງ
ຮັກນ້ອງລົ້ນໃຈ ຮັກໝົດຊວງ
ອ້າຍເຝົ້າຫວງ ເຝົ້າຖນອມແຕ່ນອນນ້ອງ

ຄົນດີອ້າຍເອີຍ ຢ່າໄດ້ລະແວງ ອ້າຍນີ້ເລີຍໜາ
ອ້າຍໃຫ້ສັນຍາ ວ່າຈະຊື່ຕຣົງຕໍ່ນ້ອງ
ອ້າຍຄອຍເອົາໃຈ ມີໃຫ້ຈອມໃຈເສົ້າໝອງ
ອ້າຍເຝົ້າໝາຍປອງ ແຕ່ນອນນ້ອງ ຢູ່ທຸກເວລາ

ທົ່ວໃຈດວງດຽວ ທີ່ອ້າຍມີຢູ່
ມອບໃຫ້ຍອດຊູ້ ອຸທິດໃຫ້ນິງຄານ
ອ້າຍຈະຮັກດຽວ ພຽງເທົ່ານັ້ນ
ບໍ່ແປປັ່ນ ຄວາມຮັກນີ້ໃຫ້ແກ່ໃຜ.

# ສິ້ນສຸດກັນທີ

ອ້າຍບໍ່ນຶກຝັນ ວ່າຈອນຂວັນ
ຈະແປຜັນ ຄອງຊາຍໃໝ່
ສຸດທີ່ຮັກ ອ້າຍເສົ້າໃຈ
ອ້າຍນ້ອຍໃຈ ສຸດຂື່ນຂົມ

ນ້ອງຊ່າງໃຈດຳ ບໍ່ໜ້າທຳ
ໃຫ້ອ້າຍຊ້ຳ ທຸກຣະທົມ
ສຸດທີ່ຮັກ ອ້າຍເສົ້າຕຣົມ
ສຸດຂື່ນຂົມ ເສົ້າອຸຣາ

ສິ້ນສຸດກັນທີ ຕໍ່ແຕ່ນີ້
ຈະຫຼີກໜີ ໃຫ້ໄກຫ່າງ
ຈະບໍ່ຮັກ ບໍ່ຂວາງທາງ
ຈະຫຼີກທາງ ໃຫ້ຈອນໃຈ

# ແສງເດືອນເຕືອນໃຫ້ເສົ້າ

ແສງອາທິດ ຈອນດັບລັບໂລກ
ໃຈອ້າຍໂສກ ສຸດພັລນາ
ເຫັນເດືອນເພັນ ຂຶ້ນສູ່ນະພາ
ຍິ່ງໂສກາ ຄະນຶງເຖິງດວງໃຈ

ຄິດເຖິງຄັ້ງ ເຄີຍນີ້ນ້ອງຢູ່
ເຄີຍແນບຄູ່ ນັ່ງຊົມເດືອນຫງາຍ
ສອງເຮົາເຄີຍ ໝັ້ນຈິດໝັ້ນໃຈ
ຈະມອບກາຍ ມອບໃຈໄວ້ແກ່ກັນ

ພໍ ນ້ອງມາຈາກໄປ
ໃຈ ນ້ອງກໍເລີຍແປຜັນ
ຜີສາງຕົນໃດ ສິງໃຈເຈົ້ານັ້ນ
ໂຫດຮ້າຍເຫຼືອປະມານ ສັ່ງຫານອ້າຍທັ້ງເປັນ

ຮັກອ້າຍນີ້ ເລື່ອນລອຍສູນດັບ
ບໍ່ຫວນກັບ ຄືນມາໃຫ້ເຫັນ
ນ້ອງທຳລາຍ ອ້າຍຢ່າງເລືອດເຢັນ
ຂ້າທັ້ງເປັນ ໂຫໃຈນ້ອງຊ່າງດຳ.

# ນາງ

ນາງ ປານນີ້ເຈົ້າຢູ່ຫົນໃດ ເຈົ້າຄົງສົດຊື່ນແຈ່ມໃສ
ຫຼືວ່າ ນັ່ງຄອງໃຜຢູ່
ນ້ອງນາງ ເຈົ້າຄົງບໍ່ຮູ້
ເຈົ້າຄົງບໍ່ຮູ້ ວ່າອ້າຍຄອນຫາ

ນາງ ປານນີ້ເຈົ້າຢູ່ຫົນໃດ ເຈົ້າຄົງນອນເພີ້ຫຼັບໄຫຼ
ຫຼືວ່າ ເສົ້າໂສກໂສກາ
ຫົວໃຈ ອ້າຍຍັງຄອນຫາ
ອ້າຍຍັງຮຽກຫາ ນາງທຸກນາທີ

ເຈົ້າຢູ່ຫົນໃດ ຄືນດີເຈົ້າຢູ່ຫົນໃດ ?
ໂສກຕຣົມໝອງໄໝ້ ຫຼືວ່າສຸກສົນຣີດີ ?
ສຸດທີ່ຮັກເອີຍ ເມື່ອຍາມຄ່ຳຄືນຢ່າງນີ້
ສຸດໂສກີ ສຸດອາລັຍ

ນາງຄົນດຽວອ້າຍຮັກລົ້ນຊອງ ຄົນດຽວທີ່ອ້າຍເຝົ້າຫອງ
ຖະນອມ ນີເຄີຍແໜງໜ່າຍ
ຮັກນາງ ດັ່ງນຶ່ງດວງໃຈ
ຍິ່ງກວ່າອື່ນໃດ ໃນໂລກນີ້ເອີຍ.

# ຣາຕຣີພາຝັນ

ເດືອນຫງາຍ　　ສາຍລົມພັດມາແຕ່ໄກ
ດວງເດືອນ　　ລອຍໄປທົ່ວທ້ອງນະພາ
ສາຍນ້ຳ　　ໄຫຼໄປບໍ່ກັບຄືນມາ
ເໜືອນນ້ອງ　　ຈາກລາໄປແສນໄກ

ຄິດເຖິງ　　ເມື່ອຕອນເຮົາຈະຈາກຈອນ
ອ້ອນວອນ　　ໃຫ້ອ້າຍຖນອມຮັກເອົາໄວ້
ພາຍໄຕ້　　ແສງຈັນຄືນນັ້ນຈຳໄດ້
ດວງໃຈ　　ລາລັບບໍ່ກັບຄືນມາ

ໂອ ດວງຈັນ　　ເຈົ້າຢູ່ສູງມອງເຫັນທົ່ວຟ້າ
ໂປຣດກະຣຸນາ　　ມອງຫາໃຫ້ດີນີ້ນ້ອງແຫ່ງໃດ
ໄກ　　ຫຼືໃກ້
ບອກໃຫ້ກັບມາ　　ອ້າຍຍັງຄອຍຖ້າຫວ້າເວ່ດວງໃຈ

ຣາຕຣີ　　ນີຈັນພາໃຫ້ອ້າຍຝັນ
ຄ່ຳຄືນ　　ລຳພັນລະເມີເພີໄປ
ລົມໂບຍ　　ພັດມາໜາວສັ່ນທົ່ວກາຍ
ແມ່ນໄດ້　　ຄູ່ຄຼຽງໜາວຄົງຫາຍເອີຍ.

# ຮັກ

ຮັກ ໂອ ຄວາມຮັກແສນຍິ່ງໃຫຍ່
ຮັກປັກຣຶທັຍ ຮັກປັກໃຈຊື້ງດວງຈິດ

ຮັກ ໂອ ຄວາມຮັກຫວານຊື່ນຈິດ
ທຸກໆຊີວິດ ຕ່າງກໍຄິດໄຝ່ຝັນຫາ

ໂອ ຄວາມຮັກເອີຍ
ໂອ ຄວາມຮັກ ຊື້ງສລັກປັກໃນອຸຣາ
ມະນຸດ ຢູ່ໃນໂລກາ
ຕ່າງສແວງຫາ ຮັກນາພົວພັນ

ຮັກ ໂອ ຄວາມຮັກເມື່ອພົບພານ
ຮັກສຸດແສນຫວານ ຮັກຊ່າງຫວານບໍ່ຮູ້ລືມ.

# ໙໒
# ສຸດທີ່ຮັກ

ສຸດທີ່ຮັກ ມາຈາກໄປ
ສູ່ແດນໄກ ສຸດສາຍຕາ
ປ້ານນາງລືມ ລືມຄຳສັນຍາ
ລືມອາລາ ທີ່ເຄີຍໃຫ້ສາບານ

ສຸດທີ່ຮັກ ມາຈາກຈອນ
ສຸດອາວອນ ສຸດໄຫວຫວັ່ນ
ປ້ານນາງລືມ ໄມຕຣີສຳພັນ
ຍາມໄກກັນ ປ້ານນາງຄິດນອກໃຈ

ໂອ ຍອດຮັກ ຍອດຊີວີ
ຢ່າໄປມີ ຄົນຮັກໃໝ່
ນ້ອງຢ່າລືມ ອ້າຍນະດວງໃຈ
ຢາມຫ່າງໄກ ຢ່າລືມຄິດເຖິງກັນ.

# ໗ ນຶ່ງໃນອານາ

ທ່າແຂກ ເປັນແດນທີ່ງາມເຢັນຕາ
ມີພູຜາ ຮ້ອນລ້ອນດັ່ງບຶ່ງກຳແພງ
ຖືກກ່າວຂານ ລືລັ່ນໄປທຸກທິນແຫ່ງ
ວ່າເປັນເຂດແຂວງ ອຸດົມສົມບູນວິລັຍ

ທ່າແຂກ ສວຍງາມດັ່ງແດນສວັນ
ເປັນຖິ່ນຖານ ທີ່ຂ້າຮັກດັ່ງດວງໃຈ
ຂ້າທົນທຸກ ເສົ້າຕຣົມຣະທົມໝອງໄໝ້
ເມື່ອຢູ່ຫ່າງໄກ ຖິ່ນຖານບ້ານເກີດເມືອງນອນ

ຈຳໃຈຈາກ ພຽງຊື່ວເວລາ
ຈຶ່ງຂໍລາ ທຸກຄົນໄປກ່ອນ
ບໍ່ຢາກໜີ ບໍ່ຢາກຈາກຈອນ
ສຸດອາວອນ ຕຣອນໃຈເສົ້າໂສກອິນຍາ

ທ່າແຂກ ສວຍງາມດັ່ງແດນວິມານ
ອີກບໍ່ນານ ຂ້ານີ້ຈະຕ່າວກັບມາ
ເຈົ້າເປັນແດນ ທີ່ງາມເລີດໃນຜືນລ່າ
ນຶ່ງໃນອານາ ງາມແທ້ທ່າແຂກນີ້ເອີຍ.

# ຍັງຕາມມາ

ຍັງຕາມມາ ມາເຍີ້ຍຫຍັ້ນກັນຮອດໃສ
ເທົ່ານີ້ໃຈ ກໍຊ້ຳພໍແລ້ວໜາ
ຢູ່ກໍເໝືອນ ເສດຄົນສິ້ນອິນຍາ
ຄິດຈະຂ້າ ຄອນຂ້າໃຫ້ດັບສູນ

ເຈົ້າຂ້າຮັກ ຍັງບໍ່ຄັກຍັງກັບຫອນ
ຫ່ຽວລານລອນ ຫາລີ້ກໍ່ອາດູນ
ຄົນອື່ນຄິດ ປຣານີໃຫ້ອົບອຸ່ນ
ເຈົ້າກັບໝູນ ສີກໜ້າຂ້າໃຫ້ອາຍ

ເມື່ອຄາວຫຼິງ ພະອົງຮັກເຈົ້າຢູ່
ໃຜຈະສູ້ ມາແຂວນຮັກ ຮັກສລາຍ
ເຈົ້າເປັນຍິງ ທີ່ງາມນ້ຳໃຈງ່າຍ
ເຈົ້າຫຼາຍໃຈ ຮັກບໍ່ໄດ້ຮັກບໍ່ລົງ

ແມ່ນຈະຮັກ ຈົນໝົດໃຈກໍຈະທົນ
ເຈົ້າເປັນຄົນ ໃຈງ່າຍໃຫ້ໄຫຼຫຼົງ
ຈະທົນຊ້ຳ ເມື່ອກັນຍູ້ນຳສົ່ງ
ຊາບແລ້ວຈົ່ງ ຫຼີກໄປຢ່າຕາມມາ.

# ຮັກສລາຍ

ເໝືອນຟ້າຜ່າລົງ    ໃນກາງດວງໃຈ
ເໝືອນດັ່ງມີໄຟ    ໄໝ້ເຜົາອຸຣາ
ມັນເຈັບມັນຊ້ຳ    ຫົວໃຈໜັກໜາ
ເມື່ອຄວາມຮັກຂ້າ    ຕ້ອງມາສລາຍ

ເຮົາສອງກ່ອນເຄີຍ    ເຝົ້າຮັກກັນມາ
ຫວັງຮ່ວມວິວາ    ສຸກສົມດັ່ງໝາຍ
ມາສ້າງຊີວິດ    ຮ່ວມກັນສເມີໄປ
ບໍ່ມີແໜງໜ່າຍ    ຮັກກັນຊົ່ວຟ້າດິນ

ເຫດໃດ    ຜູ້ໃຫຍ່ຈຶ່ງຕັດຮັກເຮົາ
ສ້າງຄວາມປວດຮ້າວ    ໃຫ້ເຮົານ້ຳຕາໄຫຼລິນ
ໂຖດວງໃຈ    ຮັກເຮົາຕ້ອງມາສູນສິ້ນ
ໂອຟ້າດິນ    ອິນພຣົມຊ່າງບໍ່ເຫັນໃຈ

ຊາດນີ້ເຮົາສອງ    ມີມານພະຈົນ
ອ້າຍຈຶ່ງຈຳທົນ    ຫຼີກທາງນ້ອງໄປ
ເຈົ້າຢ່າມີທຸກ    ເສົ້າໂສກເສັຽໃຈ
ຫາກມີຊາດໃໝ່    ຂໍໃຫ້ຮັກເຮົາສົມປອງ.

# ຮັກເຈົ້າດອກຈຶ່ງປອກເຈົ້າຫຼິ້ນ

ຮັກເຈົ້າດອກ ຈຶ່ງປອກເຈົ້າຫຼິ້ນ
ພຽງປອກຫຼິ້ນ ເທົ່ານັ້ນດອກໜາ
ເຫັນເຈົ້າງາມ ຕິດອົກຕິດຕາ
ຂໍຖາມແດ່ວ່າ ມີແຟນແລ້ວຫຼືຍັງ ?

ຮັກເຈົ້າດອກ ຈຶ່ງຍອກເຈົ້າຫຼິ້ນ
ພຽງຍອກຫຼິ້ນ ເຈົ້າຢ່າກຽດຊັງ
ຂໍຖາມແດ່ ວ່າເຈົ້າຊື່ຫຍັງ ?
ຫືອໃຈຍັງອ້າງ ຢູ່ບໍ່ໜໍຄົນງາມ ?

ຂໍຮ່ອນທາງ ໄດ້ບໍ່ນ້ອງສາວ ?
ຫວັງວ່າເຈົ້າ ຄົງບໍ່ໃຈດຳ
ໃຫ້ອ້າຍນີ້ ເປັນຜູ້ຕິດຕາມ
ເຈົ້າເປັນຄົນງາມ ຄົງບໍ່ຄິດໜ່າຍແໜງ

ຮັກເຈົ້າດອກ ຈຶ່ງປອກເຈົ້າຫຼິ້ນ
ພຽງປອກຫຼິ້ນ ຢ່າຫາວ່າແກ້ງ
ເຫັນເຈົ້າງາມ ເປັນຕາໜ້າແພງ
ໃຫ້ອ້າຍຂໍແຍງ ອີກຈັກໜ່ອຍຄ່ອຍໄປ.

# ໒໒ ແຂ້ນ້ອຍ

ແຂ້ນ້ອຍ  ລອຍໄປລອຍມາ (ຊ້ຳ)
ລອງເອົາປາເປັນມິດ  ແລ້ວຊ້ຳຄິດກິນປາ
ແຂ້ນ້ອຍ  ລອຍໄປລອຍມາ
ລອງມັດສານາສູ່  ແຕ່ດູເຂົາຮູ້ກິນລອງ

ພໍດີປາຊອງ  ກັບລອງເອົາຕົວແຂ້ນ້ອຍມາ
ຢ້ຽນຊ້ອຍປາກ່ອນ  ແລ້ວປາຈະຈອນໄປຕາມ
ແຂ້ນ້ອຍ  ຕົວພ້ອຍຕົວງາມ
ພະຍາຍາມ  ເດີນສູ່ທີ່ພັກທີ່ຢູ່ຂອງປາ

ບໍ່ຄຳນຶງຫາ  ວ່າຈະມີໂພຍພັຍ (ຊ້ຳ)
ພໍຫຼົບຕົວໄປໃນຈັ່ນ  ປະຕູກໍລັ່ນລົງຫັບ
ແຂ້ນ້ອຍ  ອາພັບອັບອາຍ
ເມື່ອແຂ້ຮູ້ອຸບາຍ  ມັດສາກໍກາຍລອດປ່ອງ

ເມື່ອນັ້ນຕາດີ  ເດີນຢ່ອງມອງຈອງ (ຊ້ຳ)
ຢ່ອງເອົາຄ້ອນໄປທຸບ  ສລຸບທຸບຫັບຕົວຄໍ
ແຂ້ນ້ອຍ  ຕາຍຍ້ອຍຕາຍຍັບ
ຕາຍເພາະຖືກຄ້ອນທັບຕາຍແລ້ວຈະກັບເກີດໃໝ່ຕາຍແລ້ວຈະໄລເອນນຳ

# ໑໘ ນ້ຳຕົກຄອນຫຼີຜີ

ຟັງສຽງ ສຳນຽງນ້ຳຕົກໄຫຼຄ້ອນ
ນ້ຳລິນຫຼັ່ງນອງ ທົ່ວທ້ອງນະພາໄພລີ
ຟັງສຽງນ້ຳຫຼັ່ງ ຄ້າຍດັ່ງກັບສຽງດົນຕຣີ
ເຫັນໝູ່ພຶກສານາກນີ ສຽງຊະນີເຣຮ້ອງສິ່ງມາ

ປ່າເຂົາ ລຳເນົາພະນາແດນນີ້
ຊ່າງງາມໂສພີ ຫານີໃສປຽບໄດ້ໜາ
ນົກນ້ອຍຄອຍຄູ່ ເຈີດບິນຕາມສາຍທາຣາ
ເໝືອນນຶ່ງວິມານຊັ້ນຟ້າ ສຸກແທ້ໜັກໜາເມື່ອໄດ້ມາຊົມ

ສຸດງາມເຫຼືອ ກວ່າຖິ່ນອື່ນໃດ
ໂງ່ນຫີນສີລານ້ອຍໃຫຍ່ ນ້ຳເສາະໄຫຼໝູ່ປາລ່ອງລອຍ
ໃຜໄດ້ມາຊົມ ຕາດຄອນນີ້ຄົງຊື່ນໃຈ
ນ້ຳໂຕນຕົກຜານີ້ເອີຍ ເປັນສິ່ງລະເຫີຍຫອມອ່ອນ

ເກື້ອໄຫຼ ເມກມົວຕາມຜາສອຍເດັ້ນ
ນ້ຳໂຕນນ້ຳເຕັ້ນ ເໝືອນເສັ້ນຄວັນໝອກຕົກຄອນ
ຍາມແສງຈັນສ່ອງ ສີທອງສົດໃສເຫຼືອງອ່ອນ
ແສນງາມນ້ຳໂຕນຕາດຄອນ ເປັນໜ້າອອນຊອນເມທີນີ້ເອີຍ.

# ແມງຜູ່

ຍາມເຊົ້າຕູ່　　ແມງຜູ່ຈະບິນໄປໃສ ?
ຕາວັນ　　ຍັງຢູ່ຫ່າງໄກ
ຍັງບໍ່ເຫຼື້ອມໃສ　　ໄຫຼຮ່ອນທາງດຽວ
ຫຼຽວແລນອງ　　ຫຼັ່ງໄມ້ໃບຂຽວ
ຫຼຽວໃຈໄຝ່ຝັນ　　ຝັນທາງດວງນາຄຽງໃກ້
ຫອມດອກໄມ້　　ທີ່ລິດລິ່ງມາ
ຕາວັນຍັງມົວ　　ຢາດມື້ອກິ່ງໃບ
ສາຍໃຈ　　ຂ້ອຍຄະນຶງນຳ
ສເນເຄີຍລ້ຳ　　ເຈົ້າມາຣືໃດ ?
ເຈົ້າມາຣືໃດ ?　　ເຈົ້າມາຣືໃດ ?

# ວິມານສລາຍ

ຄວາມຫຼັງ ນັ້ນຫຼືນ້ອງຈະລືມໄດ້
ມັນຝັງແນບຕິດຊອງໃນ ນ້ອງລືມບໍ່ໄດ້ ເລີຍໜາ
ມັນປຽບເຂັມເພັດ ທີ່ຮັກປັກລົງເທິງແຜ່ນສີລາ
ຈະມີໃຜກ້າ ຖອນມາຈາກພື້ນທໍຣະນີ

ຄວາມຫຼັງ ຝາກຝັງຈຳຕ້ອງສູນສິ້ນ
ຈະຂໍສັ່ງຟ້າແລະດິນ ອິນພຣົມຈົ່ງໄດ້ເປັນສັກຂີ
ຊາດໜ້າຈົ່ງພົບ ສຸກສົມອຸຣາຢ່າໄດ້ໜ່າຍໜີ
ຢ່າໄດ້ເໝືອນຊາດນີ້ ທີ່ມີແຕ່ຄວາມຊ້ຳໃຈ

ຄວາມຮັກຄັ້ງກ່ອນ ນ້ອງພຽງແຕ່ຄິດຢາກລອງ
ແຕ່ເໝືອນຟ້າດິນຊ່ວຍປ້ອງ ໃຫ້ຄອງຮັກໃນຫົວໃຈ
ຈະໃຫ້ນ້ອງລືມ ຈະລືມໄປໄດ້ຢ່າງໃດ
ມັນປັກຝັງຊອງໃນ ພາຫົວໃຈໄຝ່ຝັນ

ກ່ອນນັ້ນ ນ້ອງຄິດສ້າງຄວາມຫວັງໄວ້
ແຕ່ແລ້ວກໍຕ້ອງຈຳໃຈ ເພາະຮັກບໍ່ໄດ້ດັ່ງຝັນ
ມັນພາດຄວາມຫວັງ ທີ່ເຄີຍຫວັງປອງຕ້ອງປ່ຽນເປັນທັນ
ຍ້ອນຄວາມຮັກນັ້ນ ວິມານສລາຍແລ້ວເອີຍ.

# ວິວານ້ຳຕາ

ນ້ອງຂໍສັ່ງລາ ລາກ່ອນເຖິດໜາຄົນດີ
ເໝືອນເອນກັນນ້ອງນີ ໃຫ້ນ້ອງນີ້ຈຳພາກຈາກໄປ
ນ້ອງຂໍລາກ່ອນ ອ້າຍຢ່າໄດ້ຄິດເສັຽໃຈ
ຫາກຂືນລໍຄອຍອ້າຍໄປ ອີກເມື່ອໃດໜໍອ້າຍຈະໝັ້ນ

ນ້ອງນີ້ຕັ້ງຕາ ລໍອ້າຍບໍ່ມາຈັກທີ
ຝືນໃຈລໍຫຼາຍປີ ບໍ່ເຫັນມີພຽງແຕ່ໃນຝັນ
ສຸດເຫຼືອຈະທົນ ອ້າຍຄົງຈະຄິດລືມກັນ
ເຮົາສອງກ່ອນເຄີຍສຳພັນ ອ້າຍຄົງລືມວັນທີ່ເຮົາສັນຍາ

ອ້າຍຄົງຄິດ ວ່ານ້ອງປ່ຽນໃຈ
ເກີດມີຮັກຄົນໃໝ່ ຈຶ່ງໄດ້ເຂົ້າສູ່ວິວາ
ຫົວໃຈຈິງແທ້ ນ້ອງຍັງຮັກຝັງອຸຣາ
ຈຳໃຈຈຳຕ້ອງວິວາ ທັ້ງໆນ້ຳຕາຂອງນ້ອງຕົກໃນ

ນ້ອງຂໍສັ່ງລາ ເພາະອາສມາບໍ່ສົມ
ຫົວໃຈສຸດຣະທົມ ສຸດຂື່ນຂົມເພາະຄວາມນ້ອຍໃຈ
ສິ່ງຫວັງຕ້ອງສູນ ເພາະອ້າຍບໍ່ຄິດສົນໃຈ
ຄວາມຮັກຕ້ອງສິ້ນສລາຍ ນ້ອງຈຶ່ງປ່ຽນໃຈເຂົ້າສູ່ວິວາ.

# ຫາດຊາຍສວັນ

ຫາດຊາຍ ສວັນ
ແສນງາມຕາ ຍາມເມື່ອໄດ້ມາເດີນຊົມ
ງາມຊາຍຂາວແວວວາວດັ່ງທອງ ເຫັນລົມຟອງອ່ອນໄຫວຕາມລົມ
ທັມມະຊາດຊ່າງສົມ ງາມຍິ່ງ

ຫາດຊາຍ ແດນນີ້
ເໝືອນດັ່ງນີ ນິມພາໃຫ້ຝັນເສັຽຈິງ
ຊ່າງງາມສົມດັ່ງພິມເສກສັນ ແສງຕາວັນສ່ອງແສງງາມຍິ່ງ
ຊ່າງງາມຈິງ ເໝືອນແດນວິມານ

ງາມແສງຈັນ ເມື່ອຍາມຄ່ຳຄືນ
ສອງເຮົາໄດ້ຢືນ ຊົມກາງຫາດຊາຍສວັນ
ຍັງຕິດໃຈ ໄຝ່ຝັນຄະນຶງ ທຸກວັນ
ຫາດຊາຍຄືນນັ້ນ ສຸກໃຈ

ຫາດຊາຍ ກາງຂອງ
ໃຜໄດ້ມອງ ກໍຄົງສຸກສົມທົ່ວໃຈ
ດັ່ງປຽບເໝືອນດິນແດນແຫ່ງຝັນທຸກຄືນວັນບໍ່ຫຼົງລືມໄປ
ທັມມະຊາດແຫ່ງໃດຫຼືຈະທຽມທັນ (ຈະເໝືອນຫາດຊາຍສວັນ)

# ປຣານີຂ້າດ້ວຍ

ຂໍທານພຽງນ້ອຍ ນຶ່ງຄວາມປຣານີ
ໄປຣດເອື້ອອາຣີ ດ້ວຍເຖີດຈັກຄົນ
ຂ້າເກີດແລ້ວມາອາພັບ ເໝືອນດັ່ງຟ້າສາບໃຫ້ໝອງໝົ່ນ
ຊ້ຳຍັງຖືກຄົນ ອິດສາ

ຄິດມາຂື່ນຂົມ ຣະທົມດວງໃຈ
ເມື່ອຮັກສລາຍ ໃຜບໍ່ຫົວຊາ
ຂ້າຢູ່ເໝືອນຄົນສິ້ນຫວັງ ເໝືອນມີຄົນຊັງທຸກທົ່ວໜ້າ
ໄຮ້ຄວາມເມດຕາ ສົງສານ

ສິ້ນຄົນ ປຣານີແລ້ວຫຼື ?
ຂ້າຂໍຍໍມື ໄຫວ້ວອນສວັນ
ຂໍໃຫ້ພົບຄົນຮັກແທ້ ຮັກແລ້ວບໍ່ແປປ່ຽນຜັນ
ຊື່ຕຣົງຕໍ່ກັນ ເຖິງຕາຍ

ຂ້າທົນເຈັບແຄ້ນ ຢູ່ຢ່າງທາຣຸນ
ຜູ້ມີພະຄຸນ ຊ້ຳຕັດຫ່າງໄກ
ຂ້າຜິດເຣື່ອງໃດກັນໜໍ ຟ້າດິນຈຶ່ງບໍ່ຄິດເຫັນໃຈ
ປຣານີໃວ້ເຖີດ ຈັກຄົນ.

# ໜາວ

ຍາມ　　　　　　　　ແສງທອງສ່ອງຟ້າ
ນອງ　　　　　　　　ນະພາສົດໃສ
ນອນ　　　　　　　　ນົກກາບິນໄປ
ແສນໄກ　　　　　　　ຈົນລັບຕາ

ລົມ　　　　　　　　ໜາວໂຊຍຜ່ານກາຍ
ໜາວ　　　　　　　　ຝືນໃນອຸຣາ
ໝອກ　　　　　　　　ກົ້ອຕາມໃບຫຍ້າ
ເຢັນຕາ　　　　　　　ຍາມໄດ້ຊົມ

ຄິດສິງສານພົກສາຊາດ　　ຄົງຈະໜາວຂນາດຍາມຕ້ອງລົມ
ຖ້າ ຫາກມີຊີວິດ　　　　ຄົງຈະຄິດພໍ້າອົມ
ແມ່ນແຕ່ຄົນ　　　　　　ຍັງໜາວເຫຼືອທົນ
ເຖິງມີຜ້າຫົ່ມ　　　　　ຍັງໜາວໃຈ.

# ຕ້ອງການແຟນ

ຫົວໃຈຫ້ອງນີ້ ບໍ່ມີໃຜຈອງ
ຊາຍໃດຈະຈອງ ເຊີນລອງແອະມາຫາງນີ້
ຕ້ອງການຊາຍໂສດ ອາຍຸບໍ່ເກີນຊາວປີ
ເປັນຄູ່ຊີວີ ເຊີນຕີນ້ອງນີ້ຍັງສາວ

ຫົວໃຈຫ້ອງນ້ອຍ ລໍຄອຍຫາຄູ່
ຊາຍໃດຢາກຮູ້ ບ້ານນ້ອງຢູ່ຕະລາດເຊົ້າ
ເລກທີ່ສິບສີ່ ປີນີ້ອາຍຸສິບເກົ້າ
ນ້ອງນີ້ເປັນສາວ ເບິ່ງແມະກຳລັງພໍດີ ພໍດີ ພໍດີ

ຕ້ອງການຫາແຟນ ຮ້ອງເພັງປະກາດ
ໃຜຈະສຳພາດ ຂໍເຊີນບໍຣິການຟຣີ
ເອີກສາມສິບຫົກ ກະໂພກພໍດີພໍດີ
ແອວໄດ້ຊາວສີ່ ຂະນາດນີ້ແລ້ວຈະເອົາສ່ຳໃດ ?

ຫົວໃຈຫ້ອງໃນ ໃຜຈະມາຄອງ
ຊາຍໃດຈະຈອງ ມາເປັນເຈົ້າຂອງເຖີດອ້າຍ
ອາຍຸສິບເກົ້າ ກຳລັງໜາວຈິດໜາວໃຈ
ຮີບເຊີນມາໄວ ຈະໄດ້ກິນໄຂ່ແດງໆ.

# ຫົວໃຈຕາຍດ້ານ

ພໍກັນທີ ເຖີດໜາຟາກຟ້າ
ຢ່າທໍຣະມາ ຫົວອີກຂ້ານີ້ຕໍ່ໄປ
ຂ້າຊ້ຳຂ້າເຈັບ ຂ້າທຸກຂ້ານແຄ້ນເທົ່າໃດ
ໄປຣດຈົ່ງປະຫານຫົວໃຈ ຢ່າໄວ້ຊີວິດໃຫ້ຍັງ

ນີ້ດວງໃຈ ກໍດ້ານເສັຽແລ້ວ
ບໍ່ມີອີ້ແອວ ຈະຊ່ວຍໃຫ້ຊີບຂ້າຫວັງ
ສິ້ນຮັກສິ້ນສຸກ ຂາດຊາຍເພື່ອນທຸກຄູ່ຊັ່ງ
ທຸກຈົນຫົວໃຈກະດ້າງ ບໍ່ຢາກຈະຫວັງຈະມີ

ຢູ່ໄປ ທຸກອັນ
ກໍສຸດລຳຄານ ຫົວໃຈເຕັ້ນທີ່
ຢູ່ກໍຢູ່ ຢ່າງຊ້ຳຮືດີ
ຝືນຍິ້ມກັບຄວາມໂສກ ແລະໂລກໂສກສັນ

ທໍຣະມານ ດວງໃຈສຸດຝືນ
ກ່ອນນອນທຸກຄືນ ເຝົ້າແຕ່ສະອື້ນໂສກສັນ
ທີ່ຮັກກໍຫ່າງ ຈືດຈາງໄປເສັຽຈາກກັນ
ກໍຫົນຫົວໃຈຕາຍດ້ານ ຄອຍເຝົ້າອັນທີ່ຈະຕາຍ.

# ດົງນົກນ້ອຍ

ໂອ ຊີວິດ	พะເຈົ້າອິງໃດຂີດນາ ?
ໄຊກຊະຕາ	ເກີດນາພໍ້ແຕ່ຄວາມເສົ້າ
ສຸດຣະກັມ	ນ້ຳຕາໄຫຼນອງເຊັດເຂົ້າ
ທຸກຄ່ຳເຊົ້າ	ທົນຝືນ

ຕັ້ງແຕ່ນ້ອຍ	ເສື້ອຍນາຈົນຈະແກ່ຕາຍ
ຕ້ອງອາສັຍ	ຢູ່พายໄຕ້ເງົາຄົນອື່ນ
ເພິ່ງໃບບຸນ	ສຸນທານທີ່ຄົນຍິບຍື່ນ
ຕ້ອງຈຳຝືນ	ສູ້ທົນ

ຢາກຈະມີຄົນ	ຮັກດ້ອຍສົງສານ
ອີກມີພ້ອນທັງໃຈ	ທີ່ເປັນຂອງຕົນ
ໄດ້ແຕ່ອີງອອນຟ້າ	ທີ່ສຖິດເບື້ອງບົນ
ຊ່ອຍນຳຂ້າພົ້ນ	ດອງນານ

ດູດນົກນ້ອຍ	ທີ່ຄອຍອາສັຍຕົ້ນໄມ້
ອີກເມື່ອໃດ	ຈະມີຄູ່ນາໝາຍໝັ້ນ
ໄດ້ແຕ່ຄອຍ	ຫຼົງຄອຍຄິດຈົນໄຫວຫວັ່ນ
ສຸດໂສກສັນ	ເສົ້າໃຈ.

# ຢ່າຂ້າຫົວໃຈ

ຊາດນີ້ ຊາດນີ້ມີກັນ
ຄວາມຮັກທຳ ຊ້ຳອີກປວດຮ້າວ
ຈະຮັກໃຜ ກໍໝົດຫວັງໄປທຸກຄາວ
ເໝືອນຕົວເຮົານີ້ ບໍ່ມີຄ່າ

ຄວາມຮັກສິ້ນໄປ ຫົວໃຈຂ້າຊ້ຳ
ອ້າຍຍັງປະນາມ ແລະນິນທາ
ໄປຮດປະຫານ ຂ້ານີ້ໃຫ້ຕາຍ
ໄປເສັ່ງດີກວ່າ ຢ່າພຽງແຕ່ຂ້າຫົວໃຈ

ຢ່າເຢີ້ຍ ຢ່າເຢີ້ຍຕົວຂ້າ
ຂໍເມດຕາ ຂ້າຜູ້ຈົນຮ້າຍ
ຕັດຮັກແລ້ວ ຢ່າຄິດຕິດຕາມ ຜານໃຈ
ໄປຮດຈິ່ງໄດ້ ໃຫ້ຄວາມປຣານີ

ສິ້ນຮັກສິ້ນຫວັງ ຂ້າຍັງຫົມໄຫວ
ຂໍພຽງຫົວໃຈ ຢ່າຢື່ນປີ້
ແຕ່ອ້າຍນັ້ນ ກັບເຢີ້ຍໃຫ້ອາຍ
ໝາຍຕາຍບີບປີ້ ຫົວໃຈຂ້ານີ້ໃຫ້ຕາຍ.

# ເໝືອນຄົນໄຮ້ຄ່າ

| | |
|---|---|
| ຄວາມຮັກຂ້າສລາຍ | ຄວາມຫວັງກໍສູນໄປ |
| ຫົວໃຈຂ້າ | ສຸດໝົ່ນໝອງ |
| ຢາດ | ນ້ຳຕາໄຫຼນອງ |
| ສິ້ນຄູ່ຄອງ | ເໝືອນຄົນໄຮ້ຄ່າ |
| | |
| ຄົນຮັກທີ່ເຄີຍຫວງ | ຊາຍທີ່ຂ້າເຄີຍຫ່ວງ |
| ກໍລວງລັບ | ດັບຊີວາ |
| ສູ້ | ຮັບກັນເສື້ອຍມາ |
| ໄວດິນຟ້າ | ຂ້າຢາກຈະຕາຍ |
| | |
| ຢາກ | ໃຫ້ວິນຍານຂອງຂ້າ |
| ໄປຄູ່ຄຽງວິນຍາ | ຂອງພໍ່ຍອດຊາຍ |
| ເຢີ້ຍຂ້າຢູ່ | ຢ່າງໝົດຄວາມໝາຍ |
| ຢູ່ໄປກໍອາຍ | ຊາຍໃດກໍບໍ່ຕ້ອງການ |
| | |
| ຄົນໄຮ້ຄ່າຢ່າງນີ້ | ຈົນກໍຈົນເຫຼືອດີ |
| ຫານີໃຜ | ຈະສົງສານ |
| ສຸດ | ແສນທໍຣະມານ |
| ໂອ ສວັນ | ຟ້າຈົ່ງເມດຕາ. |

# ຫາກແຫ່ງນັ້ນມີຈອມໃຈ

ສຸດແຜ່ນດິນ ສິ້ນສາຍທາຣາ ສຸດຂອບຟ້າຂ້າຍັງຈະໄປ
ຫາກແຫ່ງນັ້ນ ມີຈອມໃຈ ທີ່ຂ້າຫວັງ
ໃຫ້ໄກກວ່ານີ້ ແມ່ນດັບຊີວີ ໃນກາງທາງ
ຈະຂໍໄປ ໄປພົບນາງ ເຖິງໄກກໍຕາມ

ຫວັ່ນສິ່ງດຽວ ຫວັ່ນໃຈຂອງນາງແບ່ງຫຼາຍທາງແລ້ວຍັງຫຼອກລອງ
ຫຼອກໃຫ້ຫຼົງ ໃຫ້ເຈັບຊອງ ໃຫ້ຫ່ອງນຳ
ສ່ວນຕົວຂ້ານີ້ ຊື່ສັດພັກດີ ມີສິນທັມ
ບໍ່ຄິດລອງ ເກງບາບກັມ ຈະຕາມສນອງ

ພູເຂົາ ລຳເນົາ ຜາຊັນ
ຊ້າງເສືອ ກີດກັນ ກັ້ນກາງເຮົາສອງ
ຫາກຮັກກັນຈິງ ເຖິງມີມານ ແຮງຮັກຍັງຈ່ອງ
ໃຫ້ເຮົາສອງ ມາພົບກັນ ດັ່ງໃຈໄຝ່ຫາ

ຊ່ວຊີວີ ຊ່ວມີຣັນດອນ ຢ່າໄດ້ຖອນໃຈໄປຈາກກັນ
ໂປຣດຈົ່ງຄິດ ຄິດສົງສານ ຂ້າເຖີດໜາ
ຂ້າຍອມອຸທິດ ຊີວິດແລະກາຍ ຍອມດັ້ນມາ
ຫາກນ້ອງລອງ ຄົງບາບໜາ ຕົກອະເວຈີ.

# ບໍ່ເຄີຍຮັກໃຜເທົ່ານາງ

ບໍ່ເຄີຍ ບໍ່ເຄີຍ ຮັກໃຜເທົ່ານາງ
ບໍ່ເຄີຍຫາທາງ ເມີນໜາງເຈົ້າເລີຍ
ອ້າຍຍັງຮັກດຽວ ໃຈດຽວເໝືອນເຄີຍ
ຢ່າຟັງຄົນເຍີ້ຍ ເອີ່ຍສິນນິນທາ

ບໍ່ເຄີຍ ບໍ່ເຄີຍ ຄິດລອງລີ້ກັນ
ບໍ່ເຄີຍເຫຫັນ ສາບານສັນຍາ
ອ້າຍພຽນໄຫວ້ອອນ ຢູ່ທຸກເວລາ
ຢາກໃຫ້ດິນຟ້າ ຊ່ວຍເປັນພະຍານ

ຍັງຮັກ ຍັງຮັກ ຍັງຮັກນ້ອງຢູ່
ຄິດເຖິງຍອດຊູ້ ຢູ່ທຸກຄືນວັນ
ຢາກໃຫ້ຄວາມຈິງ ເໝືອນດັ່ງຄວາມຝັນ
ຢາກໃຫ້ວິມານ ໄຫລານສິນປອງ

ບໍ່ເຄີຍ ບໍ່ເຄີຍ ຫຼອນຕົວຫຼົງໃຈ
ບໍ່ເຄີຍຄິດໄປ ໜີໄກເນື້ອທອງ
ອ້າຍຍັງຊື່ຕຮົງ ບໍ່ຫຼົງລືມນ້ອງ
ຢາກເປັນເຈົ້າຂອງ ຢາກຄອງຄູ່ນາງ.

# ປ່າອອດ

ປ່າອອດ ປ່າໂອ່ງ ໄປເລີຍນ້ອງສາວ
ນ້ອງປ່າຄິດຟ້າວ ຊອກຫາເອົາໃໝ່ ຄຽງຄູ່ເດີນໂຊ
ອ້າຍບໍ່ໄຝ່ໃຈ ເຖິງນ້ອງຈະໄດ້ ຄູ່ຄອງອັກໂຂ
ນ້ອງສາວເຈົ້າປ່າຄຸຍໂມ້ ອອດໂຕ ອ່າເດັ້ນອ່າດີ

ປ່າອອດ ປ່າໂອ່ງ ໄປເລີຍຊານມົນ
ຮູບງາມບໍ່ສົ່ງ ໃຫ້ນ້ອງເປັນຫົງ ຕະລອດຊີວີ
ນ້ອຍນຶ່ງພົບແກ່ ຂາດຊາຍຫຼຽວແລ ປ່ານາອອດດີ
ເນື້ອໜັງຫ່ຽວແຫ້ງຫຸກທີບໍ່ມີ ໃຜຈະຫົວຊາ

ຕາຍ ໃຫ້ຕາຍ ໝົດຕາຍແລ້ວເກີດ
ອ້າຍນີ້ບໍ່ເລີຍ ຄິດເລີຍ ທີ່ຫວັງແກ້ວຕາ
ຜູ້ຍິງທັງເມືອງ ບໍ່ອຶດບໍ່ຢາກ ດອກໜາ
ຂໍນ້ອງເນື້ອທອງເຈົ້າປ່າ ອອດທ່າ ເຫັນມີແຟນໃໝ່

ປ່າອອດ ປ່າໂອ່ງ ໄປເລີຍການດາ
ເຈົ້າງາມໂສພາ ເໝືອນເທວະດາ ບິນຟ້າເມື່ອໃດ ?
ເຈົ້າອາດຜິດຫວັງ ເພາະມີອີກຄັ້ງ ເຈົ້າຈະເສັຽໃຈ
ເມື່ອເຂົາສິ້ນຄວາມອາລັຍຍານວັຍ ເຈົ້າສິ້ນໂສພາ.

# ປາດນ້ຳຝົນປົດນ້ຳຕາ

ເຫັນປາດນ້ຳຝົນ ຫຼົ່ນຈາກຊາຍຄາ
ເໝືອນປົດນ້ຳຕາ ຍາມຟ້າສະອື້ນ
ຟ້າຄົງຈະປອດ ດວງໃຈສຸດຝືນ
ຟ້າຈຶ່ງສະອື້ນ ໝອງໝົ່ນຈົນຊ້ຳໃນຊວງ

ຟ້າໂກດເຄືອງໃຜ ຈຶ່ງແອບຮະທົມ
ຫຼືວ່າຟ້າຕຣົມ ເປັນແຜທົວໃຈ
ຫຼືມີຄວາມຜິດ ອາຣົມຫວັ່ນໄຫວ
ຫຼືຄົນຮັກໜ່າຍ ຟ້າຈຶ່ງໄດ້ຫຼັ່ງນ້ຳຕາ

ດິນປາກຊັບ ປາກເຊັດນ້ຳຕາຟ້າຫຼັ່ງ
ແຕ່ເກງຟ້າຊັງ ວ່າດິນຕ່ຳກວ່າຟ້າ
ດິນຍັງຫວັງ ຕັ້ງໃຈເອົາໄວ້ວ່າ
ແມ່ນຟ້າສິ້ນຄົນປາຖນາ ຈຶ່ງນ້ອມລົງມາດິນຈະປະຄອງ

ຟ້າຢ່າໂສກສົນ ຢ່າຫວັ່ນເກງກົວ
ດິນຈະສ້າງຕົວ ເປັນພູເຂົາທອງ
ຟ້າຄົງຈະສຸກ ຍາມເຮົາຄຽງສອງ
ຟ້າຄົງໃສສ່ອງ ສິ້ນຄວາມໝອງໝົ່ນຮືທັຍ.

# ຟ້າເທົ່ານັ້ນ

ນີ ຟ້າເທົ່ານັ້ນ
ທີ່ຮູ້ທັນ ອ້າຍຮັກນ້ອງນັ້ນພຽງໃດ
ຟ້າເທົ່ານັ້ນ ຮູ້ໃນຫົວໃຈ
ທຸກຄືນແລະວັນໝອງໄໝ້ ນ້ຳຕາໄຫຼນອງ

ພຽງ ຟ້າເທົ່ານັ້ນ
ເປັນພະຍານ ຊີວັນອ້າຍຄືນອນນ້ອງ
ຟ້າເທົ່ານັ້ນ ແຫງນຄໍຫຼຽວນອງ
ຮູ້ວ່າຣືທັຍທຸກທ້ອງ ນີ້ນ້ອງຕະລອດໄປ

ຟ້າເທົ່ານັ້ນ ຈະເຕືອນວ່າໃຜລືມກ່ອນ
ຟ້າເທົ່ານັ້ນ ຈະຫຼອນເມື່ອຕອນຮັກຄາຍ
ຟ້າເທົ່ານັ້ນ ທີ່ຈະເນດຕາເຫັນໃຈ
ໃຫ້ຮັກ ຢ່າຈາງ

ຍັງ ຟ້າເທົ່ານັ້ນ
ທາກສຳພັນ ຮັກເຮົາເລືອນເລີຍເຫີນຫ່າງ
ຟ້າເທົ່ານັ້ນ ເຝົ້າເຕືອນນີຈາງ
ໃຜຍັງຮັກຈິງເໝືອນດັ່ງ ສັນຍາໃຫ້ໄວ້.

# ສາມຫມື່ນເມືອງເຟືອງ

ເມືອງນຶ່ງນັ້ນ ເປັນເມືອງທີ່ລືກະເດື່ອງ
ນິນາມສາມໝື່ນເມືອງເຟືອງ ລືຈົນເຟື້ອງທົ່ວແດນອານາ
ເຖິງແມ່ນເປັນເມືອງ ຢູ່ຕາມຫວ່າງພູຮ່ອນຜາ
ເຈົ້າຍັງສົດສອຍງາມຕາ ດັ່ງເທວາສອັນສັນສ້າງ

ສາມໝື່ນນີ້ ເປັນແດນຝູງຊົນຝັນໄຝ່
ທົ່ວທັດກໍງາມຈັບໃຈ ວິລັຍໄປທົ່ວທຸກທິດທາງ
ຫາກໃຜໄດ້ເຫັນ ບໍ່ເອັ້ນທົ່ວໃຈເອັ້ນອາງ
ອຸດົມສົມບູນທຸກຢ່າງ ຫາກຢືນຢັ້ງເຖິງແດນແຫ່ງນີ້

ສາມໝື່ນເມືອງເຟືອງ ເຖິງບໍ່ເຮືອງເໝືອນເມືອງອື່ນໆ
ແຕ່ກໍອຸດົມຊົນຊື່ນ ດ້ວຍຊັບສິນໃນດິນນາການີ
ຝູງຊົນປະຊາ ອາຈາກໍຫວານຮືດີ
ຖືກັນເປັນມິດໄມຕຣີ ເມື່ອມີເມືອງອື່ນຢ້ຽມຢາມ

ສາມໝື່ນນີ້ ເປັນເມືອງນັບວ່າເປັນນຶ່ງ
ພູຜາສູງຊັນຊາບຊຶ້ງ ສອຍສງ່າຣາອັນງົດງາມ
ຍາຕົ້ງຜາລີ ເປັ່ງແສງເມື່ອຍາມຄ້ອຍຄ່ຳ
ຜາຫົ້ງໜໍ່ຄຳແສນງາມ ເປັນນິ່ງຂອັນປະດັບຂອງເມືອງ.

# ສາວອຸເທນ

ສາວອຸເທນ ຊ່າງສອຍງານເດັ່ນຕິດໃຈລ້ຳ
ຄຽ້ວແຕ່ກະຈຳ ຫຼີງຝາກຮັກຝາກຊີວັນ

ຫຼີງໄຝ່ຝັນ ທຸກວັນນິອາດຈະລືມໄດ້
ຮັກຂ້າໝົດໃຈ ຫຼີງພ້ຳໄອ້ແຕ່ພຽງນາງ

ດວງໃຈຂ້ານີ້ ທີ່ມີດວງນຶ່ງ
ຮັກແທ້ສຸດຊຶ້ງ ບໍ່ຈືດຈາງ
ຫາກນ້ອງປຣານີ ບໍ່ຂໍເຫີນຫ່າງ
ຈະຂໍຮັກນາງ ຊົ່ວຊີວັນ

ສາຍນ້ຳຂອງ ໄຫຼນອງຂ້ານເສັ້ນທາງເຮົານັ້ນ
ຂ້າຢາກຜູກພັນ ດັ້ນຂ້ານມາຖິ່ນອຸເທນ.

# ຍິ້ມ

ຍິ້ມ ຮອຍຍິ້ມແມ່ນາງຊ່າງຫວານ
ຫວານ ຍິ່ງກວ່ານ້ຳຕານຮ້ອຍເທົ່າ

ຍິ້ມ ຮອຍຍິ້ມນັ້ນຊ່ອຍແບ່ງເບົາ
ຫວານ ແລ້ວລືມຄວາມເສົ້າໂສກສັນ

ຍິ້ມ ນ້ອງມີຄວາມໝາຍ
ຫວານຈິນໃຈ ອ້າຍລະເມີເພີ້ຝັນ
ແມ່ນ ໄດ້ເຊີຍຊີດຊິນທຸກວັນ
ຈະແພງຍິ້ມນັ້ນ ຍິ້ມຫວານປະດັບຊີວີ

ຍິ້ມ ຂໍນ້ອງຈົ່ງຍິ້ມອີກທີ
ຫວານ ຫວານໃຈພຽງນີ້ບໍ່ລືມ.

# ພວງມະລັຍນ້ຳໃຈ

ພວງມະລັຍເຈົ້າເອີຍ ພວງມະລັຍນ້ຳໃຈ (ຊ້ຳ)
ອ້າຍສົ່ງມາໃຫ້ ຢູ່ບົນເວທີ
ສ່ວນເພັງນີ້ ຂໍມອບແກ່ອ້າຍ
ຫາກຟັງແລ້ວ ຂໍໃຫ້ສຸກໃຈ
ສົດຊື່ນແຈ່ມໃສ ຮື່ນເຣີງຣືດີ
ຂໍຂອບໃຈ ທີ່ຍັງເມດຕາ
ມອບສົ່ງມາ ດ້ວຍໃຈປຣານີ
ຂໍຝາກເພັງນີ້ ມອບຕອບແທນແຮງໃຈ

ຫາກສົນໃຈ ສົ່ງຈົດໝາຍຂໍຟັງ
ເພັງຈີນເພັງຝຣັ່ງ ຮ້ອງໃຫ້ຟັງກໍໄດ້
ຄືນອັນນີ້ ແສນສະນຸກຫົວໃຈ
ຄ່ຳຄືນນີ້ ແສນສຸກໃຈໜັກໜາ
ມີແຟນເພັງມາ ຊ່ວຍໃຫ້ກຳລັງໃຈ

ຂໍຂອບໃຈ ແຟນເພັງທັງຫຼາຍ
ທັງຍິງແລະຊາຍ ທີ່ໄດ້ມີຄວາມປຣານີ
ຫາກອັນໃດ ທ່ານຢາກມີສຸກຂີ
ເວລາໃດ ຖ້າຢາກມີສຸກສັນ
ເປີດຟັງເພັງໄພວັນ ແລ້ວຈະໄດ້ສຸກເອີຍ.

# ຫວນເຖິງຖິ່ນ

ຫວນເຖິງດິນ ຖິ່ນບັງເກີດເກົ້າ
ເຖິງພຶກສາຮອຍເກົ່າ ລຳເນົາທີ່ອາສັຍມາ
ແມ່ນຕູບຕໍ ຫຼັງຄານຸງຫຍ້າ
ເມື່ອຄາວນ້ອຍມາ ຂ້າຈຶ່ງຄະນຶງບໍ່ວາຍ

ສາວເອື້ອງດົງ ຄ່ຳຄອນໃຈຄ້ອຍ
ຫວນຄະນຶງບ້ານນອກ ທີ່ດອຍທີ່ເຄີຍເຊີດຊົງ
ເຫັນເມກຊອນ ຊື່ນາງສາວດົງ
ບໍ່ເຄີຍຫຼົງລືມ ເພດຊົງໂສພີບ້ານນາ

ຍາມຫຼຽວມອງ ທົ່ວພຶກສາຊິນ
ຍາມນົກໄຜບິນ ແອ່ນບິນໄຮ່ຮ້ອງເຮົງລ່າ
ນີ້ແລະຄື ເພື່ອນສາວຊາວປ່າ
ແຕ່ຄາວນ້ອຍມາ ຂ້າຈຶ່ງຄິດເຖິງບໍ່ວາຍ

ເຖິງຂ້າໄກ ກໍຈຳໃຈໜີ
ຍ້ອນນິນານຮາວີ ບີບບີ້ສິດທິທົ່ວໃຈ
ແມ່ນຈາກໄກ ກໍໄປພຽງກາຍ
ສ່ວນຫ້ອງຫົວໃຈ ບໍ່ວາຍຄິດເຖິງບ້ານເດີມ.

# ມີແຟນຫຼືບໍ່ ?

ຜູ້ຊາຍຄົນນັ້ນ ຜູ້ຊາຍຄົນນີ້
ຜູ້ຊາຍຄົນນັ້ນ ມີແຟນຫຼືບໍ່ ?
ເບິ່ງຂົນຕາ ສີຍໍ່ໆ
ມີຫຼືບໍ່ ຜູ້ຄອງຫົວໃຈ ?

ບອກມາເບິ່ງດີ ບອກມາເຖີດນະ
ບອກມາເຖີດໜາ ນັ່ງເສີຍຢູ່ໄດ້
ຄົນອີຫຼັ່ງ ໜ້າໜ່າຍ
ຫຼືຂີ້ອາຍ ຕາຍໆ ຈັ່ງແມ່ນໄງ່ເນາະ

ສາວຖາມ ເປັນຫຼັງບໍ່ປາກ ?
ຫຼືບໍ່ຄິດຢາກ ໝາກແຕງໝາກໂມ
ໂງ່ ກໍ ໂງ່ ຈ້າຕາຍພາໂລ
ຢ້ານບໍ່ກຸ້ມໂຕ ດອກຜູ້ຊາຍແບບນີ້

ບອກມາເບິ່ງດີ ປາກກືກຊັ້ນອະ ?
ບອກມາເຖີດໜາ ຢາກຟັງເຕັມທີ່
ມີຂອງຂວັນ ຢ່າງດີ
ຈະໃຫ້ຟຣີ ບໍ່ຢາກໄດ້ຊັ້ນເບາະ ?

# ບໍ່ເຊື່ອອີກແລ້ວ

ຜູ້ຊາຍ ຜູ້ຊາຍ ຜູ້ຊາຍ   ບໍ່ເຊື່ອອີກແລ້ວ   ຫົວໃຈຜູ້ຊາຍ
ອອກປາກມາຄາວໃດ   ຫວານຊຶ້ງເຖິງໃຈ   ຜູ້ຊາຍຫຼາຍລີ້ນ
ເງິນເຂົານິບໍ່ອັ້ນ   ວ່າແຕ່ເຮົາຝັນ   ຍົກໃຫ້ບໍ່ຂືນ
ແຕ່ພໍເຖິງຍາມເຂົາໄດ້ກິນເຂົາກໍລືມສິ້ນ   ບິນຈາກເຮົາໄປ

ຜູ້ຊາຍ ຜູ້ຊາຍ ຜູ້ຊາຍ   ບໍ່ເຄີຍມີໃຜ   ຮັກຈິງດອກໜາ
ດັ່ງທີ່ເຄີຍພົບມາ   ຍິງກິນນ້ຳຕາ   ຈົນນັບບໍ່ໄດ້
ຍາມຮັກກໍວ່າຫ່ວງ   ແຕ່ຄວາມຫຼອກລວງຊ້ອນຢູ່ພາຍໃນ
ຖ້າຈະມົວໄປເຖິງລວດລາຍເສືອປ່າວ່າຮ້າຍ   ແສນຕົວກໍບໍ່ປານ

ຜູ້ຍິງ ຜູ້ຍິງ ຜູ້ຍິງ   ກ່ອນທີ່ຈະຫຼົງ   ປົງໃຈແກ່ຊາຍ
ຕ້ອງສືບຕົ້ນສືບປາຍ   ເສັຽກ່ອນຈຶ່ງໝາຍ   ຕາມໃຈເຮົານັ້ນ
ເມັຽເຂົາມີຫຼືບໍ່ ?   ລູກເຕົ້າເລົ່າກໍ   ມີຢູ່ຈັກພັນ ?
ຖ້າເຮົາເຜີຕາມເຂົາບໍ່ທັນ   ຣະວັງເຂົາຈັດການ   ເອົາໄປຟຣີໆ

ຣະວັງ ຣະວັງ ຣະວັງ   ຂໍບອກໃຫ້ຟັງ   ຖາມລູກຜູ້ຍິງ
ບອກໃຫ້ຕາມຄວາມຈິງ   ເພາະເຮົາເປັນຍິງ   ກັນດານເຫຼືອທີ່
ຢ່າເຫັນເງິນເປັນໃຫຍ່   ກ່ອນທີ່ຈະໝາຍ   ຄິດໃຫ້ດີໆ
ຖ້າມີຊາຍໃດຫວັງຟຣີໆ   ຢ່າໄປໃຍດີ   ປ່ອຍໃຫ້ເຂົາຕາຍເອງ

# ຍອດນາຣີແຫ່ງສີເມືອງ

ຍອດນາຣີ　　　　ແຫ່ງສີເມືອງ
ຊື່ນ້ອງລືກະເດື່ອງ　　　　ທົ່ວເມືອງກ່າວຂານອ່າງານ
ຊາຍໃດເຫັນນ້ອງ　　　　ກໍຕ້ອງຫຼົງໄຫຼຕິດຕາມ
ຄົງເປັນທາດແຫ່ງຄວາມງາມ　　　　ດ້ວຍຄວາມຊື່ສັດຕໍ່ນ້ອງ

ເທບວິມານ　　　　ເສກສັນມາ
ຄວາມສວຍນ້ອງລ້ຳຄ່າ　　　　ຍິ່ງກວ່າຄົນທຸກຈະປອງ
ເໝືອນຈັນຄູ່ຟ້າ　　　　ກະຕ່າຍແຫງນໜ້າແລມອງ
ເມື່ອໃດນໍຈະໄດ້ຄອງ　　　　ນອນນ້ອງດັ້ງປາຖນາ

ແມ່ນບຸນອ້າຍສ້າງ　　　　ແຕ່ປາງກ່ອນນີ້ມາກມາຍ
ນ້ອງຄົງຈະຄິດເຫັນໃຈ　　　　ຕອບຮັກອ້າຍໃຫ້ສົມອຸຣາ
ອ້າຍຫຼົງຮັກເຈົ້າ　　　　ຄ່ຳຄືນເຝົ້າແຕ່ຝັນຫາ
ຄອຍໆວັນວິວາ　　　　ໂອຂວັນຕານ້ອງຢ່າໄດ້ອາຍ

ຍອດນາຣີ　　　　ທີ່ອ້າຍປອງ
ອ້າຍຂໍຮັກພຽງນ້ອງ　　　　ຈະຄອງຮັກນີ້ຈົນຕາຍ
ແມ່ນທາກສິ້ນຫວັງ　　　　ບໍ່ໄດ້ດັ້ງໃຈໝັ້ນໝາຍ
ອ້າຍເຫັນຈະຕ້ອງລາໄປ　　　　ຝາກກາຍກັບສາສນາ.

# ປາກຮັກສາວເມືອງຫຼວງ

ເມືອງຫຼວງພຣະບາງ ຊ່າງງາມວິລັຍແທ້ເອີຍ
ຂ້ານີ້ກໍເຄີຍ ໄດ້ມາທ່ຽວຊົມຄັ້ງນຶ່ງ
ພູສີສູງສົ່ງພຽງຟ້າ ເຫັນແລ້ວຍິ່ງພາຕົກຕະລຶງ
ໂອ້ດາວະດຶງ ຫຼືແດນສວັນກັນແນ່

ໜຸ່ມສາວກໍງາມ ອາຣາມດັ່ງດວງມະນີ
ບານຈໍ່ລຸມຈີ ຂ້ານີ້ຕ້ອງຫຼົງໝຸ່ວແລ
ປາກຮັກປາກຢູ່ຄຽງສອງ ຈະຂໍປະຄອງບໍ່ປ່ຽນແປ
ຈະຮັກນ້ອງແທ້ ດ້ວຍໃຈຊື່ງຕຣົງຕລອດການ

ນອນນ້ອງງາມຍິ່ງ
ອ້າຍປາກຮັກເຈົ້າຈິງ ແອບອີງຮ່ວມທໍສຳຣານ
ນ້ຳຂອງຍັງໄຫຼ ລ່ວງແມ່ຄານ
ຂໍນ້ອງຈົ່ງສົງສານ ເມດຕາຄວາມຮັກຂ້າໂອ້(ຮື ໆ ໆ ໆ)

ຈາກຫຼວງພຣະບາງ ຈາກນາງທີ່ແສນໂສພາ
ຈາກພຽງກາຍາ ຈິດຍັງໄຝ່ຕາຂວັນໃຈ
ນ້ອງສາວເຈົ້າຈົ່ງອິນດູ ຂ້າຂໍເປັນຄູ່ຢູ່ຄຽງໄກ້
ເຖິງຈາກນ້ອງໄປ ບໍ່ນານເທົ່າໃດຄົງກັບມາ.

# ຜູ້ຊາຍແສນລອງ

ຜູ້ຊາຍຮ້ອງເພັງຮ້ອງສິ່ງ
ແຕ່ຜູ້ຊາຍເອງບໍ່ວ່າ
ຍິງເສັງຊື່
ກໍຍ້ອນຜູ້ຊາຍ
ຕົກກະແຕນໆໜ້າລາຍ

ວ່າຍິງອົ່ງອອດດີນານາ
ຫຼອກຍິງມາແລ້ວເທົ່າໃດ
ເລົ່າລືກັນຍົກໃຫຍ່
ໜ້າລາຍຕົກກະແຕນ
ໜ້າຜູ້ຊາຍໜ້າລາຍຕົກກະແຕນ

ຍິງນີ້ເຄີຍພົບມາ
ຄອຍຕາມລ້າງຕາມຜານ
ເພິ່ນວ່າ ເພິ່ນນັ້ນຍັງ
ແຕ່ເບື້ອງຫຼັງນັບແສນ
ແສນລອງ ໆ

ກໍຍ້ອນຜູ້ຊາຍນີ້ແຫຼະຕົວການ
ຊອບເປັນນານຜູ້ຍິງທົ່ວແດນ
ຄອງຄວາມໂສດບອກໂລດແປນໆ
ທັງຊູ້ທັງແຟນ ເມັຽນ້ອຍເມັຽຫຼວງ
ຜູ້ຊາຍ

ມືໄວກໍເປັນທີ່ນຶ່ງ
ປາກວ່າມືເຖິງພ້ອມໄປ
ຢ່າໄປຫຼົງເຊື່ອຄຳ
ເມື່ອສິນໃຈທຸກສິ່ງ
ໄທຊາຍ ໆ ແສນລອງ

ທະລື້ງກໍສຸດຜູ້ຊາຍ
ຣະວັງເອົາໄວ້ເຖີດເພື່ອນຍິງ
ຂອງຜູ້ຊາຍໝາຍພຽງແອບອີງ
ແລ້ວຊາຍຈະຖິ້ມໃຫ້ແຫ້ງຫ່ຽວດຽວດາຍ
ແສນລອງ ໆ ຜູ້ຊາຍ

ຈຶ່ງເກີດມີບັນຫາ
ແລ້ວສິເຮັດຈັ່ງໃດ
ກ່ອນຈະຮັກຜູ້ຊາຍ
ຜູ້ຊາຍບໍ່ຊຽນປ້າຍເມັຽຫຼວງ ໆ
ຮ້ອງເພັງເຕືອນເພື່ອນຍິງ

ໂລກແຕກຂຶ້ນມາກໍຍ້ອນຜູ້ຊາຍ
ເພື່ອນຍິງຈຶ່ງໄດ້ໄປຮດຊັ່ງຕອງ
ສືບຕົ້ນສືບປາຍ ໃຫ້ດີຢ່າທ່ອງ
ຂ້ອຍຈຶ່ງເປັນຫ່ອງ
ຮ້າຍຈິງ ໆ ຜູ້ຊາຍ.

# ທັມມະຊາດພູເຂົາຄວາຍ

ຊ່າງງານໜັກໜາ　　ຜາໂຂດຫີນຊັນ
ພູເຂົາລຳເນົາພະນາວັນ　　ດັ່ງສວັນສ້າງມາ
ຕົ້ນແປກແນກໄມ້　　ລົມພັດໂອນໂກວງານຕາ
ສູງດັ່ງຄ້າຍກັບວ່າ　　ດິນຕຣີແຫ່ງແດນສວັນ

ນ້ຳເຊາະແກ່ງຫີນ　　ລົມຫຼັ່ງໄຫຼນອງ
ນ້ຳໃສໄຫຼເຢັນເປັນຟອງ　　ເນື່ອແລນອງສຸກສົນ
ເຫັນໝູ່ມັດສາ　　ລ່ອງລອຍຫາຣາງານນົ້ນ
ນົກນ້ອຍງອຍໂຂດຫີນຊັນ　　ສົ່ງສຽງອ່ອນຫວານດັ່ງນາຣີ

ພູເຂົາຄວາຍ　　ສວຍງາມສວາດ
ງານແທ້ໃຈທັມມະຊາດ　　ສວັນອາດໄວ້ຫຼືນີ້
ຫາກແມ່ນຜູ້ໃດ　　ໄດ້ໄປກໍຄືງສຸກຂີ
ດິນແດນພູເຂົາຄວາຍນີ້　　ຊ່າງມີແຕ່ສິ່ງງານຕາ

ຍິ່ງມອງຍິ່ງງາມ　　ຍາມເນື່ອເຊົ້າຕຣູ່
ລົມໜາວຍັງໂຊຍພັດຢູ່　　ໝູ່ນົກຮ້ອງກູ່ມາ
ແສງແດດກໍສ່ອງ　　ທົ່ວທ້ອງພະລານວັນນາ
ເມກຄ້ອຍລອຍຕາມຈອມຜາ　　ຊາບຊຶ້ງອຸຣາຂ້າແທ້ເອີຍ.

# ບຸ່ງພ້າວສາວງາມ

ບຸ່ງພ້າວສາວງາມ ດັ່ງນາງສວັນ
ເທບທາອາໃດປັ້ນ ສ້າງສັນນ້ອງງາມໜັກໜາ
ເປັນເທພີ ທີ່ສວຍເດັ່ນງາມຕາ
ອ້າຍຍັງຫວັງປາຖນາ ແກ້ວຕານາແນບດວງໃຈ

ບຸ່ງພ້າວສາວເອີຍ ເຈົ້າເລີຍຍິ້ມຫວານ
ຈົ່ງເຫັນຫົວໃຈອ້າຍນັ້ນ ຮັກນາງບໍ່ໄດ້ໜ່າຍໜີ
ອ້າຍຍັງຮັກ ຮັກສາວເຈົ້າດັ່ງຊີວີ
ຈະຂໍມອບຊີວິດນີ້ ໃຫ້ສາວບຸ່ງພ້າວຄຽງນອນ

ໜຸ່ມແດນໄກ ຝັນໄຝ່ຄອນຫາ
ອ້າຍແທບເປັນບ້າ ບາງຄັ້ງເປັນລົມຫົວໃຈໄຫວຫວັ່ນ
ສຸດຈະຮັກ ຮັກສາວ ເຈົ້າດັ່ງຊີວັນ
ຖ້າໄດ້ຄູ່ຄຽງຈອນຂວັນ ຈະຮັກນ້ອງນັ້ນ ເໝືອນຈັນຄູ່ດາວ

ບຸ່ງພ້າວສາວເອີຍ ເຈົ້າຢ່າເມີນໜາງ
ຈົ່ງເຫັນຫົວໃຈອ້າຍຕັ້ງ ລຳພັນຝັນເພີ້ຄອນຄາງ
ຫາກໄດ້ສາວ ໄດ້ສາວມານອນແນບຂ້າງ
ອ້າຍຈະບໍ່ໜີເຫີນຫ່າງ ຈະຮັກນາງນ້ອງເຈົ້າຜູ້ດຽວ.

# ຄຶດຮອດຄວາມຮັກ

ຄຶດຮອດຄວາມຮັກ ແລ້ວນອນບໍ່ຫຼັບ
ໄດ້ແຕ່ນັ່ງນັບ ເວລານາທີ
ຍັງອີກຈັກເດືອນ ຍັງອີກຈັກປີ
ຈະສົມຣືດີ ພິທີວິວາມຸງຄຸນ

ຄຶດຮອດຄວາມຮັກ ແລ້ວນອນບໍ່ໄດ້
ຮູ້ສຶກຄັນຄາຍ ກາຍໃຈເຫຼືອທົນ
ຍັງອີກຈັກແລ້ງ ຍັງອີກຈັກຝົນ
ໜາວນີ້ຄົງທົນ ຕໍ່ໄປບໍ່ໄຫວຕາຍແມ່

ລົມແລ້ງລົມຝົນ ລົມໜາວລົມຮ້ອນ
ພັດອີ່ພັດວອນ ພັດຈອນລັບແລ
ລົມປາກລົມໃຈ ໃຜຈິງຈັງແດ່
ຂໍທານຂໍແຜ່ ຈັກຄົນແດ່ເດ

ຄຶດຮອດຄວາມຮັກ ຫົວໃຈຕຶກຕັກ
ໃຈເຕັ້ນຄຶກຄັກ ເໝືອນຈັກລົດເພ
ຢ້ານແຕ່ຄວາມຮັກ ຊັກຕົກທະເລ
ຢ້ານຫົວໃຈເພ ຢ້ານເຊລົງເຫວເຖິງຕາຍ.

# ລຳວົງກັນກ່ອນ

ລຳວົງກັນກ່ອນ ສຳລານໃຈ
ໃຫ້ຈິດຜ່ອງໃສ ຮ້ອງລຳໄປໃຈເພີນ
ລຳວົງ ໂຄ້ງພາກັນເດີນ (ຊ້ຳ)
ສນຸກເຫຼືອເກີນ ເພີນໃຈເພີນເພັງ

ສາວນີ້ຟ້ອນງາມລຳເກັ່ງ ສາວນັ້ນຟ້ອນງາມລຳເກັ່ງ
ເອີກເບັ່ງແອວກິ່ນ ສິນນານອໍຣະຊອນ
ຢາກຈະລຳລຳໂຄ້ງແມ່ເນື້ອອ່ອນ ຢາກຈະເປັນຈອນໃຈແມ່ງາມງອນ
ຍີ້ມຈັກໜ່ອຍບັງອອນ ຈະເກັບໄປນອນຝັນເອີຍ

ລຳກັນເປັນຄູ່ ເປັນຄູ່ໄປ
ລູກໃຜເມັ່ງໃຜ ຟ້ອນກັນໄປເລີຍໆ
ລຳວົງ ຍີ້ມລິນຊິນເຊີຍ (ຊ້ຳ)
ຕາມແບບທີ່ເຄີຍ ລຳກັນນານານ

ຄູ່ນີ້ສົມກັນດີແທ້ ຄູ່ນັ້ນສົມກັນດີແທ້
ຢ່າດ່ວນຜັນແປ ແສໄປເປັນອື່ນ
ຈົ່ງຖນອມຄວາມຮັກໃຫ້ຢັ້ງຍືນ ຢ່າລອນເລລອນລານທຳຝ່າຝືນ
ຂືນຄອງປະເພນີ ເຈົ້າຈະເສື່ອມສີເສັ່ງໃຈ.

# ສຸກສັນວັນປີໃຫມ່

ອັນນີ້ ວັນດີປີໃໝ່
ເຮົາມາອວຍໄຊ ໃຫ້ສຸກສຳຣານ
ມາສ້າງແດນນີ້ ໃຫ້ເປັນແດນສວັນ (ຊ້ຳ)
ມາຟ້ອນລຳກັນ ສລອງວັນປີໃໝ່

ຄວາມທຸກ ທີ່ເຄີຍປະສົບ
ຈົ່ງຢ່າໄດ້ພົບ ຜ່ານອີກຕໍ່ໄປ
ໝົດສິ້ນໄປເສັຽ ສິ່ງທີ່ເສົ້າໝອງໃຈ (ຊ້ຳ)
ຄວາມສີວິລັຍ ຈົ່ງໄດ້ມາແທນທີ່

ເຮຮາ ທົວຍິ້ມເພື່ອນເອີຍ
ຢ່າໂສກໄປເລີຍ ຄັ້ງດຽວນຶ່ງປີ
ວັນນີ້ ໄຊກງານຍານດີ (ຊ້ຳ)
ເຮົາມາສວັດດີ ສວັດດີປີໃໝ່

ຫາກໃຜ ເຈັບຊ້ຳຂົມຂື່ນ
ໄປຣດຈົ່ງຄາຍຄືນ ຊື່ນສຸກຕໍ່ໄປ
ຫາກໃຜສຸກແລ້ວ ຂໍຢ່າແຄ້ວຄາດໄປ (ຊ້ຳ)
ເຮົາຂໍອວຍຊັຍ ໃຫ້ທຸກທ່ານໂຊກດີ.

# ຕີບ່ອນໃດ ?

ຕີບ່ອນໃດ ເຈົ້າຕີອ້າຍບ່ອນໃດ(ຊ້ຳ)
ຕີອ້າຍຈ່ອຍຊັ້ນເບາະ ລະຄົນດີ
ຕີອ້າຍບໍ່ພິ
ແຂ່ງຂາບໍ່ໃຫຍ່
ຕີຜູ້ນ້ອຍ
ຮວາຍ! ປາຊິວກໍຍັງໄຂ່
ຊັ້ນຕີບ່ອນໃດ
ເຈົ້າຕີອ້າຍບ່ອນໃດ ?

ຫຼືວ່າ
ເຈົ້າຕັ້ງກຽດຊັງ
ຄິດຢາກຫາທາງ
ໄປມີຮັກໃໝ່
ຈຶ່ງຫາເຣື່ອງນັ້ນ
ເຣື່ອງນີ້ມາໃສ່
ຊັ້ນຍອດດວງໃຈ
ເຈົ້າຕີອ້າຍບ່ອນໃດ ?

ຕີບ່ອນໃດ ເຈົ້າຕີອ້າຍບ່ອນໃດ(ຊ້ຳ)
ຕີອ້າຍຈົນ ຊັ້ນເບາະລະຄົນດີ
ຕີອ້າຍບໍ່ມີ
ຖານະຍິ່ງໃຫຍ່
ຕີຂີ້ຮ້າຍ
ຮວາຍ ! ໃຜວ່າຫຼໍ່ໄດ້
ຊັ້ນຕີບ່ອນໃດ
ເຈົ້າຕີອ້າຍບ່ອນໃດ ?

ຫຼືວ່າ
ເຈົ້າໄດ້ໃໝ່ດີ
ທີ່ສົມກຽດສັກສີ
ເຈົ້າແລ້ວແກ້ວໃຈ
ນ້ອງຈຶ່ງບໍ່ເວົ້າ
ບໍ່ລືມອ້າຍໄດ້
ຊັ້ນຍອດດວງໃຈ
ເຈົ້າຕີອ້າຍບ່ອນໃດ ?

ຕີບ່ອນໃດ ເຈົ້າຕີອ້າຍບ່ອນໃດ(ຊ້ຳ)
ຕີອ້າຍຈ່ອຍຊັ້ນເບາະ ລະຄົນດີ
ຕີອ້າຍບໍ່ພິ
ແຂ່ງຂາບໍ່ໃຫຍ່
ຕີຜູ້ນ້ອຍ
ຮວາຍ! ປາຊິວກໍຍັງໄຂ່
ຊັ້ນຕີບ່ອນໃດ
ເຈົ້າຕີອ້າຍບ່ອນໃດ ?

ຫຼືວ່າ
ອ້າຍຢູ່ບ້ານນາ
ບໍ່ສົມສັກດາ
ນ້ອງແກ້ວແນວໃດ
ນ້ອງຈຶ່ງບໍ່ງໍ້
ບໍ່ຂໍສົນໃຈ
ຊັ້ນຍອດດວງໃຈ
ເຈົ້າຕີອ້າຍບ່ອນໃດ ?
ຕີບ່ອນໃດ
ເຈົ້າຕີອ້າຍບ່ອນໃດ ? ໆ ໆ

# ວອນຢ່າຊ້ຳ

ດວງໃຈດວງນີ້ ຄັ້ງນຶ່ງເຄີຍຊ້ຳ
ຖືກສອນຮັກທຳ ຮອຍຊ້ຳນັ້ນຍັງບໍ່ຫາຍ
ວອນນ້ອງຖນອນ ຢ່າຊ້ຳໃຫ້ຕາຍ
ຢ່າຊ້ຳໃຫ້ຕາຍ ໄດ້ໂປຣດກາຣຸນາ

ດວງໃຈດວງນີ້ ທີ່ມອບນາງນ້ອງ
ຊ່ວຍຄູ້ມຊ່ວຍຄອງ ວອນນ້ອງຈົ່ງຊ່ວຍຮັກສາ
ຢ່າຄິດຫຼອກລວງ ໃຫ້ຊ້ຳອຸຣາ
ຫວັງຄວາມເມດຕາ ຫວັງຄວາມເຫັນໃຈ

ຮັກໃຫ້ສເມີ ນະຈອມຂວັນ
ຮັກໃຫ້ນານໆ ຈວບວັນສຸດທ້າຍ
ຮັກດຽວນິຣັນ ຮັກຕລອດໄປ
ແມ່ນຈົນວັນຕາຍ ຢ່າປ່ຽນໃຈ ຢ່າຄາຍຮັກນັ້ນ

ດວງດຽວເທົ່ານີ້ ນ້ອງຢ່າສົງໃສ
ຊື່ວຟ້າມະລາຍ ໃຈອ້າຍໃຫ້ສັດປະກັນ
ພຽງນ້ອງຊື່ຕຣົງ ຮັກດຽວຄົງໝັ້ນ
ແມ່ນວນນິຣັນ ຮັກນັ້ນສິນປອງ.

# ເສັ້ງດາຍຮັກ

ເສັ້ງດາຍຮັກເອີຍ ຮັກເຄີຍຊື່ນຊູ
ນ້ອງເອງກໍຮູ້ ຍອດຊູ້ດວງໃຈ
ສອງເຮົາເຄີຍ ສັນຍາກັນໄວ້
ຈະບໍ່ພາກຈາກໄກ ຫົວໃຈມອບໄວ້ແກ່ກັນ

ເສັ້ງດາຍນ້ຳຄຳ ຮັກທຳຊ້ຳໃຈ
ນ້ອງມີຮັກໃໝ່ ຈິດໃຈແປຜັນ
ອ້າຍຕ້ອງເສົ້າ ຢູ່ທຸກຄືນວັນ
ເມື່ອມາພາກຈາກກັນ ຮັກນັ້ນປ່ຽນໄປແລ້ວເອີຍ

ນ້ອງນາງ ຊ່າງໃຈຮ້າຍ
ມາລືມໄດ້ ນ້ຳໃຈເຈົ້ານີ້ເອີຍ
ຄວາມຫວານຄວາມຊື່ນ ບໍ່ເຫຼືອເລີຍ
ຮັກເອີຍລືມໄດ້ ເພາະມີຊາຍໃໝ່ ເຊີຍຊົມ

ເສັ້ງດາຍຮັກເຮົາ ທີ່ເຝົ້າລໍຄອຍ
ເພາະບຸນອ້າຍນ້ອຍ ຮັກຈຶ່ງຂາດລອຍຕາມລົມ
ຫົວໃຈອ້າຍ ມີແຕ່ຂື່ນຂົມ
ສຸດຣະທົມໄຝ່ຫາ ຄິດມາເສັ້ງດາຍຮັກເອີຍ.

# ອ້າຍຍອມຫຼີກທາງ

ທີ່ຮັກ ອ້າຍຢາກໃຫ້ນ້ອງ ພົບຄວາມສນຸກ
ຮັກຢູ່ກັບອ້າຍ ນ້ອງໄຮ້ຄວາມສຸກ
ນ້ອງເສົ້າ ນ້ອງເຫງົາ ນ້ອງທຸກ
ເໝືອນຄົນ ປ່ອຍໃຈ

ທີ່ຮັກ ອ້າຍຢາກໃຫ້ນ້ອງ ພົບຄົນຮັກໃໝ່
ນ້ອງອາດຈະສູນ ສິ້ນຄວາມໝອງໄໝ້
ເມື່ອພົບ ຄົນທີ່ຖືກໃຈ
ພ້ອມທັງ ມັ່ງມີ

ອ້າຍຍອມຫຼີກທາງ ນ້ອງທັງນ້ຳຕາ
ອ້າຍຍອມສລະ ດ້ວຍຄວາມຫວັງດີ
ເພາະອ້າຍໝົດທາງ ຈະໃຫ້ນ້ອງນາງສຸກຂີ
ໝົດທາງຈະໃຫ້ນ້ອງມີ ຄວາມຊື່ນເໝືອນຄົນອື່ນໄດ້

ທີ່ຮັກ ອ້າຍຍາກຈົນໜັກ ພ້ອມຈະຮ້າງໄກ
ຂໍຢ່າໄປຄິດ ວ່າມີຮັກໃໝ່
ເພື່ອນ້ອງ ສົດຊື່ນແຈ່ມໃສ
ອ້າຍຍອມ ຫຼີກທາງ.

# ມົນຮັກສາວລ່ອງແຈ້ງ

ບຸນເຫຼືອ ເມື່ອນາ ເຫັນສາວລ່ອງແຈ້ງ
ກູເຢັ້ງກໍແຫງ ສາວລ່ອງແຈ້ງນີ້ແລ້ວໜັກໜາ
ໄອຍິງເກົາໂມງ ອາດອິງເໝືອນນຶ່ງດາຣາ
ແມ່ນຜູ້ໃດເດ່ສ້າງມາ ຫຼືເທວານັ້ນລົງມາປັ້ນ

ງານເຫຼືອ ເໜືອຊົນ ຊາດລາວທຸກເຜົ່າ
ເຖິງຢູ່ປ່າເຂົາ ຫາໃດເລົ່າຈະມາປຽບປານ
ໄດ້ມາຄັ້ງນຶ່ງ ຄິດເຖິງພາໃຫ້ອ້າຍຝັນ
ເມື່ອບຸນກິນຈຽງຄືນນັ້ນ ເຮົາຝາກສຳພັນຮັກກັນຍືນນານ

ທີ່ສົມພູໝອກ ນ້ອງບອກວ່າ ລູ່ກັບອ້າຍ
ລູ່ນີ້ຈົນຕາຍ ບໍ່ຖາຍເຖື່ອນຄຳສາບານ
ເຖິງອ້າຍໄກຈາກ ພາກນ້ອງຄືນສູ່ວຽງຈັນ
ອັນນຶ່ງອ້າຍຄິງກັບທັນ ມາຮັກກັນໄອຍິງເກົາໂມງ

ສາວເໜືອ ເມື່ອໄກ ໃຈອ້າຍເປັນຫ່ວງ
ຂໍເຈົ້າຢ່າລວງ ຢ່າລວງອ້າຍເສີຍອານົງ
ແມ່ນອ້າຍໄກຈາກ ຫຼືໃຈອ້າຍຍັງໝັ້ນຄົງ
ຈົ່ງຟັງສຽງເພັງຮ້ອງສົ່ງ ກູຢອນຢີງລ່ອງແຈ້ງບໍ່ອາຍ.

# ອ້າຍອາດມາຊ້າໄປ

ອ້າຍອາດ ມາຊ້າ ໄປແລ້ວນີ້
ຮືດີນ້ອງ ຄົງບໍ່ວ່າງພໍ ໃຫ້ຄອງ
ແຕ່ອ້າຍຈະຂໍ ອ້າຍຈະຂໍ ບອກກັບນ້ອງ
ວ່າໃຈອ້າຍປອງ ປະຄອງ ນ້ອງເຕັມອຸຣາ

ນ້ອງອາດ ບໍ່ຫຼຽວ ຟັງຮັກອ້າຍ
ສັນໃດອ້າຍ ຍັງຈະຕ້ອງ ຫວັງບໍ່ລະ
ຂໍພຽງແຕ່ນ້ອງ ພຽງແຕ່ນ້ອງ ເປີດອຸຣາ
ໃຫ້ຄຳສັນຍາ ວ່າຈະ ຮັກອ້າຍເໝືອນກັນ

ແມ່ນ ດວງໃຈ
ຈະຕ້ອງ ເກີດຄວາມໄຫວ ຫວັ່ນສັ່ນສະທ້ານ
ອ້າຍກໍຄົງ ຍອມທົນ ດ້ອຍໃຈແສນກັ້ນ
ທຸກຄືນວັນ ແສນປ່ຽວ ຮື ໆ ໆ

ອ້າຍອາດ ຈະຮັກນ້ອງ ໃຫ້ແໜ້ນ
ຫຼາຍແຟນແສນຄົນ ບໍ່ຕ້ອງການ ຈະຫຼຽວ
ຫາກນ້ອງເອີ່ຍຮັກ ອ້າຍຈະຮັກ ບໍ່ຄິດລ້ຽວ
ໝັ້ນໃນຮັກດຽວ ຂໍກ່ຽວ ຮັກນ້ອງເຖິງຕາຍ.

# ຟ້າເທົ່ານັ້ນ

ນີ ຟ້າເທົ່ານັ້ນ
ທີ່ຮູ້ທັນ ອ້າຍຮັກນ້ອງນາງພຽງໃດ
ຟ້າເທົ່ານັ້ນ ທີ່ຍັງເຫັນໃຈ
ທຸກຄືນແລະວັນຮ້ອງໄຫ້ ນ້ຳຕາໄຫຼນອງ

ພຽງ ຟ້າເທົ່ານັ້ນ
ທີ່ຮູ້ທັນ ຊີວັນອ້າຍຄືນອນນ້ອງ
ຟ້າເທົ່ານັ້ນ ແທງນຄໍຫຼ່ງອນອງ
ຮູ້ດີຣືທັຍທຸກຫ້ອງ ນີນ້ອງຕະລອດໄປ

ຟ້າເທົ່ານັ້ນ ຈະເຕືອນວ່າໃຜລືມກ່ອນ
ຟ້າເທົ່ານັ້ນ ຈະຫຼອນເມື່ອຕອນຮັກຄາຍ
ຟ້າເທົ່ານັ້ນ ທີ່ຈະເນດຕາເຫັນໃຈ
ໃຫ້ຮັກ ຢ່າຈາງ

ຍັງ ຟ້າເທົ່ານັ້ນ
ຜູກສຳພັນ ຮັກເຮົານີເຄີຍເຫີນຫ່າງ
ຟ້າເທົ່ານັ້ນ ເຝົ້າເຕືອນນີຈາງ
ສອງເຮົາພັກດີເໝືອນດັ່ງ ສັນຍາວ່າໄວ້.

# ເໝືອນຄືນມືກົມ

ເມກໝອກບັງຟ້າ ນະພາມືດມົວ
ທ້ອງຟ້າສລົວ ໃຈຂ້າມົວດັ່ງຟ້າ
ນ້ຳຝົນລິນຫຼັ່ງ ຫຼັ່ງເອີ່ລົ້ນທາຣາ
ດັ່ງເຊັ່ນນ້ຳຕາ ຫຼັ່ງມາຈາກຫົວໃຈ

ໄຮ້ເພື່ອນຊີວິດ ຊີດຽງງອຸຣາ
ນ້ອຍອາສນາ ໄຊກຊາຕາຂີດໄວ້
ຊູ້ເມີນໜີໜ້າ ສຸດກູ່ທາລ່ຳໄປ
ບາບເວນທົນໃດ ສ້າງໄວ້ຕານສນອງ

ແສນເສົ້າໃຈໜັກ ຮັກເອີຍເຄີຍຊື່ນໃຈ
ກັບມາສລາຍໄປ ຫົວໃຈຈຶ່ງໝົ່ນໝອງ
ຄົງເຫຼືອພຽງພົມ ພາບຮຽງຄຽງຄອງ
ເກາະກິນໃຈໝອງ ຣະທົມທຸກມາທີ

ຄິດຢາກຈະຕາຍ ເສັ່ງໃຫ້ພົ້ນກັມ
ໜີເອັ້ນຄວາມຊ້ຳ ພົ້ນກັມເວນທີ່ມີ
ແສນທົນທຸກຍິ່ງ ຂາດຍອດຍິ່ງປານີ
ຢາກຕາຍເຫຼືອດີ ຢາກໜີຈາກໂລກາ.

# ໄປໃສມາ ?

ໄປໃສມາ ?
ຈັນສຸຣິຍາ ຟ້າໃໝ່
ຄືນນີ້ໄປນອນ ຄ້າງຄືນຢູ່ໃສ ?
ບອກມາໄວ ໆ ໄວ ໆ ດຽວນີ້

ພໍ່ທູນຫົວ
ອ້າຍຫຼົງລືມຕົວ ແລ້ວນີ້
ຕິດໄພ້ຕິດຢາ ສຸຣານາຣີ
ອີກບໍ່ເຖິງປີ ຄົງຕິດກັນຊາ

ລືມແລງ ລືມງາຍ ລືມລູກລືມເມັຽ
ການງານກໍເສັຽ ຂາຍໜ້າ
ຍາມກິນຍາມນອນ ອ້າຍບໍ່ຫົວຊາ
ປ່ອຍພັລຍາ ນ້ອຍໃຈ

ບອກມາຊະ
ດຽວນີ້ອ້າຍມາ ແຕ່ໃສ ?
ນອນແລ້ງມາດິນ ນ້ອງທົນບໍ່ໄຫວ
ຫຼືວ່າເສືອກໄປ ນີ້ນ້ອຍອີກຄົນ.

# ໄປຖ້າຍມາ

ໄປຖ້າຍມາ
ຮັກສາ ຫາຄວາມປອດພັຍ
ບໍ່ໄດ້ໄປນອນ ຖ້າງຄືນຢູ່ໃສ
ອົດນອນສິຕາຍ ສິຕາຍເຕັມທີ

ແມ່ທູນຫົວ
ບໍ່ໄດ້ ເມົາມົວຫຼັງນີ້
ເຣື່ອງໄພ້ເຣື່ອງຢາ ສຸຣານາຣີ
ບໍ່ເຄີຍໃຍດີ ບໍ່ມີດອກໜາ

ເຮືອນຊານແລງງາຍ ທັງລູກທັງເມັຽ
ການງານບໍ່ເສັຽ ຫາວ່າ
ສັງສັນເພື່ອນມິດ ຈົນຜິດເວລາ
ບໍ່ລືມແກ້ວຕາ ແກ້ວໃຈ

ຟັງອ້າຍນະ
ດ່ຽວນີ້ ອ້າຍມາແຕ່ຖ້າຍ
ທັງຫິວທັງອິມ ມືດໜ້າຕາລາຍ
ຢ່າອຸ້ມຢ່າອາຍ ໄປໆ ໄປນອນ.

# ປາກລອງຮັກ

ປາກຈະລອງ ປາກຈະລອງຫຼິ້ນຮັກ
ປາກຮູ້ຄັກ ຮັກນັ້ນສັນໃດ
ບາງຄົນວ່າຮ້ອນ ເໝືອນແປວໄຟ
ແມ່ນຖືກຜູ້ໃດ ຮ້ອງໄຫ້ຮໍາພັນ

ປາກຈະລອງ ປາກລອງຫຼິ້ນໄຟ
ຖອດຫົວໃຈ ໄວ້ເປັນເດີມພັນ
ລຸຍກອງໄຟ ຮ້ອນຮຸ່ມສຸມຄວັນ
ບໍ່ເຄີຍຄິດຢ້ານ ຫວັ່ນໄຫວໄຟເຜົາວຸຣາ

ໂອ້... ຮັກ ຮັກ ຮັກ
ປາກຮູ້ຈັກ ຄວາມຮັກສຸດສເນ່ຫາ
ປຽບຮັກນັ້ນ ເໝືອນເກມກິລາ
ໄດ້ເສັຽບໍ່ວ່າ ກ້າຈິງຕ້ອງຊີງເອົາຊັຍ

ປາກຈະລອງ ປາກຈະລອງຍິ່ງໜັກ
ປາກຮູ້ຈັກ ຮ້ອນແຮງປານໃດ
ບາງຄົນວ່າຫວານ ຊຶ້ງຕຶງໃຈ
ຮັກຢູ່ຫົນໃດ ປາກລອງ ປາກຈະຫົດລອງ.

# ຮັກແອນ

ເໝືອນນຶ່ງນາງຟ້າ   ພະພິນສວັນ ສັນສ້າງ
ແອນງາມທຸກຢ່າງ   ທົ່ວສາຣາພາງນອກໃນ
ງາມພຽບພ້ອມ   ດ້ວຍກິຣິຍາອ່ອນໄຫວ
ແອນເອີຍເຈົ້າງາມຈັບໃຈ   ຫາຍິງໃດໜໍປຽບປານ

ໃຜຫາກໄດ້ເຫັນ   ຄືງເປັນບຸນເຫຼືອ ຫຼາຍຍິ່ງ
ດຸດເຫັນທຸກສິ່ງ   ດິນແດນແຄວ້ນເມືອງວິມານ
ລືມຊຸ່ມໝອງ   ຮືທັຍຕ້ອງຊຸ່ມຊື່ນບານ
ແອນເອີຍເຈົ້າງາມຕຣະການ   ດັ່ງຈັນແຂເດືອນທິກເພັງ

ແອນເອີຍ   ແອນເຄີຍຮັກໃຜຫຼືຍັງ ?
ຂ້າຂໍຝາກຝັງ   ຄວາມຫວັງມາພ້ອມສຽງເພັງ
ຮັກແອນແນ່ແລ້ວ   ແຮກວັນພົບໜ້າແອນເອງ
ທັ່ງໆທີ່ໃຈກົວເກງ   ແອນເຢີ້ຍປະມານຕົວຂ້າ

ແນ່ນແອນຈະຄິດ   ເມດຕາສົງສານຮັກນີ້
ຈະເອົາຮືດີ   ດວງດຽວນີ້ອຸທິດມາ
ພຽນຖນອມ   ຕູ້ນຕອນຮັກແອນໜັກໜາ
ຊົ່ວນິດນິຣັນຊົ່ວຟ້າ   ບໍ່ເລືອນຫຼົງລືມແອນເລີຍ
ແອນເອີຍ ແອນເອີຍ   ວ້ຽວແອນຢຽວລ້ຳ.

# ເຫັນພຽງສາຍຕາ

ອ້າຍຄົງບ້າ ບ້າຮັກເສັຽແລ້ວ
ຢາກເຫັນນ້ອງແກ້ວ ບໍ່ແລ້ວບໍ່ເລົ່າ
ຫົວໃຈອ້າຍຮ້ອນ ຮ້ອນດັ່ງໄຟເຜົາ
ທັງໆທີ່ເຮົາ ເຫັນກັນເກືອບທຸກວັນ

ອ້າຍຢາກເຫັນ ຈົນທົນບໍ່ໄຫວ
ຢາກເຫັນຈອນໃຈ ຈຶ່ງໄດ້ມາຜ່ານ
ເຫັນພຽງເຄຫາ ອ້າຍກໍ່ສຸກສັນ
ທຸກໆຄືນວັນ ໄຝ່ຝັນຢາກເຫັນນ້ອງນາງ

ຍາມຣາຕຣີ ມີແສງສວ່າງສ່ອງມາ
ງາມໜັກໜາ ສີຟ້າຫ້ອງນອນຂອງນາງ
ເຈົ້າຂອງຫ້ອງນອນ ຄົງຈະອ້າງອ້າງ
ຈຶ່ງຄອນຄາງ ຮ້ອງເພັງເສົ້າໂສກອອກມາ

ຫາກວັນໃດ ອ້າຍບໍ່ໄດ້ເຫັນ
ໃຈແທບກະເດັນ ເໝືອນເປັນຄົນບ້າ
ເຖິງນອນອ້າຍນີ້ ກໍບໍ່ຫຼັບຕາ
ເພາະຢາກເຫັນໜ້າ ແກ້ວຕາຂວັນໃຈຜູ້ດຽວ.

# ຄົງເຊໂດນ ທີ່ຮັກ

ຄົງເຊໂດນ ທີ່ຮັກ
ຂ້າຈຳໃຈຈາກ ເຈົ້າມາດ້ອຍກັນ
ຈາກພີ່ຈາກນ້ອງແລະເຮືອນນອນ ຈາກຖິ່ນດິນດອນທີ່ເຄີຍທຳ
ດ້ອຍໃຈສຸດຊ້ຳ ໂສກສັນ

ຄົງເຊໂດນ ເຈົ້າເອີຍ
ເຈົ້າເຄີຍໃຫ້ສຸກ ທຸກຄືນແລະວັນ
ຕ້ອງຈາກພາກໜີຫ່າງນາໄກ ໃຫ້ສຸດອາລັຍເຫຼືອລຳພັນ
ດວງໃຈໂສກສັນ ຮ່ຳຫາ

ລົມເອີຍເຈົ້າພັດ ທອບໄປທຸກທີ
ວານທອບອະຈີ ຂ້າໄປທີ່ໜາ
ໄປບອກຍາດມິດ ບິດອນນານດາ
ວ່າຂ້າຄອນຫາ ຄອນຫາທຸກວັນ

ຄົງເຊໂດນ ທີ່ຮັກ
ເຖິງຕົວຈະຈາກ ໃຈຂ້າຜູກພັນ
ບໍ່ລືມຖິ່ນຖານຄົງເຊໂດນ ຈະຢູ່ສຸກລົ້ນທີ່ໃດກັນ
ບໍ່ເໝືອນສວັນ ສວັນຄົງເຊໂດນ.

# ນ້ຳໃຈລາວ

ເມືອງລາວ ຂອງເຮົາແຕ່ເກົ່າກ່ອນ
ລາວຈະເຣີນຖາວອນ ຢູ່ເຢັນສຸກສັນ
ບໍ່ໄດ້ກໍ່ ເຣື່ອງຮາວ້າຟັນ (ຊ້ຳ)
ລາວເຮົາຜູກສຳພັນ ຮັກກັນຕລອດມາ

ຊົນຊາວລາວ ເປັນຄົນຮັກຊາດ
ນັກສງົບ ກຽດການສົງຄາມ
ລາວທັງເມືອງ ບໍ່ໄດ້ອ່ອນແອ (ຊ້ຳ)
ລາວພາກັນຍຶດໝັ້ນ ໃນສາມັກຄີ

ຖ້າຫາກມີ ສັດຕຣູຮຸກຮານ
ລ້ຳແດນເຂດບ້ານ ຢຽບຢ່ຳດິນລາວ
ຈະຂໍສູ້ ໃຫ້ຊາດຢູ່ຢືງ (ຊ້ຳ)
ໃຫ້ຊາດລາວໝັ້ນຄົງ ຖວາຍຊີວິປະກັນ

ລາວເປັນມິດ ກັບທຸກຄົນເພື່ອນບ້ານ
ລາວບໍ່ໄດ້ຮຸກຮານ ຫັກຫານແດນໃຜ
ລາວເຮົາຢູ່ ດ້ວຍສິດເສຣີ (ຊ້ຳ)
ບໍ່ແຊກແຊງຮາວີ ເປັນມິດໄມຕຣີຜູກພັນ

ເຊີນຊາວລາວ ຈົ່ງມາຮ່ວມໃຈ
ຮັກສາໄວ້ ຊຶ່ງຮັຖທັມມະນູນ
ມາເຮົາມາ ເຊີນເຖີດຊາວລາວ (ຊ້ຳ)
ສາມັກຄີຍືນຍາວ ສ້າງເມືອງລາວສືບໄປ

ເປັນແບບຢ່າງ ແກ່ຄົນຮູ່ນໃໝ່
ຄວາມໝັ້ນຄົງຈະໄດ້ ຢູ່ຢັ້ງຍືນຍົງ
ຮັກສາຊາດ ສາມາດເຂັ້ມແຂງ
ເໝືອນທຸງຊາດສີແດງ ແພງໄວ້ໃຫ້ລາວຈະເຣີນ.

# ກັບມາຮັກກັນໃຫມ່ເຖີດທີ່ຮັກ

ເມື່ອວາໂຍ　　ໂຊຍຜ່ານມາ
ຍິ່ງໂນ້ມໃຈ　　ໃຫ້ຮຽກຫາ ແຕ່ນ້ອງ
ສຸດໝາຍປອງ　　ນ້ອງຢູ່ໃສ ?
ຢູ່ໃສ　　ລີ້ຢູ່ໃສ ?

ຍິ່ງຄິດໄປ　　ໃຈໂສກສົນ
ເມື່ອສຳພັນ　　ມາຈືດຈາງ ຫ່າງຫາຍ
ສຸດສາຍໃຈ　　ແລ້ວເມື່ອໃດ
ເມື່ອໃດ　　ນ້ອງຈະໃຫ້ຄວາມຝັນ ?

ກັບມາເຖີດທີ່ຮັກ　　ຄືນຮັກກັນໃໝ່
ເຣື່ອງແລ້ວໄປ　　ເປັນພຽງຄວາມຫຼັງ
ອ້າຍນີ້ຍັງ
ຍັງຮັກນ້ອງ　　ຢ່າງເຄີຍມີ

ຫາກເມື່ອໃດ　　ນ້ອງກັບຫັນ
ຜູກສຳພັນ　　ໝັ້ນດັ່ງເຄີຍ
ອ້າຍນີ້　　ຈະຂໍມີ ມີແຕ່ຮັກ
ຖະນອມ　　ນ້ອງບໍ່ໃຫ້ເສົ້າໝອງ.

# ເຫັນໃຈສາວແມ່ຮ້າງ

ຄົນເຂົາຊ່າ ວ່ານ້ອງເປັນແມ່ຮ້າງ
ຍິ່ງຟັງຍິ່ງສົງສານນາງ ແມ່ຮ້າງເອີຍຢ່ານ້ອຍໃຈ
ຢ່າຄ່ຳຄວນ ຫຼືໂຮຍຫວນຮ້ອງໄຫ້
ເຖິງຜົວເຈົ້າປະລະໄປ ຢ່າເສັຽໃຈຫາໃໝ່ຍັງມີ

ອ້າຍຍັງຢູ່ ຮູ້ແກ່ໃຈເຖີດນ້ອງ
ອ້າຍເອງຈະຂໍປະຄອງ ລູກສອງອ້າຍກໍຍິນດີ
ຈະລ້ຽງດູແລະອູ້ມຊູເຕັມທີ່ ຈະເປັນຜົວໃໝ່ທີ່ດີ
ຈະເປັນສາມີ ທີ່ດີຂອງເມັຽ

ເຊັດນ້ຳຕາ ເຖີດໜາຢ່າມົວຮ້ອງໄຫ້
ນັບຕັ້ງແຕ່ນີ້ຕໍ່ໄປ ອ້າຍຈະບໍ່ປະໃຫ້ນ້ອງອ່ອນເພັຽ
ຈະຊ່ວຍລ້ຽງລູກ ປູກຝັງຜັກມັນຄອັດເຊັ້ຽ
ຈະຫາລ້ຽງລູກແລະເມັຽ ບໍ່ເສັຽດາຍແມ່ນແຕ່ຊີວາ

ຄົນເຂົາຊ່າ ວ່ານ້ອງເປັນແມ່ຮ້າງ
ກໍຊ່າງເຖີດໜານ້ອງນາງ ແມ່ຮ້າງກໍຊ່າງເຖີດໜາ
ຢ່ານ້ອຍໃຈ ເຖິງຜູ້ໃດເຂົາວ່າ
ແມ່ຮ້າງບໍ່ສິ້ນຣາຄາ ນັກຮ້ອງບ້ານນາຄົນນີ້ເຫັນໃຈ.

# ຍັງຮັກນ້ອງຢູ່

ບໍ່ເຄີຍ ບໍ່ເຄີຍ　　ຮັກໃຜເທົ່ານາງ
ບໍ່ເຄີຍຫາທາງ　　ເໝີນໝາງເຈົ້າເລີຍ
ອ້າຍຍັງຮັກດ່ຽວ　　ໃຈດ່ຽວເໝືອນເຄີຍ
ຢ່າຟັງຄົນເຍີ້ຍ　　ເອີ່ຍສິນນິນທາ

ບໍ່ເຄີຍ ບໍ່ເຄີຍ　　ຄິດລອງລໍ້ກັນ
ບໍ່ເຄີຍເຫຫັນ　　ສາບານສັນຍາ
ອ້າຍພຽນໄຫວ້ອອນ　　ຢູ່ທຸກເວລາ
ຢາກໃຫ້ດິນຟ້າ　　ຊ່ວຍເປັນພະຍານ

ຍັງຮັກ ຍັງຮັກ　　ຍັງຮັກນ້ອງຢູ່
ຄິດເຫັນຍອດຊູ້　　ຢູ່ທຸກຄືນວັນ
ຢາກໃຫ້ຄວາມຈິງ　　ເໝືອນດັ່ງຄວາມຝັນ
ຢາກໃຫ້ວິມານ　　ຮັກເຮົາສິນປອງ

ບໍ່ເຄີຍ ບໍ່ເຄີຍ　　ຫຼິງຕົວຫຼິງໃຈ
ບໍ່ເຄີຍຄິດໄປ　　ໜີໂກເນື້ອທອງ
ອ້າຍຍັງຊື່ຕຣົງ　　ບໍ່ຫຼົງລືມນ້ອງ
ຢາກເປັນເຈົ້າຂອງ　　ຢາກຄອງຄູ່ນາງ.